# ລາວຮ່ວມສັມພັນ

ຖິ່ນຖານບ້ານເກີດຂອງເຮົາ  ມີແຕ່ພູເຂົາ  ເຫຼົ່າປ່າຜາດົງ
ພົງໄພອັນໃຫຍ່ແລະກວ້າງ  ເໝືອຍໝີໝູ່ກວາງ  ລ່ວງຕາມແດນເຊ
ເຊົ້າເຢັນເຮົາແລເຫັນໄມ້  ໝອກມົວກົ້ວໃບ  ແສງໃສສ່ອງມາ
ແຂກເຂົາກາເວົາຂັນຮ້ອງ  ຟັງສຽງນ້ຳນອງ  ໂຕນຕາດຕີນຜາ
ອາບເຫຼື້ມເຢັນໃຈຫາຍຮ້ອນ  ຫາຍຊວງອຸທອນ  ພັກຜ່ອນກາຍາ

ບ້ານເຮົາກໍເປັນເຊັ່ນນີ້  ທົ່ງກວ້າງຂວາງດີ  ສຸດສິ້ນຊົ່ວຕາ
ນີ້ນ່ວງດວງດອກນາຣີ  ບານຈໍ່ຈູມຈີ  ມີໝາກໜັກໜາ
ພ້າວຕານຫວານຜູຜາງສິ້ນ  ເກີນແສນອຸດົມ  ທັງເຂົ້າແລະປາ
ບ່າວສາວທັງພວກຊາວບ້ານ  ຍຸທາງທຳງານ  ຊື່ນບານອຸຣາ

ແດນຍາວຍືດຍາວຄາວໄກ  ມີຊື່ລືໄວ້  ລ້ານຊ້າງເດີມມາ
ຢູ່ເໜືອຫຼືວ່າຢູ່ໄຕ້  ບໍ່ແມ່ນອື່ນໄກ  ລ້ວນແຕ່ຄົນລາວ
ພີ່ນ້ອງປົກປ້ອງກັນມາ  ຢ່າຕີຢ່າວ່າ  ລາວເໜືອລາວໄຕ້
ຄົນໃດໄດ້ດີມີສຸກ  ຊ່ວຍຊູຜູ້ທຸກ  ກັງວົນສົນໃຈ
ເລືອດເນື້ອເຊື້ອແນວແຖວພັນ  ເຮົາຕ້ອງຮັກກັນ  ຈົນສິ້ນຊີວາ

ເພື່ອນເອີຍ ຮີບມາດ້ວຍກັນ  ມາຮ່ວມສັນພັນ  ທັງແຮງທັງໃຈ
ໄວໆ ຮີບມາດ້ວຍກັນ  ມາຮ່ວມປ້ອງກັນ  ເລືອດເນື້ອເຊື້ອລາວ
ໄວໆ ຮີບຮູ້ສຶກໃຈ  ຊ່ວຍຣະວັງພັຍ  ໃຫ້ລາວຍືນຍົງ
ປົງຈິດຊີວິດແລະກາຍ  ເປັນລູກຜູ້ຊາຍ  ຍອມຕາຍເພື່ອຊາດ
ເລືອດຢາດເພື່ອຊາດພຽງໃດ  ພາລະຈະໃຫຍ່  ຊັຍຊາດຈະຍາວ

# ໑ ເມືອງລາວແຕ່ເກົ່າກ່ອນ

| | |
|---|---|
| ເມືອງລາວ | ຂອງເຮົາແຕ່ເກົ່າກ່ອນ |
| ລາວຈະເຣີນຖາວອນ | ຢູ່ເຢັນສຸກສັນ |
| ບໍ່ໄດ້ກໍ່ | ເຣື່ອງຣາວຂ້າຟັນ (ຊໍ້າ) |
| ລາວເຮົາຜູກສຳພັນ | ຮັກກັນຕະລອດມາ |
| | |
| ຊົນຊາວລາວ | ເປັນຄົນຮັກຊາດ |
| ນັກສງົບ | ກຽດຊັງສົງຄາມ |
| ລາວທັງເມືອງ | ບໍ່ໄດ້ອ່ອນແອ (ຊໍ້າ) |
| ລາວພາກັນຍຶດໝັ້ນ | ໃນສາມັກຄີ |
| | |
| ຖ້າຫາກມີ | ສັດຕຣູຮຸກຣານ |
| ກອນເຂດແຄວ້ນດິນບ້ານ | ຢຽບຢ່ຳທຳລາຍ |
| ຈະຂໍສູ້ | ໃຫ້ຊາດຍືນຍົງ (ຊໍ້າ) |
| ໃຫ້ຊາດລາວໝັ້ນຄົງ | ຖວາຍຊີວິປະກັນ |
| | |
| ລາວເປັນມິດ | ກັບທຸກຄົນເພື່ອນບ້ານ |
| ລາວບໍ່ໄດ້ຮຸກຣານ | ທັກທານແດນໃຜ |
| ລາວເຮົາຢູ່ | ດ້ວຍສິດເສຣີ ( ຊໍ້າ) |
| ບໍ່ແຊກແຊງຣາວີ | ເປັນມິດໄມຕຣີຕໍ່ກັນ |
| | |
| ເຊີນຊາວລາວ | ຮີບມາຮ່ວມໃຈ |
| ຮັກສາໄວ້ | ຊຶ່ງຮັຖທັມມະນູນ |
| ມາເຮົາມາ | ເຊີນເຖີດຊາວລາວ (ຊໍ້າ) |
| ສາມັກຄີຍືດຍາວ | ສ້າງບ້ານເມືອງໃຫ້ຢູ່ໄປ |
| | |
| ເປັນແບບຢ່າງ | ແກ່ຄົນລຸ້ນໃໝ່ |
| ຄວາມໝັ້ນຄົງຈະໄດ້ | ຢູ່ຢັ້ງຍືນຍົງ |
| ຮັກສາຊາດ | ສາມາດເຂັ້ມແຂງ (ຊໍ້າ) |
| ເໝືອນທຸງຊາດສີແດງ | ຊົງໄວ້ໃຫ້ລາວຈະເຣີນ. |

# ຖິ່ນແກ້ວ

ຖານຖິ່ນ ດິນຖິ່ນແກ້ວ
ເຫັນແລ້ວ ອຸດົມສົມບູນ
ສາວງາມ ກຳລັງວັຍລຸ້ນ (ຊ້ຳ)
ຢາກໄດ້ເດ່ອຸ່ນ ຜູ້ງາມເດ່ງາມເດ່

ຄື້ວຕໍ່ ຄໍກໍກົມ
ງາມສົມ ວາຮົມໂກເກ
ອ້າຍມາເຫັນ ຫົວໃຈຈົມເຫວ່ (ຊ້ຳ)
ຮັກອ້າຍບໍ່ເດ່ ? ຂົນຕາງອນຕາງອນ

ຍີ້ມ ນ້ອງນິສເນ່
ງາມເດ່ ແຂນເປອໍຣະຊອນ
ອ້າຍຂໍຮັກ ແດ່ເດີຂວັນອ່ອນ (ຊ້ຳ)
ຖ້າໄດ້ກອດນອນ ຄົງສົມໃຈສົມໃຈ

ອ້າຍນີ້ ຈາກວຽງມາ
ຕັ້ງໜ້າ ມາຫາຊານວັຍ
ນ້ອງສາວ ຊາວດົງພົງພັຍ (ຊ້ຳ)
ເຖິງອ້າຍຢູ່ໄກ ຍັງອາລັຍອາວອນ.

# ມີຄູ່ເສັ່ງເຖີດ

ມີຄູ່ເສັ່ງເຖີດ ນ້ອງສາວ
ເດືອນແລະດາວ ນ້ອງສາວຢ່າຝັນໄຝ່
ມີຄູ່ເສັ່ງເຖີດ ຍອດດວງໃຈ
ນອນດ່ຽວຢູ່ໄດ້ ຂວັນໃຈຈະແກ່ຕາຍ

ມີຄູ່ເສັ່ງເຖີດ ນອນນ້ອງ
ຈະຈັບຈອງ ນັກຮ້ອງກໍຍັງໄດ້
ຍັງບໍ່ມີ ຍິ່ງທີ່ເຂົາສົນໃຈ
ແຕ່ນ້ອຍຈົນໃຫຍ່ ຫ້ອງຫົວໃຈຍັງຫວ້າງນາ

ນອນຢູ່ດ່ຽວ ປ່ຽວໃຈ
ຫາສິ່ງໃດ ມັນຈະສຸກວຸຣາ
ຫາຄູ່ຄຽງ ມາແນບເນື້ອກາຍາ
ກັນໜາວດີກວ່າ ຜ້າຫົ່ມຕັ້ງຮ້ອຍຜືນ

ມີຄູ່ເສັ່ງເຖີດ ຄົນດີ
ໜ້າໜາວນີ້ ເໝືອນກັບມີເງິນໝື່ນ
ຫາກມີຄູ່ ຄຽງຢູ່ຍາມຄ່ຳຄືນ
ຮັກຄົງຫວານຊື່ນ ໜາວຄ່ຳຄືນຄົງອຸ່ນສບາຍ.

໒໒

# ສອຍແທນອງສາວ

ສອຍແທ້ນ້ອງສາວ ຜິວຂາວເໝືອນດັ່ງນາງຟ້າ
ປານເທບທິດາ ລົງມາຈາກສວັນ
ຄື້ອນ້ອງກິ່ງ ດັ່ງອິງພະຈັນ
ຄຳເກົ້າເປັນຊັ້ນ ທານ້ຳມັນຢ່າງດີ

ສອຍແທ້ນ້ອງສາວ ສາວເຈົ້າມີຄູ່ຫຼືຍັງ ?
ຫຼືຫົວໃຈວ້າງ ເຫີນຫ່າງຄູ່ຊີວີ ?
ອ້າຍຂໍຈອງ ໝາຍປອງພັກດີ
ອ້າຍຮັກເຈົ້າອີຫຼີ ບໍ່ມີແໜງໜ່າຍຄືນງາມ

ເຊື່ອອ້າຍເຖີດໜາ ໂອຂວັນຕາເຈົ້າຢ່າໄດ້ໄຫວຫວັ່ນ
ຈະເອົາໃບພັນ ມາໝັ້ນເຈົ້າໄວ້
ບໍຣິສັດ ສາຣະພັດນ້ອຍໃຫຍ່
ມັນເປັນຂອງອ້າຍ ຈະມອບໃຫ້ແກ້ວຕາ

ສອຍແທ້ນ້ອງສາວ ສາວເຈົ້າແມ່ນລູກໃຜໜໍ ?
ຈະມາສູ່ຂໍ ຂໍພໍ່ແມ່ລຸງຕາ
ເປັນຈັ່ງໃດ ໄປຣດກະຣຸນາ
ເອົາກັນກ່ອນດີກວ່າ ປີໜ້າຈຶ່ງແຕ່ງງານ.

# ລົມໜາວ

ລົມໜາວ ກຳລັງພັດໄຊຍເຂົ້າມາ
ເໝືອນດັ່ງເຕືອນວ່າ ໃຫ້ຫາຜູ້ເຊີຍພີຣົມ
ອ້າຍກອດໝອນໜາວ ຢາກໄດ້ສາວໄວ້ກອດເຊີຍຊົມ
ແມ່ນໄດ້ຜ້າຫົ່ມ ເປັນຮ້ອຍໜາວກໍບໍ່ຫາຍ

ໜ້າໜາວ ປີນີ້ຮືດີອ້າຍເຫງົາ
ຄິດເຖິງສາວເຈົ້າ ກ່ອນເຮົາໄດ້ເຄີຍຊື່ນໃຈ
ເມື່ອອອກພັນສາ ສັນຍາກັນວ່າຢ່າງໃດ ?
ໂດຍອດຂວັນໃຈ ປ່ອຍອ້າຍຕ້ອງນອນໜາວຕາຍ

ໜ້າໜາວ ປີນີ້ໜາວຈົນກະດ້າງ
ພັດນ້ອງຄຽງຂ້າງ ຕ້ອງນອນຝັນຄ້າງດຽວດາຍ
ມັນໜາວເຫຼືອລົ້ນ ໜາວຈົນຈະຂາດໃຈຕາຍ
ໜາວຈິດໜາວໃຈ ຈະຕາຍເພາະຂາດຄົນຄອງ

ອ້າຍໜາວ ນ້ອງສາວໄດ້ຍິນບໍ່ນໍ ?
ອ້າຍຫວັງຕັ້ງຕໍ່ ຈະມາສູ່ຂໍແນບຄອງ
ຮີບຕັດສິນໃຈ ຮັບອ້າຍໄວ້ເປັນເຈົ້າຂອງ
ແລ້ວຈະສິ້ນປອງ ຫາກນ້ອງຕົກລົງປົງໃຈ.

# ຫຼົງຮັກນ້ອງເມັຽ

ອຸກໃຈອຸກໃຈ ຊ້ຳໃຈຍິ່ງໜັກ
ແສນອຸກເອົາຄັກ ນ້ອງເມັຽຊິເອົາຜົວ
ອຸກຮ້ອນຊຸ່ມໃນ ເໝືອນໄຟສຸມຊີວະ
ອົກຕຣົມໝອງມົວ ນ້ຳຕາຕົກລິນ

ປຽບດັ່ງນົກແດງ ຝັງແຝງໝາກນ່ອງ
ຂ້າເຈັບປອດຊອງ ເຂົາແນ້ນໄປກິນ
ອາສນາອ້າຍເຂີຍ ນີ້ມັນໝົດສິ້ນ
ໄດ້ແຕ່ຖອີນ ດົນດອນກິ່ນຫອມນ້ອງເມັຽ

ໂອຍ ອູ້ມຊູແຕ່ຍັງນ້ອຍໆ
ລ້ຽງຕ້ອຍ ບໍ່ໃຫ້ໃຜມາກຸກກອນ
ນ້ອຍດຽວ ອ້າຍເຂີຍບໍ່ເຄີຍລານລອນ
ເສັຽດາຍນ້ອງນອນ ເຄີຍຊີ້ເຄີຍຊອນເບິ່ງໂຕກັບແກ້

ອຸກໃຈຍິ່ງໜັກ ຫຼົງຮັກນ້ອງເມັຽ
ດັ່ງຖືກຢາເບັຽ ຄືງຕາຍແນ່ແທ້
ອ້າຍເຂີຍສິ້ນລາຍ ລີ້ນຫງາຍນອນແຜ່
ຕ້ອງໝົດທາງແນ່ ໝົດໄດ້ເປັນນ້ອງເຂີຍເມັຽ.

# ຄົນງາມໃຈແຫຼ້

ຄົນງາມໆ ເປັນຫຍັງໃຈດຳໃຈແຫຼ້
ງາມຂຳງາມແທ້ ໃຈນັ້ນແຫຼ້ປານກາ
ສຽງປາກກໍຫວານ ປານນ້ຳເຜິ້ງເມື່ອຍາມເດືອນຫ້າ
ບໍ່ໜ້າບໍ່ໜ້າ ບໍ່ໜ້າເປັນຄົນໃຈດຳ

ຄົນຈົບດີ ເປັນຫຍັງມັກມີຫຼາຍໃຈ ?
ຫຼອກໄດ້ຫຼອກໄປ ອ້າຍຂໍຈື່ຂໍຈຳ
ຫ່ຽວເອົາຄວາມງາມ ຫຼອກຜູ້ຊາຍໃຫ້ເຈັບໃຫ້ຊ້ຳ
ຈະຈື່ຈະຈຳ ຄົນງາມເຊື່ອໃຈບໍ່ໄດ້

ໄປນຳຄົນອື່ນ ອ້າຍແສບທ້ອໃຈຈຽນຕາຍ
ຕ່ຳຕາຕ່ຳໃຈ ເຫັນອ້າຍເປັນຄົນຈັ່ງໃດ ?
ເມື່ອຍາມຮັກກັນ ບອກອ້າຍນີ້ວ່າດີກວ່າໃຜ
ໄດ້ພົບຄົນໃໝ່ ຮັ່ງມີກໍລືມອ້າຍໄປ

ຄົນງາມໆ ເປັນຫຍັງໃຈດຳໃຈແຫຼ້
ໃຈອ້າຍເຈັບແທ້ ຍ້ອນເຊື່ອອີກເຊື່ອໃຈ
ອ້າຍເປັນຄົນຈົນ ໄປໃຫ້ພົ້ນໄປມີແຟນໃໝ່
ຫຼີກທາງໃຫ້ໄປ ຍອມແລ້ວຄົນງາມໃຈແຫຼ້.

# ສາວບ້ານເກີນ

ເມື່ອອ້າຍໄດ້ມາ ມາພົບສາວແຕ່ພຽງຄັ້ງດຽວ
ຫົວໃຈອ້າຍນີ້ຢາກຍຶດໜຽວ ຫາຈົນຫຼົງກ້ຽວໆສາວບ້ານເກີນ
ເຈົ້າຊ່າງງາມຍິ່ງ ຄິດຢາກແອບອີງນ້ອງນາງຢ່າເມີນ
ອ້າຍຂໍບອກສາວຈິ່ງເຫັນໃຈອ້າຍເຖີ້ນຜູ້ທີ່ຫຼົງເດີນພັດຖິ່ນບ້ານມາ

ອ້າຍໄດ້ຍິນຄຳ ຄຳວ່າຮັກມາຈາກຊານອັຍ
ຄຳເອົ້າສາວອ້າຍຊ່າງຫຼົງໄຫຼ ຊາບຊຶ້ງຫົວໃຈເຂົ້າດວງອຸຣາ
ຈະເໝືອນຄຳເອົ້າ ທີ່ອ້າຍແລະສາວເຄີຍເອົ້າກັນມາ
ຢ່າລວງໃຫ້ອ້າຍນີ້ເສັຽນ້ຳຕາເໝືອນນ້ຳຖ້ວມມາຂອງອ້າຍລົ້ນຈົນ

ນ້ອງຂວັນຕາເຈົ້າຈົ່ງສົງສານ ຖ້ານ້ອງເຫັນໃຈອ້າຍນັ້ນ
ຈະເອົາຈອມຂວັນ ບໍ່ໃຫ້ໂສກຕຣົມ
ປີໜ້າຕໍ່ໄປ ຈະປູກເຂົ້າໄຮ່ເຂົ້ານາໃຫ້ສົມ
ຫາກແມ່ນດິນຟ້າໃຫ້ຄວາມອຸດົມຈະຂໍພິຣົມໃຫ້ສົມຮັ່ງມີ

ອ້າຍຈະຂໍຈຳ ດິນແຫ່ງນັ້ນທີ່ເຄີຍມາຢູ່
ກັບຄວາມຮັກທີ່ນ້ອງສົມສູ່ ດິນຟ້າຈົ່ງຮູ້ໄວ້ເປັນສັກຂີ
ເຖິງຢູ່ໄກກັນ ຫົວໃຈອ້າຍນັ້ນບໍ່ຄາຍໜ່າຍໜີ
ອີກປີໜ້າຈະມາອີກທີ ສູ່ຂໍຄົນດີສາວບ້ານເກີນ.

# ແຄນໃຜນໍ ?

ໄດ້ຍິນສຽງແຄນ ມາຈາກແດນໄກ
ສຽງແຄນນັ້ນດັ່ງກ່ອນໃຫ້ ເໝືອນດັ່ງໃຈຂອງຄົນສະອື້ນ
ເປົ່າຕາມລົມໜາວ ສຽງແວ່ວວາວມາທຸກໆຄືນ
ສຳນຽງສຽງຄົນສະອື້ນ ຕ້ອງຕື່ນມາຕາມສຽງແຄນ

ໄດ້ຟັງສຽງແຄນ ແລ້ວເສົ້າໜັກໜາ
ດັ່ງສຽງເໝືອນຢົດນ້ຳຕາ ຈາກອຸຣາຂອງຄົນເຈັບແຄ້ນ
ບອກໃຫ້ຜິດຫວັງ ຫຼືງພະວັງຢາກຟັງສຽງແຄນ
ຄົງຊ້ຳມາຈາກຕ່າງແດນ ເຈົ້າຂອງສຽງແຄນຄົງຫຼັ່ງນ້ຳຕາ

ແຄນຜູ້ໃດ ? ຊ່າງມາຄ່ຳຄອນຊອນເສົ້າ
ຢາກຮູ້ຫົວໃຈຄົນເປົ່າ ຕົວເຈົ້າຄົງແສບອຸຣາ
ຢາກຮູ້ເຈົ້າຂອງ ຂາດຄູ່ຄອງຫຼືພາກກັນມາ
ຫຼືຄົນຮັກໜີໜ້າ ຈຶ່ງເປົ່າແຄນມາທຸກວັນຄືນ

ນ້ອງຍັງສິນເທ ຜູ້ເປັນໝໍແຄນ
ສົ່ງໃສຫ່ວງໄປຫົວແດນ ເລາະເປົ່າແຄນຫາລວງຍິງອື່ນ
ຢາກຮູ້ໜັກໜາ ເຫດໃດມາເປົ່າແຄນທຸກຄືນ
ແທ້ຫຼືທີ່ອ້າຍສະອື້ນ ? ຫຼືແກ້ງມາຢືນເປົ່າແຄນໃຫ້ຟັງ.

# ສຽງແຄນ

ສຽງແຄນ ເຂົາເປົ່າອອດອ້ອນ
ຂ້ອຍນອນ ແລ້ວຫຼັບບໍ່ລົງ
ເປົ່າແລ້ວເປົ່າ ຄຶດເຖິງເຈົ້າບໍ່ລືມບໍ່ຫຼົງ
ປານນີ້ຄົງ ນີຄູ່ຫຼືຍັງ

ໄດ້ຍິນ ສຽງແຄນນີ້ບໍ່ ?
ເມື່ອກ່ອນ ນັ້ນເຈົ້າເຄີຍຟັງ
ຕະແລແລ້ນຕະແລ ຄຶດເຖິງແຕ່ເຈົ້າປາງຄາວຫຼັງ
ປານນີ້ຍັງ ຄຶດເຖິງອ້າຍຢູ່ບໍ່ນໍ ?

ແນ່ນໃຈ ນ້ອງຍັງຊື່ຕຣົງ
ໝັ້ນຄົງ ທີ່ຕັ້ງໃຈລໍ
ບໍ່ຜັນແປ ຈະຫາເຖົ້າແກ່ເພິ່ນໄປສູ່ຂໍ
ໄປຢູ່ເຮືອນຫໍ ວິມານຂອງເຮົາ.

# ໃຈຫນໍໃຈ

ໃຈໜໍໃຈ
ເຫດອັນໃດ　　　　ນ້ອງຈຶ່ງມາປ່ຽນ
ໃຈ　　　　　　　ໝູນວຽນ
ເໝືອນດັ່ງກົງກວຽນ　　ທີ່ໝູນຕາມທາງ

ຄັ້ງແຮກນ້ອງບອກວ່າຮັກ　　ອ້າຍຫຼົງສມັກເຝົ້າຮັກເຝົ້າຫວັງ
ປັກຈິດໄວ້ພຽງນ້ອງ　　ໄດ້ແຕ່ໝາຍປອງນ້ອງມາຄຽງຂ້າງ
ຍາມນອນອ້າຍຝັນເຫັນເຈົ້າ　　ຢີກຢອກເຢົ້າຊື່ນຊົມທຸກຢ່າງ
ຕື່ນແລ້ວເລີຍບໍ່ມີນາງ　　ພຽງຝັນຄ້າງໂອ້ຍເຈັບດວງໃຈ

ໃຈໜໍໃຈ
ເຫດອັນໃດ　　　　ນ້ອງຈຶ່ງມາປ່ຽນ
ໃຈ　　　　　　　ໝູນວຽນ
ເໝືອນດັ່ງກົງກວຽນ　　ທີ່ໝູນຕາມທາງ

ຮັກແທ້ນ້ອງບອກຊອກຫາ　　ຜູ້ໃຫຍ່ມາຂໍຕາມແນວທາງ
ປີນັ້ນອ້າຍສູ່ຂໍ　　ນ້ອງກໍບອກໃຫ້ລໍແລ້ວຕຽມທຸກຢ່າງ
ອ້າຍເອງກໍຕຽມເຕັມທີ່　　ແຕ່ເອນນີຕ້ອງໜີໄກຫ່າງ
ປີນີ້ອ້າຍມາພົບນາງ　　ອຸ໋ຍນ້ອງຊ່າງຕຸ້ຍກາງແທ້ເອີຍ.

# ຍິ້ມສເມີ

ຍິ້ມສເມີ ເມື່ອເຫັນນ້ອງມີຮັກໃໝ່
ຍິ້ມສເມີ ຍິ້ມສົ່ງດ້ວຍໃຈຮັກດຽວ
ອ້າຍຍິ້ມສເມີ ເມື່ອເຫັນນ້ອງນາງສຸກຂີ
ເມື່ອເຫັນເທອີ ສຸກຂີກັບຄົນຮັກໃໝ່

ຍິ້ມສເມີ ເມື່ອນ້ອງລືມອ້າຍໄດ້ລົງ
ຍິ້ມສເມີ ຍິ້ມບິ່ງເຖິງຄວາມຊ້ຳໃຈ
ອ້າຍຍິ້ມສເມີ ຍິ້ມກັ້ນນ້ຳຕາເອົາໄວ້
ຍິ້ມຢ່າງຈິນໃຈ ສຸດອາລັຍໃນອາສນາ

ຝືນຍິ້ມ ຢູ່ທຸກທີ
ທັ້ງທີ່ອ້າຍນີ້ ແສນປວດອຸຣາ
ຍິ້ມເພື່ອນ້ອງ ສລອງສາວແບບເງິນຕຣາ
ອ້າຍຍິ້ມເຢີ້ຍຟ້າ ເມື່ອເຫັນຮັກນາຫນີໄກ

ຍິ້ມສເມີ ອ້າຍຍິ້ມເພື່ອນ້ອງນາງດຽວ
ຍິ້ມສເມີ ຍິ້ມປ່ຽວຂາດຄົນສົນໃຈ
ອ້າຍຍິ້ມສເມີ ຝືນຍິ້ມເມື່ອຕົນປຣາຊັຍ
ຍິ້ມຢ່າງຈິນໃຈ ເພາະນາງລືມໄດ້ລົງຄໍ.

# ສັນຕິພາບຢູ່ໃສ ?

ສັນຕິພາບ ຢູ່ໃສ ?
ຢູ່ທີ່ຫົວໃຈ ປາຍປືນຫຼືເທິງກະດາດ
ບ້ານເມືອງເຮືອນຊານ ທະຫານຂອງຊາດ
ພົບແຕ່ຄວາມພິນາດ ປະຫັດປະຫານຊີງຊັຍ

ໂລກເຂົາລືຊາ ລາວເຮົາກໍເຫັນ
ຜູ້ໃດກໍເຫັນ ລາຍເຊັນຂອງທັງສອງຝ່າຍ
ຊາວສອງກຸມພາ ເຈັດສາມຈຳໄດ້
ນັດຢຸດຍິງຄັ້ງໃຫຍ່ ຫົວໄປໃນຣາຊວານາ

ບໍ່ເຖິງຊົ່ວໂມງ ຝ່າຍກົງກັນຂ້າມ
ລັ່ນປືນກະນໍ່າ ຢຽບຍ່ຳທຳລາຍສັນຍາ
ເມືກຍັງບໍ່ແຫ້ງ ກົ້ນແກ້ງບຸກລຸກເຂົ້າມາ
ບໍ່ນັບຖືສັດຈະອາຈາ ບໍ່ຫົວຊາສັນຍາທີ່ເຊັນ

ສັນຕິພາບ ຢູ່ໃສ ?
ຢູ່ກັບຜູ້ໃດ ຍາມໃດນໍ ຈຶ່ງຈະເຫັນ ?
ໂລກເຂົາລືຊາ ວ່າລາວລອງເຫຼັ້ນ
ແຍ່ງຊີງດີຊີງເດັ່ນ ຈຶ່ງເຫັນແຕ່ຄວາມວອດວາຍ.

# ເອກຣາດຢູ່ໃສ ?

ເອກຣາດ　　　　ຢູ່ໃສ ?
ຂຶ້ນກັບຝ່າຍໃດ　　　　ແກວເໜືອຫຼືລາວຂາຍຊາດ ?
ໄກສອນໜູຮັກ　　　　ຫຸ່ນຍົນປະຫຼາດ
ເຂັ່ນຂ້າຄົນໃນຊາດ　　　　ຜູກຂາດອິສຣະເສຣີ

ໂລກເຄີຍລືວ່າ　　　　ດິນລາວຜືນນີ້
ຈິ່ງແຈ້ງບອກຊີ້　　　　ລາວມີສັນຍາຫົກສອງ
ເມືອງເຈນີວາ　　　　ເຊັ່ນກັນພຽມພ້ອງ
ຂໍໃຫ້ລາວພີ່ນ້ອງ　　　　ຄອງຕົວຢູ່ໃນສັນຍາ

ສິບສາມປະເທດ　　　　ທີ່ເຊັ່ນຮັບຮູ້
ໃຫ້ລາວນັ້ນຢູ່　　　　ແບບຜູ້ກຳລັງພັທນາ
ເຊັ່ນການເຂົ້າອອກ　　　　ກັບນອກປະເທດນາໆ
ບໍ່ວ່າຊ້າຍວ່າກາງວ່າຂວາ　　　　ຕ່າງສັນຍາລາວມີເສຣີ

ເອກຣາດ　　　　ຈະຄົງມີ
ຢ່າໄດ້ປີ້ນປີ້　　　　ຍ່ຳຍີສັນຍາຫົກສອງ
ທ້ອນໂຮມກຳລັງ　　　　ຮ່ວມໃຈຮຽກຮ້ອງ
ຂໍໃຫ້ລາວຢືນກ້ອງ　　　　ຢ່າໝອງສິ້ນຄວາມອອດອາຍ.

# ຄືນແຫ່ງຄວາມຫຼັງ

ນຶ່ງ ຣາຕຣີ ນິຈັນສາຍ
ແສງ ກະຈາຍ ທົ່ວເມກາ
ເບິ່ງ ເບື້ອງບົນ ຟາກຟ້າ
ດາຣາ ເລື່ອນລອຍມາ ປົນກັບເດືອນ

ກ່ອນ ຍັງເຄີຍມີ ຈອນຂວັນ
ແນບ ເນື້ອນວນ ນັ່ງເປັນເພື່ອນ
ສຸກ ອັນໃດ ຈະມາປຽບເໝືອນ
ພາບ ຍັງເຕືອນ ຍັງຝັງໃຈ

ຕລອດ ຄືນ ນັ້ນ
ບໍ່ອາດ ຈະລືມໄດ້ ເພີ້ຢູ່ບໍ່ຫາຍ
ຈະຈົດ ຈະຈໍາໄວ້ ຈະອິດຖຸມອນໄວ້
ມີໃຫ້ ອັບເສົາ

ຄໍ່າ ຄືນນີ້ ບໍ່ມີນ້ອງ
ຟ້າ ຈຶ່ງມອງ ຣາສີເສົ້າ
ຂາດດວງເດືອນສີ່ງດຽວ ປ່ຽວເຫງົາ
ເໝືອນ ສອງເຮົາ ບໍ່ພົບກັນ.

# ສອນນອນ

ສອນນອນແຫ່ງນີ້ ທີ່ເປັນຖານຖິ່ນ ສົດໃສ
ເຫັນແລ້ວອີໂລ ຊອນໃຈເບີກບານ ພາຝັນ
ທ້ອງຖິ່ນລຳເນົາຍາວຢຽດ ຢຽດໄດ້ຕັ້ງສານ ກີໂລນັ້ນ
ເປັນເຂດນະຫັນ ຢູ່ໃນ ນະຄອນ

ຫົນທາງກ້ຽງງາມ ຜູ້ຄົນທ່ຽວທ່ອງ ໄປມາ
ແມ່ຂອງຄົງຄາ ເລືອນລາຫຼາກໄຫຼ ສູ່ຄອນ
ເຫັນໜຸ່ມສາວລົງລອຍຫຼິ້ນ ອາບເຢັນຢອກເຢົ້າ ໜ້າອອນຊອນ
ນົກບິນກັບຄອນ ເມື່ອຍາມ ຄ້ອຍຄ່ຳ

ຄືນອັນເພັງ ແສງເດືອນແສງດາວສ່ອງມາ
ສຸກອຸຣາ ນະພາພາໃຈ ຊື່ນຊ່ຳ
ເດິກຂ້ອນຄືນ ສຽງແຄນຂັບໂອ້ ໂອ່ຍລຳ
ສຽງຂຸ່ຍຊ້ຳເຕີມເຂົ້ານຳ ສຸກເຫຼືອລ້ຳສອນນອນແຫ່ງນີ້

ໃຜເຄີຍໄດ້ມາ ຕິດຕາຝັນເພີ້ ເພີ້ຫາ
ຄົງຫວນຄືນມາ ບໍ່ເລືອນເລີກລາ ຫຼີກໜີ
ແມ່ນເກີດຊາດໃດຂໍຈົ່ງ ເກີດໃນຖິ່ນຖານ ບ້ານແຫ່ງນີ້
ເຖິງສູນຊີວີ ຈະບໍ່ ຂໍຫ່າງ.

# ຮັກສາວເຮືອນໃກ້

| | |
|---|---|
| ບັນຫາ | ໜັກອີກແລ້ວ |
| ອີກແລ້ວ | ເພາະຮັກສາວເຮືອນໃກ້ |
| ບໍ່ຮູ້ | ຈະທຳຢ່າງໃດ |
| ສາວເຮືອນໃກ້ | ໂອະ ງາມອີຫຼີ |
| | |
| ເຮືອນ | ຢູ່ຄົນລະຟາກຮົ້ວ |
| ນຶກກົວ | ພໍ່ນາງໜັກໜາ |
| ຄິດຢາກ | ເຂົ້າໄປເອົ້າຈາ |
| ຢ້ານເພິ່ນຫາ | ວ່າຜູ້ຮ້າຍອ້າຍໂຈນ |
| | |
| ຄິດ | ຢາກບອກກັບນ້ອງ |
| ແມ່ເນື້ອທອງ | ອ້າຍຮັກສຸດຫົວໃຈ |
| ຄິດຢາກ | ຂ້າມຮົ້ວເຂົ້າໄປ |
| ຢ້ານບໍ່ໄຫວ | ເພາະມັນສູງພິລຶກ |
| | |
| ຄິດຢູ່ | ຫຼາຍຄືນຫຼາຍວັນ |
| ແມ່ນົງຄານ | ຕາຫວານຍິ້ມໃຫ້ |
| ແລ້ວເຮົາ | ຈະທຳຢ່າງໃດ ? |
| ນຶກອອກໄດ້ | ຈະລອດໄປຫານາງ. |

# ຊຽງຂວາງແດນງາມ

ຊຽງຂວາງ　　ເປັນແດນວິມານ
ໜາວໃຈສະທ້ານ　　ໜາວສັ່ນສະເທືອນ
ພູຈິງ　　ເປັນວົງແສງເດືອນ (ຊ້ຳ)
ເມກນ້ອຍລອຍເລືອນ　　ຍາມເມື່ອຄືນຈັນເພັງ

ໝູ່ນາງ　　ນາດນ້ອຍອະຣິ
ລອຍກາງນະທີ　　ເປັ່ງຣາສີສອຍເດັ່ນ
ນ້ຳງືອ　　ໄຫຼລິນບໍ່ເອັ້ນ (ຊ້ຳ)
ຍາມຄ່ຳແລເຫັນ　　ສາວເມື້ອເຢັນລ່ອງລອຍ

ໂອ　　ຊຽງຂວາງນີ້ເອີຍ
ກ່ອນນີ້ບໍ່ເຄີຍ　　ເຫັນເຈົ້າງາມຢາດຍ້ອຍ
ດຽວນີ້　　ທຳມະຊາດຈອນດອຍ (ຊ້ຳ)
ເຊົ້າຄ່ຳນັ່ງຄອຍ　　ພູຈອງອອງງາມຕະການ

ໄຫທິນ　　ນິ່ງຂວັນຊຽງຂວາງ
ສາຍລົມໄຫຼລ່ອງ　　ອ້າຍສຸດທ່ອງເມື່ອຝັນ
ພູພຽງ　　ເປັນລອນກ່າຍກັນ (ຊ້ຳ)
ໃຫ້ອ້າຍສຸກສັນ　　ກັບຄວາມງາມຊຽງຂວາງ.

# ສົ່ງຍາດສູ່ແນວຫນ້າ

ຂໍສັ່ງລາ ລຸງຕາປ້າອາທັງຫຼາຍ
ຫຼານຂໍລາໄປ ລາໄປສູ້ເສິກສົງຄາມ
ດຽວນີ້ເມືອງລາວ ກຳລັງພັຍລານ
ຍ້ອນການຄຸກຄາມ ຈຶ່ງຕ້ອງຈາກໄປ

ຂໍປ້າອາ ລຸງຕາເຖົ້າແກ່ທຸກຄົນ
ຢ່າຄິດກັງວົນ ກັງວົນໃຫ້ໝົ່ນໝອງໃຈ
ຄິດວ່າຫຼານເອງ ເກີດມາເປັນຊາຍ
ຢ່າຄິດນ້ອຍໃຈ ຫຼານໄປບໍ່ນານກັບມາ

ຢູ່ທາງບ້ານ ຈົ່ງຊ່ວຍດູແລ
ນ້ອງນ້ອຍທັງພໍ່ແມ່ ຈົ່ງແລຊ່ວຍຫຼານເຖິດໜາ
ຊ່ວຍຄອບຄົວຫຼານ ຍາມຈົນແລ່ນຫາ
ຂໍຈົ່ງເມດຕາ ຍາມຍາກຂັດສົນ

ເຖິງຈາກໄປ ກໍໄປເພາະໜ້າທີ່ຫຼານ
ເມື່ອຊາດຕ້ອງການ ຕ້ອງການຊາຍໜຸ່ມທຸກຄົນ
ເພື່ອຊາດຂອງເຮົາ ຈຶ່ງຍອມສູ້ທົນ
ຫາກເຊົາວຸ້ນວົນ ບໍ່ຄົນຄົງທອນຕ່າວຄືນ.

# ໃຜລວງໃຜ ?

ໃຜລວງໃຜຫຼອກ ? ໃຜບອກວ່າຮັກແທ້ນັ້ນ ?
ໃຜຕັດສັນພັນ ? ໃຜປັ່ນທາງເດີນ ?
ສັນຍາ ວ່າຈະບໍ່ຫ່າງເຫີນ
ໃຜຫໍລວງເກີນ ສັນຍາກ່ອນໃຜ ?

ໃຜລວງໃຜແທ້ ? ໃຜແກ້ໂສ້ຮັກກ່ອນນັ້ນ ?
ໃຜຖິ້ມຄຳໝັ້ນ ແກ້ງກັນລືມໄລ ?
ຫົນທາງ ທີ່ເຮົາເຄີຍສຸກໃສ
ແຕ່ແລ້ວຂາດໄປ ຍ້ອນໃຜຫວັງລວງຫຼອກກັນ

ສ່ວນອ້າຍນີ້ ບໍ່ເຄີຍລະເມີດສັນຍາ
ຕັ້ງໝັ້ນສັດຈະອາຈາ ບໍ່ເຄີຍຫາທາງຫ່າງຫັນ
ເມື່ອເຫັນນ້ອງເມີນ ຈຶ່ງເມີນໄປຕາມໆກັນ
ຢ້ານເຂົາກ່າວຂວັນ ວ່າຊາຍງໍ້ຍິງ

ໃຜລືມໃຜກ່ອນ ? ໃຜວ້ອນຄວາມຮັກໃຫ້ໝັ້ນ ?
ໃຜຫຼີກສາບານ ປິ້ນປັນຄວາມຈິງ ?
ຫົວໃຈ ຊ່າງໂຫດຮ້າຍເໝືອນປີງ
ດູດເລືອດເຊືອດຄີງ ບໍ່ຫຼີງບໍ່ແລຕໍ່ກັນ.

# ຈັນຄູ່ຟ້າ

ຈັນຄູ່ຟ້າ ດາຣາໃສສ່ອງ
ດັ່ງອ້າຍແລະນ້ອງ ປະຄອງຄວາມຮັກຄູ່ກັນ
ຕາບສິ້ນຊີວາ ສັນຍາຮັກນີ້ຜູກພັນ
ນ້ອງກໍວ່າຮັກອ້າຍໝັ້ນ ດຸດດັ່ງຈັນຄຽງຄູ່ດາຣາ

ຄວາມຮັກນີ້ ພວກເຮົາສ້າງມາ
ຫາກໃຜໜີໜ້າ ດິນຟ້າຈິ່ງລົງໂທດທັນ
ເພາະຂ້າທັງສອງ ໝາຍປອງຄຽງຄູ່ຕໍ່ກັນ
ປຽບເໝືອນວ່າຈັນຄູ່ຟ້າ ບໍ່ຈາກລາໜີໜ້າກັນເລີຍ

ຈັນຄູ່ຟ້າ ດາຣາຄຽງຄູ່ຄະເນີຍ
ບໍ່ກຽດກັນເລີຍ ກັບຄວາມຮັກເຄີຍມີມາ
ບອກວ່າຮັກ ເຮົາສອງບໍ່ຍອມຈາກລາ
ຄົງຊື່ນສຸກສິ້ນທຸກວຸຣາ ຂໍບູຊາຮັກນ້ອງຄົນດຽວ

ຂໍຮັກໝັ້ນ ພັນປີແໜ້ນໜຽວ
ອ້າຍຂໍນ້ອມໜ່ຽວ ໃຈດຽວຮັກດຽວເທົ່ານີ້
ຫາກຊີບຈະດັບ ລາລັບຈາກໂລກໂກໜີ
ຂໍແຕ່ຍອດຍິ່ງຄົນດີ ໄດ້ໂປຣດປຣານີມີໃຈຮັກດຽວ

# ປາກເຊແດນງາມ

ເມື່ອເຍືອນເຖິງຖິ່ນ ຜືນດິນຖິ່ນແຄວ້ນແດນໄກ
ປາກເຊສອຍຈັບໃຈ ຣືທັຍໜັກໜາ
ພູນະໂລງ ຢູ່ທາງກ້ຳຝ່າຍຂວານັ້ນ
ເລົ່າເປັນນິທານ ສູ່ກັນຟັງມາຕັ້ງຫຼາຍປີ

ນາງນະໂລງ ສັກສູງສິ່ງງາມໂສພາ
ບາຈຽງຈຶ່ງປາຖນາ ຫວັງໄດ້ນາງມາເປັນຂວັນຊີວີ
ແຫ່ຂັນໝາກມາ ຮອດເມືອງຂັນເກີ່ງພໍດີ
ໄດ້ຂ່າວນະໂລງໂຕນໜີ ຊ້ຳຮືດີຂ້າຕົວຕາຍ

ນ້ຳເຊໄຫຼຫຼັ່ງ ຫີນທາງແຫ່ງສາຍທາຣາ
ປາກເຊສອຍງາມຕາ ໃຈຂ້ານັ້ນໝາຍ
ສາວປາກເຊ ສເນ່ຊາບຊຶ້ງຕຣຶງໃຈ
ຂ້າຂໍຝາກໃຈ ຄຽງຄູ່ຊານວັຍນ້ອງນາງຄົນດີ.

# ຫຼວງພະບາງແດນງາມ

ໂອ້ ແດນດິນ ແດອັ້ນແຫ່ງຄວາມຝັນ
ສວຍງາມຕຣະການ ດັ່ງນຶ່ງເທວັນສັນສ້າງ
ສິນຄຳເລົ່າລື ເມືອງຫຼວງພະບາງ
ປະສາດວຽງວັງ ແວວວາວສະດຸດຕາ

ຍອດພູສີ ສູງເດັ່ນງາມລ້ຳ
ວັດວາອາຮາມ ເປັນນິ່ງຂວັນເມືອງສງ່າ
ຝູງຊົນທົ່ວໄປ ໃຈລ້ວນເມດຕາ
ພຸທສາສນາ ນຳພາສຸກສັນ

ດິນແດນ ແຫ່ງຄວາມວິລັຍ
ຫຼຽວແລແຫ່ງໃດ ຊວນຈິດໃຈເບີກບານ
ເພີນຫຼຽວຊົມ ພິຣົມສຳຣານ
ພົບເຫັນແຕ່ຮອຍຍິ້ມນັ້ນ ພາຝັນຊຶ້ງຕຣຶງໃຈ

ຖິ່ນແດນໃດ ໃສຈະປຽບເໝືອນ
ຝັງໃຈຕິດເຕືອນ ບໍ່ອາດຫຼົງເລືອນລືມໄດ້
ຍິ້ມນັ້ນແນບຕຣຶງ ຊາບຊຶ້ງຮືທັຍ
ມີຄ່າຄວາມໝາຍ ໄມຕຣີຕໍ່ກັນ.

# ນົກເຂົາລືມຄອນ

ນົກເອີຍນົກເຂົາ ຂອງເຮົາເກົ່າກ່ອນ
ເຈົ້າພາກຈາກຈອນ ຫຼົງຄູ່ໄປຢູ່ແຫ່ງໃດ ?
ເຈົ້າຖືກລໍ້ລວງຕິດບ້ວງພານ ຫຼືຜູກສັນພັນຂອງຜູ້ໃໝ່
ຈຶ່ງຫຼົງລືມໄລ ບ່ອນເຄີຍສຸກສັນ

ນ້ອງເອີຍນ້ອງນາງ ເຄີຍຄຽງຂ້າຢູ່
ກ່ອນເຄີຍຊື່ນຊູ ພົບຜູ້ໃໝ່ປ່ຽນແປຜັນ
ເຈົ້າລືມຣົດຮັກທີ່ດື່ມດ່ຳ ເຈົ້າລືມນ້ຳຄຳເຄີຍຍຶດໝັ້ນ
ຮ່ວມອະທິຖານ ຮັກກັນຈົນຕາຍ

ຖິ່ນກ່ອນຄອນເກົ່າ ທີ່ເຈົ້າເຄີຍນອນ
ເຫຼືອເປັນອະນຸສອນ ແຫ່ງຄວາມຫຼັງເຕືອນໃຈ
ເຫັນຊາກໝອນຮ້າງທີ່ນາງໝູນ ຫອມກິ່ນເນື້ອອຸ່ນຍັງຈຳໄດ້
ເຄີຍຈູບລູບໄລ້ ນອນນາງ

ນ້ອງເອີຍນ້ອງນ້ອຍ ຂ້າຄອຍເຈົ້າຢູ່
ກັບເຖິດຍອດຊູ້ ຂ້າຢູ່ໂດດດ່ຽວອ້າງອ້າງ
ແມ່ນເຈົ້າຫຼົງເດີນທາງຜິດໄປ ຈຶ່ງຫັກຫົວໃຈເດີນ້ອງນາງ
ຖິ່ນກ່ອນຄອນຫຼັງ ຍັງຄອຍຍັງຄອຍ.

# ໒໑໔
# ນຫຼືສັນຍາ ?

ນີ້ຫຼືນີ້ຫຼື ຄົນຮັກກັນ ?
ບໍ່ທັນຂ້າມວັນ ຮັກຜັນເປັນອື່ນ
ບໍ່ມີເຍື້ອໃຍ ເຫຼືອໄວ້ໃຫ້ຊື່ນ
ຮັກບໍ່ຍັ້ງຍືນ ສຸດຝືນຫົວໃຈອາວອນ

ນີ້ຫຼືນີ້ຫຼື ຄືສັນຍາ ?
ເຫດໃດນ້ອງມາ ວິວາໄປກ່ອນ
ບໍ່ຄິດເຖິງວັນ ສັນພັນເກົ່າກ່ອນ
ຮັກບໍ່ແນ່ນອນ ຫຼອກຫຼອນປ່ຽນຄຳສັນຍາ

ກ່ອນເຄີຍ ສາບານ
ຮັກຍັ້ງຍືນນານ ດັ່ງຈັນຍຸ່ງຄູ່ຟ້າ
ຈະຖືຮັກນັ້ນ ເໝືອນດັ່ງສັນຍາ
ຮັກກັນຈົນກວ່າ ດິນຟ້າມະລາຍ

ນີ້ຫຼືນີ້ຫຼື ຄືຮັກຈິງ ?
ຫຼອກກັນເໝືອນລີງ ໃຈຍິງລືມງ່າຍ
ບໍ່ເຫຼືອນ້ຳຄຳ ດັ່ງສັນຍາໄວ້
ຮັກບໍ່ໝັ້ນໝາຍ ຢູ່ໃສນ້ຳຄຳສັນຍາ ?

# ທຳມະຊາດເມືອງສູ້ຍ

ທິວທັດແຫ່ງນີ້ ຊ່າງມີແຕ່ຄວາມງາມວິລັຍ
ຊົມແລ້ວເປັນໜ້າຈັບໃຈ ງາມເໜືອຖິ່ນໃດໃນເຫຼົ່າ
ງາມທຳມະຊາດ ຕາມພູຜາປ່າດົງໄຂດເຂົາ
ຖິ່ນໃດຈະມາງາມເທົ່າ ສ່ອງເປັນເງົາຍາມແສງເມກບັງ

ສຽງນົກຮ້ອງກູ່ ຍາມເຊົ້າຕຣູ່ໜ້າອອນຊອນ
ຍິນແລ້ວເປັນໜ້າສະອອນ ສຽງນົກມັນວອນຮ້ອງສົ້ງ
ຍາມສາຍລົມແຫວກ ສຽງໃບແປກຮີ່ງຮ້ອງກ້ອງດັງ
ໜ້າຜາລຽບຮີມໜອງຕັງ ໝູ່ນົກຍາງຈອບບິນກິນປາ

ເມືອງສູ້ຍ ໃຜໆກໍຍັງຕ້ອງການ
ຟັງແລ້ວຢາກໄປພົບພານ ຢາກຈະເຫັນໄວ້ເປັນຂວັນຕາ
ເປັນຮອຍສລັກ ປັກດວງໃຈຍາມເມື່ອລືມລາ
ໜອງຕັງຄຳເຂົາລືຊາ ອາບເຢັນກາຍາຍາມລົງແລງ

ນັ່ງຈອມພູໄສ ຫຼຽວໄງໂງ້ງຄືນຕ່າວກັບມາ
ເມືອງສູ້ຍແສນງາມສງ່າ ດັ່ງເທບເທວາປັ້ນແຕ່ງ
ໜຸ່ມສາວເດີນຫຼິ້ນ ຍາມຕາເວັນໃກ້ຈະລັບແສງ
ເຜື້ອໄຫຼໃຕ້ຟ້າຍາມແລງສຸກສົມທຸກແຫ່ງເມືອງສູ້ຍນີ້ເອີຍ

# ຮັກສາວໂພນໂຮງ

ພຽງຄັ້ງນຶ່ງ ທີ່ຂ້າໄດ້ເຫັນ
ສິນໃຈບໍ່ເອັ້ນ ໄດ້ເຫັນສາວເມືອງໂພນໂຮງ
ນ້ອງງາມໂສພາ ຄົງສ້າງບຸນມາຈຶ່ງນຳຍູ້ສົ່ງ
ຖ້າປຽບນ້ອງແລ້ວດັ່ງຫົງ ນາງງາມສູງສົ່ງອົງພັກໜ້າຊົມ

ພຽງຄັ້ງນຶ່ງ ທີ່ຂ້າໄດ້ໄປ
ຊາບຊຶ້ງຕຣຶງໃຈ ຮືທັຍຂອງຂ້າຊື່ນຊົມ
ຢາກຈະນາຢູ່ ຢາກເປັນເນື້ອຄູ່ຊື່ນຊູພິຣົມ
ບຸນອ້າຍສ້າງນາບໍ່ສົມ ຈຶ່ງຫຼົງໂງ່ງົມພຽງນ້ອງຄົນງາມ

ໂອ່ ນໍ້າໃຈ ສາວເມືອງໂພນໂຮງ
ນ້ອງງາມເລີດແລ້ວສູງສົ່ງ ອົງອາດພ້ອມອັທນະທັມ
ນ້ອງສ້າງບຸນນາ ທຳຜລາກຸສົນນາກລ້ຳ
ຊາດນີ້ນ້ອງຈຶ່ງງາມຂຳ ສອຍເລີດລ້ຳຍິ່ງກວ່າຈັນທຣາ

ພຽງຄັ້ງນຶ່ງ ບໍ່ຂໍລືມຫຼົງ
ຄິດວ່າອ້າຍຄົງ ໄດ້ຮັບຄວາມຮັກກະຣຸນາ
ຫາກນ້ອງປຣານີ ບໍ່ຂໍໜ່າຍໜີຮັກນ້ອງເທົ່າຟ້າ
ຈະເຊີດຊູບູຊາ ຂໍນ້ອງແກ້ວຕາຮັກຂ້າເຖີດເອີຍ.

# ຊັ້ງຄົນຫຼາຍໃຈ

ຊັ້ງຄົນຫຼາຍໃຈ ຊັ້ງຄົນຫຼາຍໃຈ
ຈະຮັກຜູ້ໃດ ຮັກໃຜແທ້ນີ້
ຮັກຈິງກໍບອກ ຢ່າຫຼອກໃຫ້ຊ້ຳຮືດີ
ຫາກແມ່ນບໍ່ຄິດປຣານີ ຈົ່ງຕັດໄມຕຣີຢ່າມີເຍື້ອໃຍ

ຊັ້ງຄົນຫຼອກລວງ ຊັ້ງຄົນຫຼອກລວງ
ບໍ່ຮັກຢ່າຫວງ ທຳຫວງຫ່ວງໃຍ
ຈັບປາສອງມື ແລ້ວຈະຖືໄດ້ຢ່າງໃດ
ບໍ່ຮັກຈົ່ງຫຼີກທາງໄປ ແນວຄົນຫຼາຍໃຈບໍ່ປາຖນາ

ຜູ້ນີ້ກໍຊູ້ ຜູ້ນັ້ນກໍຊູ້
ບໍ່ຮູ້ເມື່ອໃດ ຈະໄຂປະຕູວິວາ
ຈະຢູ່ລວງໂລກ ຫຼືຢູ່ເປັນເຖົ້າຄ້ຳຟ້າ
ຫຼືຄູ່ວິວາ ຫາບໍ່ພົບພານ

ຊັ້ງຄົນຫຼາຍໃຈ ຊັ້ງຄົນຫຼາຍໃຈ
ບໍ່ຮັກບໍ່ໄດ່ ແລ້ວຢ່າລວງກັນ
ແມ່ນບໍ່ຮັກແທ້ ຈົ່ງແກ້ໂສ້ສາຍສັມພັນ
ໃຫ້ຄາຍບ້ວງອອກຈາກກັນ ຕຣາບຊົ່ວຊີວັນ ຢ່າພົບກັນເລີຍ.

# ຊັງຄົນລ່ຳໄລ

ຊັງຄົນລ່ຳໄລ
ກອດແຂນຜູ້ໃດ
ຮ້ອງໃສ່ຜູ້ຍິງ
ຕົນເອງນັ້ນແລະບໍ່ດີ

ຊັງຄົນລ່ຳໄລ
ໄປໃສໜໍນີ້
ວ່າບໍ່ໃຈຈິງເຫຼືອດີ
ຢ່າມາອວດດີເລີຍນະຜູ້ຊາຍ

ຊັງຄົນສໍພໍ
ບໍ່ຮັກບໍ່ງໍ້
ຖ້າເກັ່ງກໍເຊີນ
ຂືນຮັກກັນອີກຕໍ່ໄປ

ຊັງຄົນສໍພໍ
ຢ່າຂໍຜູ້ໃດ
ຂໍເຊີນໄປເຖີດຍອດຊາຍ
ຄົງຕຣົມທົວໃຈບໍ່ປາຖນາ

ບໍ່ແມ່ຢ່າຫ້າ
ຮູ້ບໍ່ຜູ້ຍິງ
ເຂົາຢູ່ສ້າງໂລກ
ຈົ່ງຮູ້ເສັຽວ່າ

ບໍ່ກ້າຢ່າຕີ
ຜູ້ຍິງເຂົາມີຣາຄາ
ສ້າງຄົນຈົນທົ່ວໂລກາ
ຍິງເກັ່ງເຫຼືອຊາຍ

ຊັງຄົນອວດດີ
ທົ່ວທັງໂລກີ
ອອກຈາກຜູ້ຍິງ
ຢາກຮູ້ໃຫ້ໂລກທະລາຍ

ຊັງຄົນອວດດີ
ຄົນມີມາກມາຍ
ຫຼືວ່າອອກຈາກຜູ້ຊາຍ ?
ຢາກຮູ້ຜູ້ຊາຍທຳທ່າອວດດີ.

# ຫນາວຫມອກ

ໜາວໝອກເມືອງເໜືອ ເພື່ອສາວເມືອງໃຕ້
ວັງວຽງສຳຣານເຣີງໃຈ ໜາວໃນຊື່ນໄປທຸກແຫ່ງ
ມີສາຍນ້ຳຊອງ ໄຫຼລ່ອງຜ່ານເນີນຫີນແກ້ງ
ໜາວໝອກຊ່າງມາຮ້າຍແຮງ ແຂງໃຈຂາດຄູ່ແອບອີງ

ໜາວໝອກປານໃດ ອ້າຍຍັງຄິດວ່າ
ເປັນແດນສຸກສົມອຸຣາ ນະພາແຫ່ງນີ້ງາມຍິ່ງ
ມີກ້ອຍງອຍຍຽງ ສິ່ງສຽງອອດອ້ອນສຸກຈິງ
ໜາວໝອກຂາດຄົນແອບອີງ ຂາດຍິງຍິ່ງໜາວຣະທົມ

ພາຍພຶກສາ ມາລາຫຼາກສີ
ເໜືອນແດນສຸຂາວະດີ ຊ່າງງາມເຫຼືອທີ່ຊວນຊົມ
ຊວນໃຈຂ້າ ຝັນຫາໃຝ່ໃຈນິຍົມ
ທຳມະຊາດງາມສົມ ສຸດແສນຊື່ນຊົມປານແດນສວັນ

ໜາວໝອກອ້າຍທົນ ບິນເຂົາຢູ່ເຈື້ຍ
ອາສັຍຖິ່ນພັກຊິດເຊີຍ ບໍ່ເຄີຍຫວັ່ນໄຫວໜາວນັ້ນ
ເພາະຂ້າຍັງມີ ພາລະໜ້າທີ່ສຳຄັນ
ໜາວໝອກຫຼືຈະມາກັ້ນ ຊີວິດທະຫານຕ້ອງທົນ.

# ບ້ານແມ້ວ

ພູຮາມູ ກົ້ວກະຈໍາ (ຊໍ້າ)
ເພາະມີເອນກັນ ຂໍລາໄປກ່ອນ
ລາແລ້ວ ບ້ານແມ້ວຈາກຈອນ
ຂໍລາໄປກ່ອນ ບ້ານແມ້ວຂອງເຮົາ

ຖິ່ນຖານ ບ້ານພູເຂົາ
ບ້ານແມ້ວຂອງເຮົາ ແສນເສົ້າສາແລ້ວ
ບັດນີ້ຈໍາພາກຈາກແກ້ວ ພວກເຮົາລາແລ້ວກ່ອນເຄີຍຢູ່ນໍາ
ລາແລ້ວບ້ານກົ້ວກະຈໍາ ຍ້ອນເສິກສົງຄາມຈຶ່ງຕ້ອງຫ່າງໄກ

ບ້ານແມ້ວເປັນຖິ່ນຖານ ຫົວໃຈສະທ້ານຍາມຕ້ອງຈາກໄກ
ເພາະວ່າສັດຕູພັຍສີ ມາລູ່ໂຈມຕີຈຶ່ງພ່າຍໜີໄກເຈົ້າ
ໄປຄາວນີ້ ຫົວໃຈຂ້ອຍແສນເສົ້າ (ຊໍ້າ)
ບ້ານແມ້ວຂອງເຮົາ ແສນເສົ້າໝົ່ນໝອງ

ພວກເຮົາຕ້ອງພ່າຍໜີ ເພາະມານຮາອີຕີປຸ້ນພີ່ນ້ອງ
ຊາວເຂົາຕັ້ງເປັນກອງ ພັດຖິ່ນລະຂອງບໍ່ມີເຮືອນຢ້າວ
ຊື່ວ່າແມ້ວ ກໍແມ່ນຊາດລາວ (ຊໍ້າ)
ຈະເປັນແມ້ວຫຼືຢ້າວ ກໍລາວດຽວກັນ

ຂໍສິ່ງສັກສິດມາຄຸ້ມຄອງ ຢ່າເສົ້າໝົ່ນໝອງໂສກເສົ້າຮໍາພັນ
ລາກ່ອນ ຕູບນ້ອຍ ຕັ້ງຢູ່ຈອມດອຍ ຕູບນ້ອຍເປັນຖັນ
ເມື່ອລົມພັດມາ ເຈົ້າຢ່າໄດ້ເຫຫັນ (ຊໍ້າ)
ຕູບນ້ອຍແດນສວັນ ບ້ານແມ້ວອ້າຍຂໍລາ
ລາແລ້ວ ບ້ານແມ້ວເອີຍ.

# ໄທດຳລຳພັນ

ສິບຫ້າປີ ທີ່ໄຕເຮົາ ຫ່າງແດນດິນ
ຈົ່ງອິນດູ ໝູ່ຂະນ້ອຍ ທີ່ພອຍພັດບ້ານ
ເຮົາຄືນໄຕ ຢາຍກັນໄປ ທຸກຖິ່ນທຸກຖານ
ຈົ່ງຮັກກັນເນີ ໄຕດຳເຮົານ໋າ

ສິບຫ້າປີ ໄຕດຳເຮົາ ເສັ້ງດາຍເດ່
ເມືອງເຮົາເພ ແສນເສັ້ງດາຍ ຊູເຈົາເຊີນລ່າ
ເຮືອນເຄີຍຢູ່ ອູ່ເຄີຍນອນ ຕ້ອງຈອນຈຳລາ
ປະໄຮ່ປະນາ ນ້ຳຕາໄຕໄຫຼ

ສິບຫ້າປີ ທີ່ໄຕເຮົາ ເສັ້ງແດນເມືອງ
ເຄີຍຮຸ່ງເຮືອງ ຊຸມຂະນ້ອຍ ຢູ່ສຸກສະບາຍ
ລຸງແກ່ນຕາ ໄດ້ສ້າງສາ ບ້ານເມືອງໄວ້ໃຫ້
ບັດນີ້ຈາກໄກ ໄຕເສັ້ງດາຍເດ່

ເອົ້າ ລຳນາ ນ້ຳຕາ ໄຕໄຫຼ
ຍາມເມື່ອ ຈາກໄກ ຊູເຈົາເຊີນລາ
ອິພຍົບ ຫຼົບຫຼີກ ພັຍໜີມາ
ໄຕດຳທຸກຖ້ວນໜ້າລຳຫາ ຈູ່ມື້ຈູ່ວັນ.

# ໄທດຳລຳພັນ ໔

ຫົກເຈັດປີ ທີ່ຂະນ້ອຍ ຫ່າງແດນລາວ ນາເມືອງໄທ
ໄດ້ມາເຊົາ ຢູ່ອາສັຍ ແຜ່ນດິນໄທເພິ່ນ
ເປັນຫ່ວງແມ່ ແລະລູກເມັຽ ຍາມຈາກຫ່າງເຫີນ
ຄຶດຮອດເຫຼືອເກີນ ຢາກພະເຊີນໜ້າກັນ

ຄຶດຮອດແມ່ ຢາກກັບແດນ ໄປແທນຄຸນ ບໍ່ຕ້ອງນາ
ທາງຝັ່ງພຸ້ນ ເພິ່ນບໍ່ຍອມ ໃຫ້ໄປຢາມບ້ານ
ໂທຣະສັບ ຈາກຝັ່ງໄທ ໄປຝັ່ງວຽງຈັນ
ບໍ່ຮູ້ຂ່າວກັນ ດ້ອຍພາກັນອາງສາຍ

ຫົກເຈັດປີ ດອກໄມ້ຂາວ ກາຍເປັນແດງ
ຄວາມປ່ຽນແປງ ປ່ຽນໃຫ້ຂວາ ຫັນແປເປັນຊ້າຍ
ທັງໄທລາວ ຂາວກັບແດງ ເຊື່ອມກັນເມື່ອໃດ
ຂະນ້ອຍຈະໄປ ຢ້ຽມເຢືອນຖິ່ນຖານ

ເອີ້າ ຍາມຄຶດນາຄັ້ງໃດ ນ້ຳຕາຂອງຂະນ້ອຍມັນໄຫຼໆ
ຢູ່ເມືອງໄທ ກໍສະບາຍ ສະບາຍ
ກໍອົດຄຶດຮອດຫາ ຄຸນພໍ່ ຄຸນແມ່ບໍ່ໄດ້
ບໍ່ຮູ້ວ່າ ເວນກັນອັນໃດ ຂອງຂະນ້ອຍນໍ.

# ກັບຖິ່ນໄທດຳ

ກັບຄືນຜັນ ສູ່ບ້ານໄຕດຳ ຂອງເຮົາດີກວ່າ
ກັບຄືນມາ ເຫັນໜ້າພີ່ນ້ອງ ຂອງເຮົາຊາວດິນ
ເຂົ້ານຶ່ງຄຳ ນໍ້ານຶ່ງຂັນ ເຮົາປັນກັນກິນ
ນໍ້າໃຈບໍ່ສິ້ນ ຈາກໝູ່ເຮົາ ເຜົ່າໄຕດຳ

ຢູ່ຖິ່ນໃດ ບໍ່ໄດ້ສຳລານ ເໝືອນບ້ານເຮືອນເກົ່າ
ທ່າງບ້ານເຮົາ ທືອເຂົ້າທຸກມື້ ຕ້ອງຊື້ປະຈຳ
ກັບບ້ານເຮົາ ເຂົ້າມີກິນ ທື່ອຖິ່ນໄຕດຳ
ທຸກວັນຍັ່ງຄ່ຳ ສາວເຜົ່າໄຕດຳ ນ້ອງເຈົ້າຈາກຈອນ

ຫອມດອກມະລິ ຫ້ອຍເປັນມະລັຍ ໃນກະຈາດ
ອ້າຍຄະນຶງ ຮອດນຸຊນາ ນຶ່ງສມອນ
ເຈົ້າເຄີຍໃຫ້ ມະລັຍມະລິ ຫວານແນບຄຽງໝອນ
ບັດນີ້ເຈົ້າຈອນ ທ່າງກັນ ບໍ່ທັນກັບມາ

ກັບຄືນຜັນ ສູ່ບ້ານໄຕດຳ ຂອງເຮົາມື້ນີ້
ດອກຈຳປີ ຜູ້ສາວເຄີຍໃຫ້ ບໍ່ໄດ້ໂລຍລາ
ຜ້າຫົ່ມນອນ ໝອນເຄີຍໜູນ ອົບອຸ່ນໜັກໜາ
ຍັງມີຄຸນຄ່າ ອ້າຍຈຶ່ງກັບມາ ຕາຍຖິ່ນໄຕດຳ.

# ຈອນໃຈຄົນຈົນ

ຈອນໃຈ
ນ້ອງເປັນຈອນໃຈ ຄົນດຽວຂອງຂ້າ
ເປັນຍອດຮັກ ຍອດບູຊາ
ເໜືອກວ່າ ຜູ້ຍິງໃດໆ

ຍານຈົນ
ນ້ອງຍອມສູ້ທົນ ຕໍ່ຄວາມໝອງໄໝ້
ຈະຂັດສົນ ທຸກຢ່າງໄປ
ນ້ອງໃຫ້ ແຕ່ຄວາມຈິງຮັກພັກດີ

ນ້ອງຄືນ້ຳທິບ ແຫ່ງດວງໃຈ
ນ້ອງຄືແສງໄຟ ສ່ອງທາງຊີວີ
ສົນຄຳ ທີ່ເປັນກຸລສັດຕຣີ
ໂອຄົນດີ ນ້ອງຄືຈອນໃຈຄົນຈົນ

ຈອນໃຈ
ນ້ອງມີນ້ຳໃຈ ປະເສີດເຫຼືອລົ້ນ
ເພື່ອຍອດຍິງ ຂ້າຈະທົນ
ຄິດຄົ້ນ ສ້າງຕົນໃຫ້ສົມຈອນໃຈ.

# ບຸພາລາກ່ອນ

ທັ້ງໆທີ່ໃຈ ນ້ອງກໍວ່າຮັກ
ຮັບສມັກ ຮ່ວມຮັກມອບໃຈເປັນທັນ
ແຕ່ດ້ວຍເຫດໃດ ຂວັນໃຈຈຶ່ງມາສ້າງກັນ ?
ປ່ອຍໃຫ້ອ້າຍຊອກຊ້ຳ ຣະກັນຂື່ນຂົມດວງໃຈ

ອ້າຍນີ້ກໍເຄີຍ ໄດ້ເອີຍອາຈາ
ວ່າຈະມາ ບູຊາສູ່ຂໍນ້ອງໄປ
ນ້ອງຍິ້ມຈຸ່ມຈີ ຍິນດີຕອບອ້າຍພໍໃຈ
ວັນນຶ່ງອ້າຍຈຳໄດ້ ສັນໃດໜໍລືມອ້າຍລົງ

ມີອຸປສັກ ສິ່ງໃດໃຜເດ່ສ້າງມາ ?
ຫຼືຜູ້ໃຫຍ່ຫາ ເຣື່ອງມາແຍກທາງຮັກລົງ
ນ້ອງຄົນດີ ບໍ່ປຣານີອ້າຍກໍຄົງ
ຄອນຄິດພະອົງ ທີ່ໄດ້ຫຼົງສ້າງຮັກຂື້ນມາ

ບຸພາຈອນໃຈ ນ້ອງຊ່າງເສີຍເມີຍ
ບໍ່ນຶກເລີຍ ກ່ອນເຄີຍຮ່ວມຮັກສັນຍາ
ຫຼືວ່າໃຈນ້ອງ ໝາຍປອງລອງໃຫ້ໂສກາ
ບໍ່ນຶກກະຣຸນາ ຈຳລາບຸພາຈອນໃຈ

# ວອນນ້ອງກັບຄືນ

ຫຼຽວສຸດຂອບຟ້າ ບໍ່ເຫັນໜ້ານ້ອງມາໃກ້
ນານປີທີ່ນ້ອງຈາກໄປ ດວງໃຈອ້າຍສຸດຂັດສົນ
ອ້າຍຄອຍນ້ອງຢູ່ ດ້ອຍໃຈສຸດແສນກັງວົນ
ຈາກອ້າຍໄປຫຼາຍປີຜ່ານພົ້ນ ໂຖເອີຍໜ້ານົນປານໃດຈະມາ ?

ຫຼືໄປພົບຊູ້ ຫຼືມີຄູ່ຜູ້ໃໝ່ຄຽງຊ້ອນ ?
ອ້າຍນີ້ສຸດຈະອາວອນ ບັງອອນຊ່າງບໍ່ເມດຕາ
ຂໍນ້ອນວອນໄຫວ້ ເທວັນທັງເຈົ້າອິນທຣາ
ໄປຣດຈົ່ງໄດ້ສົ່ງສານຕົວຂ້າ ໃຫ້ຍອດຊີວາໄດ້ກັບຄືນ

ອ້າຍ ນີ້ຄອຍນ້ອງຢູ່ທຸກວັນ
ປານນີ້ຍັງບໍ່ກັບທັນ ຄືນວັນອ້າຍສຸດກໍ້າກືນ
ແສນເວທນາ ລູກນ້ອຍຮ້ອງແອ່ວຂັດຝືນ
ຍາມເຂົ້ານອນລູກເຮົາສະອື້ນ ນ້ອງຍັງບໍ່ຄືນຊ່າງໃຈດຳ

ຮີບມາເຖີດນ້ອງ ອ້າຍຂໍຮ້ອງເປັນຄຳສຸດທ້າຍ
ຍິນແລ້ວຈົ່ງຟ້າວຮ້ອນໃຈ ຢ່າໄປປ່ອຍຕົວຖລຳ
ເຫັນໃຈອ້າຍກ່ອນ ຍາມນອນສຸດແສນຣະກຳ
ຫາກມີນ້ອງຄຽງຄອງຍາມຄ່ຳ ອ້າຍຄົງຫາຍຊ້ຳອົກຕຣົມ.

# ລານ້ອງສູ່ແນວໜ້າ

ອ້າຍຈຳຈາກໄປ ແດນໄກແນວໜ້າ
ນ້ອງເອີຍຟັງອ້າຍສັ່ງລາ ຢ່າຫຼັ່ງນ້ຳຕາໂຊນຊານ
ອ້າຍເປັນຊາຍ ໄອ້ລາຍຊາຍຊາດທະຫານ
ລ້ຽງລູກໄອ້ນະນົງຄານ ລໍການກັບຂອງອ້າຍນີ້

ລູກເອີຍຢ່າໄຫ້ ຢ່າແອ່ອນານດາ
ຢ່າໄຫ້ຮ່ຳຮ້ອງຄອນຫາ ກອນແມ່ເຈົ້ານະຄົນດີ
ໂອເນັ້ງເອີຍ ຢ່າເມີນເສີຍພຽນລູກໃຫ້ດີ
ຫາກຜິດນິດນ້ອຍຢ່າຕີ ປຣານີລູກເຖີດດວງໃຈ

ກ່ອນນ້ອງເຂົ້ານອນ ຢ່າລືມໄຫວ້ວອນເທວາ
ດອກໄມ້ທູບທຽນບູຊາ ຄຸນພຣະຊ່ວຍຮັກສາອ້າຍ
ຫາກສິ້ນພັຍລີ ອ້າຍນີ້ຈະຄືນມາໄວ
ມາຄູ່ຄອງດວງໃຈ ຈົນຕາຍບໍ່ຂໍຈາກຈອນ

ນ້ອງເອີຍຢ່າໄຫ້ ຈົ່ງເຊັດນ້ຳຕາ
ອ້າຍຈາກໄປບໍ່ນານຈະມາ ລໍຖ້າອ້າຍນະບັງອອນ
ຈອນແຈ້ງແລ້ວ ນ້ອງແກ້ວອ້າຍຂໍລາກ່ອນ
ຢ່າໄຫ້ນ້ຳຕາປຽກໝອນ ອ້າຍຈອນຈາກແລ້ວແກ້ວເອີຍ.

# ປູ່ດີເຖີດນ້ອງ

ປູ່ດີເຖີດນ້ອງ ປູ່ຄອງຄອຍອ້າຍ
ຂໍສັ່ງຂວັນໃຈ ລາໄປສູ້ລົບສົງຄາມ
ບ້ານເມືອງເຮົາ ຖືກເຂົາລຸກລານ
ຂໍຈາກຄົນງາມ ໄປສູ່ສນາມແນວໜ້າ

ເບິ່ງແຍງລູກນ້ອຍ ຈົ່ງຄອຍພຽນລ້ຽງ
ຂໍຢ່າລຳອຽງ ຊີງຊັງລູກເຖີດຂວັນຕາ
ອ້າຍຂໍວອນ ງານງອນໂສພາ
ນ້ອງຈົ່ງຄອຍຖ້າ ຢ່າມີນາຍາໃນຫົວໃຈ

ພໍ ສິ້ນສັ່ງຂວັນຕາ ຣົດໂຕໄຍຕາ
ແອວນາ ຂໍລານ້ອງໄປ
ສິ້ນສົງຄາມ ລຸກລານຍານໃດ
ຈະຢູ່ຄຽງໃກ້ ແນບກາຍຈົນສິ້ນຊີວາ

ປູ່ເຮືອນຄອຍອ້າຍ ດວງໃຈຢ່າເສົ້າ
ຂໍຢ່າງ່ອນເຫງົາ ຈົ່ງເຊົາໄອ້ກ່ອນຄົນດີ
ແມ່ນເທວັນ ອິນພຣົມປຣານີ
ພົ້ນຈາກພັຍລີ ບຸນເຮົາມີຄົງໄດ້ພົບກັນ.

# ພຽງຜິດນັດ

ຊີວິດທະຫານ   ບໍ່ຄືຂ້າຣາຊການພົລເຮືອນ
ຄ່ຳບໍ່ໄດ້ຢືນ   ຄືນບໍ່ໄດ້ຢູ່ ນອນຄ້າຍເປັນປະຈຳ

ຢ່າທໍຣະມານ   ຫົວໃຈກັນເລີຍ
ເຈົ້າຢ່າເມີນເສີຍ   ລະເລີຍເໝືອນຄົນຊັງກັນ
ຂ້າຜິດສິ່ງໃດ ?   ດວງໃຈຈຶ່ງລົງໂທດທັນ
ດ່ວນມາຕັດຮັກຂາດບັ້ນ   ຫົວໃຈຈາບັນສຸດຝືນ

ຢ່າທໍຣະມານ   ຫົວໃຈກັນເຫຼົ້ນ
ຂ້າບໍ່ຢາກເຫັນ   ນ້ອງເປັນຂອງຊາຍຄົນອື່ນ
ຖ້າຕັດສິນໃຈ   ລືມໄດ້ປ່ອຍອ້າຍຂົມຂື່ນ
ເປັນຫຍັງບໍ່ສິງຮັກຄືນ   ຄືນອ້າຍກ່ອນຈະປ່ຽນໃຈ

ຄອນຫຼືໃຈໂທດ   ລົງໂທດລົງທັນ
ຜິດພຽງເທົ່ານັ້ນ   ຫາກຄົນຮັກກັນຄວນໃຫ້ອະພັຍ
ຂ້າພຽງຜິດນັດຄັ້ງດຽວເທົ່ານັ້ນ   ນ້ອງເອງກໍຮູ້ຢູ່ແລ້ວວ່າວຽກການຂອງອ້າຍປະນີບໍ່ໄດ້
ໂດ ຈຳເປັນໄປຫາບໍ່ໄດ້ເທົ່ານີ້ຫຼືຈຶ່ງປ່ຽນໃຈ ?   ຊ່າງໂທດຊ່າງຮ້າຍເຫຼືອທົນ

ຢ່າທໍຣະມານ   ຫົວໃຈກັນເລີຍ
ຂ້າບໍ່ຢາກເປັນ   ເປັນເພັຊຄາດຂ້າຄົນ
ຂໍເຈົ້າຈົ່ງໄປ   ຕາມທາງແສນໄກໃຫ້ພົ້ນ
ຢ່າທໍຣະມານໃຈຄົນ   ເຫຼືອທົນເຈົ້າອາດຈະຕາຍ.

# ຊາຕາອາພັບ

ອາພັບແທ້ນໍ ອາສນາຂ້າຊ່າງຕ້ອຍຕ່ຳ
ຄິດໄປສຸດແສນຣະກຳ ໂລກຊ່າງທຳບາບກັນແກ່ຂ້າ
ເກີດມາຮ່ອນໂລກ ຄວາມເສົ້າໂສກສຸດພັລນາ
ເປັນຄົນສິ້ນອາສນາ ສິ້ນຊະຕາອາດູນ

ອາພັບແທ້ເດ່ ຊາດນີ້ນໍຊ່າງນາຄົ້ນຮົນ
ຊ່າງມີແຕ່ຄວາມທຸກຈົນ ໂລກເມືອງຄົນປ່ຽນແປງວຽນວຸ້ນ
ເກີດມາຄັ້ງນີ້ ຄວາມສົນໂພດບໍ່ເຄີຍເກື້ອກູນ
ຊ້ຳຍັງຂາດຄົນຄ້ຳຈູນ ຂາດຄົນເກື້ອໜູນອູ້ນຊູ

ຂໍ ອະທິຖານໄວ້ວ່າ
ໃນຊາດຈະມາ ບຸນຈົ່ງນຳພາຊ່ວຍຍູ້
ເຖິງແມ່ນຊາດນີ້ ຊີວິດຂ້າຂາດຄົນອູ້ນຊູ
ຂໍບຸນທີ່ເຄີຍເສີນຊູ ຈົ່ງນຳຊ່ວຍຍູ້ໃນຊາດໜ້ານີ້

ອາພັບແທ້ຈິງ ຂາດຄົນຫຼີງລ່ຳແລລຽງດູ
ໃຜເດ່ຈະມາຊ່ວຍຊູ ຂ້າຢາກຮູ້ຢູ່ທຸກວັນນີ້
ຈະມີໃຜແທ້ ຫວັງຢາກຊ່ວຍໃຫ້ຄວາມພັກດີ
ເຖິງແມ່ນຜູ້ໃດປຣານີ ຂໍມອບຊີວີຈົນຟ້າມະລາຍ.

# ຝັນ

ສາຍຝັນ ຫຼັ້ງລົງອີກແລ້ວ
ນ້ອງແກ້ວ ເຈົ້າຢູ່ຫົນໃດ ?
ຄືນທີ່ ເຮົາສອງສຸກໃຈ
ຕ່າງຫວັ່ນໄຫວ ກາງສາຍຝັນ

ເຫັນຝັນ ຕົກມາຂ້ານີ້
ແສນເສົ້າ ໃສກີເຫຼືອທົນ
ຟ້າວແຕ່ ນອງຫາໜ້ານົນ
ຄອຍຈົນຝັນ ຜ່ານຟ້າໄປ

ຝັນນີ້ ບໍ່ມີນ້ອງຢູ່
ຮ່ວມຮຽງ ຊື່ນຊູຊິດໃກ້
ຝັນນີ້ ກໍໝົດຄວາມໝາຍ
ສຸດທີ່ຮັກ ເຈົ້າຢູ່ໃສ ? ຢູ່ກັບໃຜ ຈຶ່ງບໍ່ມາ

ສາຍຝັນ ຜ່ານໄປອີກຄ້ອຍ
ທີ່ຮັກຂ້າ ຄອຍຫາຍໜ້າ
ມີສຸກ ແລ້ວຫຼືແກ້ວຕາ ?
ຈຶ່ງປ່ອຍຂ້າ ໃສກຣະທົນ.

# ອ້າຍຂໍເວລາສອງປີ

ອ້າຍຂໍ ເວລາສອງປີ
ຄົນດີ ນ້ອງຄົງຄອຍໄດ້
ສອງປີ ທີ່ອ້າຍຈາກໄປ
ຈາກໄປ ເພື່ອການສຶກສາ

ອ້າຍຂໍ ເວລາສອງປີ
ຄົນດີ ນ້ອງຄົງຄອຍຖ້າ
ສອງປີ ອ້າຍຈະກັບມາ
ກັບມາ ຫາຍອດຊີວີ

ອະນາຄົດ ຈະກ້າວໄປໄກ
ເມື່ອເຮົາໄດ້ ມີການສຶກສາດີ
ຫາກວັນໃດ ອ້າຍຮຽນຈົບສອງປີ
ແລ້ວເຮົາຈະມີ ຊີວິດອັນແຈ່ມໃສ

ອ້າຍຂໍ ເວລາສອງປີ
ຄົນດີ ນ້ອງຢ່າມີໃໝ່
ທີ່ຮັກ ນ້ອງຢ່າທຳລາຍ
ປ່ຽນໃຈ ຈາກທາງຮັກເຮົາ.

# ເອື້ອມບໍ່ເຖິງ

ລູກນາຍພັນ ຫຼານສາວນາຍພົນ
ງາມເຫຼືອລົ້ນ ງາມຈົນຕິດຕາ
ເຈົ້າເປັນຍິງ ທີ່ໂສພາ (ຊ້ຳ)
ເໝືອນນາງຟ້າ ເບື້ອງບົນສວັນ

ລູກນາຍພັນ ຫຼານສາວນາຍພົນ
ງາມເຫຼືອລົ້ນ ສົມຄຳກ່າວຂານ
ບໍ່ມີຍິງ ໃດທຽບທັນ (ຊ້ຳ)
ລູກນາຍພັນ ຊ່າງງາມຕິດໃຈ

ຄິດ ຢູ່ບໍ່ເອີ້ນອາຍ
ຢາກບອກ ຂວັນໃຈ
ວ່າອ້າຍນີ້ຮັກ ອ້າຍນີ້ຮັກ
ຮັກນ້ອງຈິງ ຍິ່ງອື່ນໃດ.

# ເຮົາຮັກກັນໄດ້

ເຖິງເຮົາ　　　ຈະມີຖານະຕ່າງກັນ
ບໍ່ເຫັນສຳຄັນ　　ເຣື່ອງຊັ້ນວັນນະສັກສີ
ຈະເປັນນາງຟ້າ　　ທິດາເສດຖີ
ຢ່າງໃດກໍດີ　　　ເຮົາຕ້ອງຮັກກັນໄດ້

ເຖິງເຮົາ　　　ຈະມີສັກສີຕ່າງກັນ
ບໍ່ເຫັນສຳຄັນ　　ສອງເຮົາກໍຮັກກັນໄດ້
ຂໍແຕ່ເຮົານັ້ນ　　ຮັກໝັ້ນຈິງໃຈ
ອອກຈາກຫົວໃຈ　ອອກຈາກດວງຮືດີ

ເຮົາອາດຈະຮັກ　　ເຮົາຮັກກັນໄດ້
ເຮົາອາດຈະຮັກ　　ເຮົາຮັກກັນໄປ　　ໄດ້ນານປີ
ເຮົາອາດຈະຮັກ　　ເຮົາຮັກກັນໄປ　　ຊົ່ວຊີວີ
ຖ້າຫາກເຮົາມີ　　ຈິດໃຈ　　　　ນິສັຍກົງກັນ

ຂໍພຽງ　　　　ແຕ່ເຮົາຮັກກັນດ້ວຍໃຈ
ຈະຢູ່ແຫ່ງໃດ　　ຫົນໃດບໍ່ເຫັນສຳຄັນ
ຈະຢູ່ນະຮົກ　　　ຫຼືບົນສວັນ
ຄວາມຮັກຜູກພັນ　ເຮົາຮັກກັນຈົນຕາຍ.

# ຮັກໃຜດີ ?

ເອື້ອຍກໍງາມ ນ້ອງກໍງາມ ຈະຮັກໃຜດີ ?

ເອື້ອຍນັ້ນງາມ ງາມແທ້ ງາມນິສເນ່
ງາມແທ້ເດ່ ຍາມຍີ້ມ ກໍຫວານຈັບໃຈ
ສອງພວງແກ້ມ ເບັ້ງບານ ເໝືອນດວງດອກໄມ້
ໜ້າຮັກໄດ່ ໜ້າເຊີຍຊົມ ດົນແກ້ມນັ້ນ
ໄດ້ແຕ່ຄຶດ ຄ່ຳຄອນ ເພີ້ລຳພັນ
ໂຖ ຈອນຂວັນ ເຈົ້າຊ່າງງາມ ງາມທັງນ້ຳໃຈ

ນ້ອງນັ້ນງາມ ເໝືອນເອື້ອຍ ງາມບໍ່ນິຜິດ
ໄດ້ແຕ່ຄຶດ ບໍ່ຮູ້ ຈະຕັດສິນໃຈ
ສອງນ້ອງເອື້ອຍ ຊ່າງງາມ ງາມຄູ່ກັນໄປ
ຮັກເອື້ອຍໃຫຍ່ ຍັງນາງນ້ອຍ ຜູ້ໂສພາ
ອຸກໃຈໜັກ ເມື່ອຮັກ ມີບັນຫາ
ຍາກໜັກໜາ ເພາະສອງຄົນ ນັ້ນງາມເໝືອນກັນ.

# ເພື່ອນກິນເພື່ອນຕາຍ

ເພື່ອນກິນ ນັ້ນມີມາກມາຍ
ເພື່ອນຕາຍ ຫາຍາກໜັກໜາ
ເພື່ອນກິນ ເຂົາເຫັນແກ່ໜ້າ
ເພື່ອນກິນເຫັນແກ່ເງິນຕຣາ ຖານະແລະສັກສີ

ເພື່ອນກິນ ນັ້ນແລະຕົວການ
ທ່ຽວຜານ ປອກລອກສິ້ນດີ
ໄດ້ກິນ ເຂົາຮ້ອງນ້ອງພີ່
ໝົດກິນເຂົາກໍຫ່າງໜີ ບໍ່ມີແນ່ນເຍື່ອໄຍ

ເພື່ອນກິນ ນັ້ນບໍ່ແນ່ນອນ
ຈາກຈອນ ເມື່ອເຮົາຍາກໄຮ້
ເພື່ອນກິນ ເຂົາເຫັນແກ່ໄດ້
ໝົດກິນເຂົາກໍຈາກໄປ ເໝືອນຕາຍໄປຈາກກັນ

ເພື່ອນຕາຍ ເຂົາຄືເພື່ອນແທ້
ບໍ່ແປ ປ່ຽນໃຈເທຫັນ
ເພື່ອນຕາຍ ຊື່ຕຣົງຄົງໝັ້ນ
ຍາມເຮົາເສົ້າໂສກຈາບັນ ເພື່ອນແທ້ຊ່ວຍປອບໃຈ.

# ຍິ້ມເຖີດນ້ອງຢ່າຮ້ອງໄຫ້

ສຸຣິຍາ ຈາກຟ້າແກ້ຄືນກໍກັບ
ແຕ່ນະພາ ເມຄາມືດມົນຍັງຈາງຫາຍ
ແລ້ວເຫດໃດ ນ້ອງຈະໄປເສົ້າໂສກເສັຽໃຈ ?
ມົວຫ່ອງໃຍ ໃບໜ້າຂື່ນຂົມ

ຢຸດເຖີດໜາ ດອກຟ້ານ້ອງຢ່າຮ້ອງໄຫ້
ຢ່າເສັຽໃຈ ເມື່ອຄົນຮັກມາຢຸດຊົມ
ຕັ້ງຄວາມຫວັງ ແລ້ວຊີວັງນ້ອງຈະສຸກສົມ
ສິ້ນຣະທົມ ໃບໜ້າແຈ່ມສີ

ໂປຣດຈົ່ງຄິດ ເຫັນອ້າຍທີ່ໄຝ່ຮັກ
ໝັ້ນສມັກ ຮັກນ້ອງຄົນດີ
ເຖີງນ້ອງນາງ ມີຊາຍໜ່າຍໜີ
ອ້າຍຂໍມອບຊີວີ ແທນຊາຍໃຈແຂງ

ຍິ້ມເຖີດໜາ ທ້ອງຟ້າກໍຈະສວ່າງ
ສິ່ງທີ່ຫວັງ ໃນໃຈແນ່ນອນກໍເຢັນແສງ
ຂໍວຸທິດ ຂໍບັນເລັງຮັກມາສຸດແຮງ
ດາວສິ້ນແສງ ອ້າຍຈຶ່ງສິ້ນຮັກ.

# ອ້າຍຊື່ອຢ່າງໃດ ?

ຢູ່ຫ່າງພຽງໃດ ອ້າຍກໍໄປເຖິງນາງ
ເພາະຢາກພົບນາງ ເພາະຄວາມຮັກນາງໜັກໜາ
ແຕ່ເຫດໃດໜໍ ນ້ອງຈຶ່ງຫຼົບໜ້າ
ປ່ອຍອ້າຍເສົ້າອຸຣາ ໄຮ້ຄ່າຊີວິດ

ບຸກປ່າຂ້າມເຂົາ ອ້າຍເຝົ້າອິດສາໄປ
ໂຖ ໜ້ານ້ອຍໃຈ ເພາະນາງໜີໄກ ໄຮ້ຄິດ
ຈວບຈົນບັດນີ້ ຕ້ອງທົນເຈັບຈິດ
ເມື່ອຮູ້ໂຕວ່າຫຼົງຜິດ ຮັກນາງຂ້າງດຽວ

ອ້າຍຈົນຍາກໄຮ້ ? ຫຼືຊື່ອຢ່າງໃດ ?
ນາງຈຶ່ງໜີໄປບໍ່ກຽວ ປ່ອຍອ້າຍຕຣົມຣະທົມຄົນດຽວ
ສິ້ນຄວາມຮັກ ສິ້ນຄວາມກົມກຽວ
ນາງບໍ່ຫຼຽວ ບໍ່ແລອ້າຍເລີຍ

ເມື່ອນາງບໍ່ຮັກ ກໍຄວນເປັນມິດກັນ
ສາຍສີ່ສັມພັນ ກໍຄວນໃຫ້ມັນດັ່ງເຄີຍ
ເມື່ອຍາມພົບເຫັນ ຢ່າທຳໜ້າເສີຍ
ຢ່າງນ້ອຍກໍຄວນຈະເອີ່ຍ ທັກທາຍຈັກຄຳ.

# ປາກພົບຄັ້ງສຸດທ້າຍ

ອ້າຍຢາກພົບນ້ອງ ເປັນຄັ້ງສຸດທ້າຍ
ກ່ອນນ້ອງຈະກາຍ ເປັນຂອງຄົນອື່ນ
ອ້າຍຢາກອີງແອບແນບຊິດ ອ້າຍຢາກຈູບພິດເຊີຍຊື່ນ
ຢາກຢູ່ຢ່າງຄືນ ເມື່ອຄັ້ງເຮົາສອງ ຮັກກັນ

ອ້າຍເຝົ້າຄິດເຖິງ ຢູ່ທຸກເວລາ
ຢາກພົບແກ້ວຕາ ຈົນທໍ່ໃຈສັ່ນ
ນ້ອງຖືກຂັດຂວາງເອົາໄວ້ ຫຼືວ່າໃຈນ້ອງລືມນັ້ນ
ຫຼືສິ້ນສິງສານ ຈຶ່ງບໍ່ມາພົບ ດັ່ງເຄີຍ

ນ້ອງຄົງເພີນ ກັບຄົນຮັກໃໝ່
ມີສຸກສົມໃຈ ແລ້ວຫຼືຈຶ່ງເສີຍ
ບໍ່ຍອມພົບອ້າຍ ບໍ່ໄດ້ສັ່ງລາກັນເລີຍ
ອ້າຍຜິດເລື່ອງໃດນ້ອງເອີຍ ຮັກຈຶ່ງເຫີຍຫາຍຊື່ນ

ອ້າຍຢາກພົບນ້ອງ ເປັນຄັ້ງສຸດທ້າຍ
ຫາກນ້ອງຈະໄປ ເປັນຂອງຄົນອື່ນ
ອ້າຍຢາກບອກນາງໃຫ້ຮູ້ ວ່າຢູ່ຢ່າງທຸກຂົມຂື່ນ
ຫຼັບນອນທົນຝືນ ຫ້າມໃຈຫຼືກຄິດ ຫ່ວງນາງ.

# ແກ້ວລືມຄອນ

ແກ້ວເອີຍ    ເຈົ້າເປັນຫຍັງລືມຄອນ ?
ຫຼົງລືມບ່ອນ    ເຄີຍນອນເຄີຍຢູ່ອາສັຍ
ຈາກຄອນນີ້    ແກ້ວໜີໄປມີຄອນໃໝ່
ເຈົ້າຄຽດເຈົ້າຊັງຜູ້ໃດ ?    ໜີໄປຢູ່ໃສໜໍເຈົ້າ ?

ແກ້ວເອີຍ    ເຈົ້າເປັນຫຍັງລືມຮັງ ?
ບໍ່ໄປສັ່ງ    ລືມຮັງເມື່ອຄັ້ງກ່ອນເກົ່າ
ຄຽດໃຫ້ໃຜ    ແຄ້ນໃຈອັນໃດໜໍເຈົ້າ ?
ຫຼືມີໃໝ່ແລ້ວລືມເຮົາ    ນ້ອງເຈົ້າແມ່ສາຣິກາ

ຈາກໄປແລ້ວ    ໂອໜໍແກ້ວລືມຄອນ
ລືມທຸກບ່ອນ    ລືມຄອນລືມຄົນລ້ຽງມາ
ລືມເຂົ້ານ້ຳ    ກົງທອງເຄີຍຢູ່ສຸກຂາ
ໄປແລ້ວບໍ່ຫວນກັບມາ    ແມ່ສາຣິກາຫຼົງຮັງ

ແກ້ວເອີຍ    ຫາກສິ້ນຄົນອູ້ມຊູ
ຈົ່ງຄືນສູ່    ຄອນເດີມເຄີຍຢູ່ແຕ່ຫຼັງ
ຍັງຄອງຖ້າ    ແມ່ສາຣິກາຫຼົງຮັງ
ສີ່ຫ້ອງຫົວໃຈອ້າຍຍັງ    ເປັນຮັງຕ້ອນຮັບແກ້ວເອີຍ.

# ວຽງສວັນ

ວຽງສວັນ ນັ້ນງາມແທ້ແມ່ເອີຍ
ສິນດັ່ງຄຳຊິນເຊີຍ ເຂົາເອີ່ຍກັນວ່າວຽງທອງ
ເມື່ອຍາມໃດ ເມກໄຫຼລອຍລະລ່ອງ
ບໍ່ເຫັນໜ້ານວນນ້ອງ ແລ້ວຕ້ອງຊວນໃຫ້ອາວອນ

ງາມຜ່ອງສີ ເໜືອນາຣີໃດໆ
ສ້າງພົນບຸນປາງໃດ ? ເສີນສົ່ງໃຫ້ເຈົ້າງາມງອນ
ເດັ່ນພຽງໃດ ຫ້ອງຫົວໃຈເຈົ້າອ້າງບ່ອນ
ອ້າຍຂາດຄູ່ຊ້ອນ ຍາມນອນແລ້ວເສົ້າໂສກສັນ

ນວນນ້ອງ ວຽງສວັນຄົນດີ
ເຈົ້າເປັນເທພີ ຂວັນເມືອງແຫ່ງນີ້ນານານ
ເນື້ອນວນຂາວຜ່ອງ ສອງພວງແກ້ມເບັ່ງບານ
ງາມຍິ່ງໃດບໍ່ປານ ຍິ້ມຫວານຣະຣື້ນຊື່ນໃຈ

ເມືອງສວັນ ຝັນເຈົ້າໃຫ້ງາມເດັ່ນ
ແມ່ນຊາຍໃດໄດ້ເຫັນ ແລ້ວຢາກເປັນເພື່ອນດວງໃຈ
ອາສນາ ຈຶ່ງນ້ອມນຳມາຄຽງໃກ້
ສິນດັ່ງດວງໃຈ ໄຝ່ຝັນຮັກນາງແມ່ນອນ.

# ຊຽງຂວາງແຫ່ງຄວາມຫຼັງ

ຄັ້ງນຶ່ງເຄີຍມາ ເພີ່ງພາຍັງຖິ່ນ
ຊຽງຂວາງວຽງທອງທານິນ ເປັນຖິ່ນສວຍງາມທຽມຟ້າ
ແຕ່ມາບັດນີ້ ຕ້ອງຈຳພາກໄປໄກຕາ
ຍັງຄຶດເຖິງດວງໜ້າ ບໍ່ເລືອນລາຈາກໃຈ

ພາບແຫ່ງຄວາມຫຼັງ ຍຶດຝັງໃຈໝັ້ນ
ທີ່ຂືວທົວຊຽງສາຍັນ ແອບຂວັນນ້ອງນາງຄຽງໃກ້
ສຸກໃຈຍິ່ງລົ້ນ ຝາກຄຳຫວານຊຶ້ງຕຣຶງໃຈ
ລົມເຢັນພັດມາຄັ້ງໃດ ກອດນ້ອງໄວ້ໃຫ້ອຸ່ນນິທຣາ

ຊຽງຂວາງ ດິນແດນແສນງາມແຫ່ງນີ້
ເຂົາໂຜດດ້ວຍຜ່ານອາຣີ ເປີດເປັ່ງສີສວຍງາມໃນຕາ
ເຫັນໄຜ່ຍູ້ໂອນ ຍອດສົນຕ້ອງລົມຍິ່ງເສົ້າໜັກໜາ
ດັ່ງສ້ຽມໜາມຝັງໃນອຸຣາ ຈຳຈາກລາດັ່ງສາຍນະທີ

ຕ້ອງຈາກໄປແລ້ວ ແກ້ວເອີຍລາກ່ອນ
ຍັງຝັງຮັກໃນບັງອອນ ຈຳຈອນຍ້ອນກັນຂອງພີ່
ຫາກບຸນສ້າງສົມ ເຄີຍທຳຮ່ວມປາຣະມີ
ຄົງຄືນຄອບຄອງເທວີ ເປັນສີແມ່ເຮືອນຂອງຮຽມ.

# ຮັກສາວເມືອງເໜືອ

ໂອເມືອງເໜືອ ເມືອງໜາວສາວງາມໂສພາ
ຄົງເປັນເພາະອາສນາ ເປັນບຸນຕາໄດ້ມາພົບເຈົ້າ
ເຫັນດອຍພູເຂົາ ເຈົ້າງາມບໍ່ມີອັນເສົ້າ
ທິວທັດປ່າດົງໄຂດເຂົາ ຫາໃດເທົ່າທຽມທັນ

ໂອເມືອງເໜືອ ເມືອງໜາວໆເຢັນກາຍາ
ໜາວສັ່ນເຖິງດວງອຸຣາ ຍາມເມື່ອມາເຖິງຖິ່ນ
ເຝື້ອນ້ອຍລອຍລ່ອງ ຕາມຮ່ອງພູຜາໜ້າດິນ
ເບິ່ງໄປກຸ້ມໄປທົ່ວຖິ່ນ ເຢັນສະທ້ອນໃນດວງໃຈ

ສາວ ເຈົ້າກໍງາມຕິດຕາ
ນ້ອງປຽບດັ່ງດວງມາລາ ຕາມນະພາງາມຜ່ອງ
ຫາກແມ່ນໄດ້ນ້ອງ ມາຄອງເປັນຄູ່ຄຽງສອງ
ອ້າຍຄົງຈະສຸກສົມປອງ ໄດ້ເປັນເຈົ້າຂອງດອກຟ້າເມືອງເໜືອ

ໂອເມືອງເໜືອ ຄິດເຖິງເມື່ອຍາມຈາກໄປ
ຄິດຮອດແມ່ຍອດດວງໃຈທີ່ສອງເຮົາໄດ້ສ້າງຮັກກັນມາ
ບັດນີ້ຈາກໄປ ຈາກໄປໄກສຸດສາຍຕາ
ຝາກຮັກຝາກດວງອຸຣາ ຈົນຊົ່ວຊີວາບໍ່ລືມເມືອງເໜືອ.

# ເຫັນໃຈສາວອົພຍົບ

ເຫັນໃຈ ສາວອົພຍົບຫຼົບພັຍ
ນ້ຳຕາທຸກຄືນຫຼັ່ງໄຫຼ ເມື່ອໄດ້ໄກພັດບ້ານເມືອງມາ
ເມື່ອໄດ້ມາເຫັນ ຈົນເກືອບຈະຫຼັ່ງນ້ຳຕາ
ສົງສານແສນເວທນາ ອົພຍົບມາໜີໄກເມືອງບ້ານ

ເຫັນໃຈ ສາວອົພຍົບຫຼົບໜີ
ຍ້ອນມີໝູ່ມານຮາວີ ຈຶ່ງຜ່າຍໜີພັດຖິ່ນສຖານ
ມາຢູ່ອາສັຍ ຫຼົບພັຍຢູ່ທາງວຽງຈັນ
ໝູ່ນວຽງເຫັນໃຈຈອນຂວັນ ຈຶ່ງຮ້ອງເພັງຄອນກ່ອນທົວໃຈເສົ້າ

ສາວເຜົ່າແມ້ວ ເຜົ່າຢ້າວອີກເຜົ່າລາວເທິງ
ທີ່ອົພຍົບມາເທິງ ຍັງຄະນຶງຄິດເຖິງບ້ານເກົ່າ
ມາຢູ່ວຽງພີ້ ກໍເໝືອນບ້ານເກີດພວກເຮົາ
ພີ່ນ້ອງຢ່າໄດ້ທ່ອນເຫງົາ ຢ່າໂສກເສົ້າເສັຽໃຈ

ຫຼາຍປີ ທີ່ອົພຍົບຫຼົບມາ
ພັດພາກງົວຄວາຍໄຮ່ນາ ຈາກບ້ານມາດ້ອຍຄວາມຫ່ວງໃຍ
ບ້ານປ່າດອນເຂົາ ສາວເຈົ້າບໍ່ອາດລືມໄລ
ທາກຍາມບ້ານເມືອງສິ້ນພັຍຄົງໄດ້ຄືນໄປຖິ່ນຖານບ້ານເຈົ້າ.

# ສຽງຄອນສາວອົພຍົບ

ນ້ຳຕາສາວອົພຍົບຫຼົບພັຍ ຣະທົມຂົມຂື່ນດວງໃຈ
ເມື່ອໄດ້ໄກ ພັດບ້ານເມືອງມາ
ເມື່ອອ້າຍມາເຫັນ ບໍ່ເອີ້ນປາກຫຼັ່ງນ້ຳຕາ
ເຫັນໃຈນ້ອງອົພຍົບມາ ຈາກບ້ານມາດ້ອຍໃຈສະທ້ານ

ຕ້ອງຈຳໃຈຈາກ ລາພາກຈາກໜີ
ຍ້ອນມີສະຕູຣາວີ ຈຶ່ງພ່າຍໜີພັດຖິ່ນສຖານ
ມາຢູ່ອາສັຍ ຫຼົບພັຍຢູ່ທາງວຽງຈັນ
ໝູ່ນວຽງສິ້ນຄວາມສົງສານ ຈຶ່ງຮ້ອງເພັງຄອນຕໍ່ຫົວໃຈເຈົ້າ

ນ້ອງເຜົ່ານີ້ງ ເຜົ່າຍ້າວອີກເຜົ່າລາວເທີງ
ທີ່ອົພຍົບມາເຖິງ ຍັງຄະນຶງຄິດເຖິງບ້ານເກົ່າ
ມາຢູ່ວຽງນີ້ ກໍເໝືອນບ້ານເກີດພວກເຮົາ
ພວກນ້ອງບໍ່ໄດ້ຫງອຍເຫງົາ ເພາະມີເຈົ້າເປັນທ່ອງບໍ່ອາຍ

ຫຼາຍປີທີ່ຈາກ ຖິ່ນຖານບ້ານມາ
ພັດພາກງົວຄວາຍໄຮ່ນາ ຈາກປ້າອາດ້ອຍຄວາມທ່ອງໃຍ
ເຖິງຢູ່ປ່າເຂົາ ພວກເຮົາບໍ່ເຄີຍລືມໄລ
ຫາກຍາມບ້ານເມືອງສິ້ນພັຍ ຄົງໄດ້ຄືນໄປຖິ່ນຖານບ້ານເກົ່າ

# ບ້ານໂພນ

ບ້ານໂພນ　　ຍັງຝັງຫົວໃຈອ້າຍຢູ່
ຄັ້ງເຄີຍຄຽງຄູ່　　ຊື່ນຊູຄຽງໃກ້ນອນນາງ
ຈາກເຈົ້າມາ　　ນ້ຳຕາຂອງອ້າຍລິນຫຼັ່ງ
ແສນຮັກແສນຫ່ວງນ້ອງນາງ　　ຄວາມຫຼັງຝັງໃຈໜຽວແໜ້ນ

ບ້ານໂພນ　　ເປັນໂພນຝັງໃຈອ້າຍຢູ່
ຮ່ວມຮຽງຄຽງຄູ່　　ຊື່ນຊູກັບນ້ອງໝັ້ນແກ່ວນ
ຮ້ອງເພັງມາ　　ຫົວໃຈຝາກໄວ້ໃຫ້ແທນ
ບ້ານໂພນຝັງໃຈໜຽວແໜ້ນ　　ເປັນແຟນກັບນ້ອງຈົນຕາຍ

ເນີ້ອງໂພນໂຮງ　　ບ້ານໂພນອ້າຍວ່າເປັນນຶ່ງ
ສາວງາມຊາບຊຶ້ງ　　ດູດດຶງຫົວໃຈຂອງອ້າຍ
ຢູ່ວຽງຈັນ　　ທຸກວັນຄິດເຖິງບໍ່ວາຍ
ຍາມນອນໄດ້ແຕ່ຫຼັບໄຫຼ　　ນອນຫຼັບໄປອ້າຍຝັນເຫັນໜ້າ

ບ້ານໂພນ　　ບໍ່ດົນອ້າຍຄືນມາຢູ່
ຂໍພຽງແຕ່ຊູ້　　ຮັກຢູ່ຢ່າໄດ້ລືມລາ
ຝາກສຽງເພັງ　　ບັນເລງກ່ອນນ້ອງນິທຣາ
ປີນີ້ຫຼືວ່າປີໜ້າ　　ອ້າຍຈະມາສູ່ຂໍນອນນາງ.

# ຄຶດຮອດຄວາມຮັກ

ຄຶດຮອດຄວາມຮັກ ແລ້ວນອນບໍ່ຫຼັບ
ໄດ້ແຕ່ນັ່ງນັບ ເວລານາທີ
ຈັກອີກຈັກເດືອນ ຈັກອີກຈັກປີ
ຈະຮອດຮຶກດີ ພິທີວິວາມົງຄົນ

ຄຶດຮອດຄວາມຮັກ ແລ້ວນອນບໍ່ໄດ້
ຮູ້ສຶກລົ້ນຄາຍ ກາຍໃຈເຫຼືອທົນ
ຈັກອີກຈັກແລ້ງ ຈັກອີກຈັກຝົນ
ໜາວນີ້ຄົງທົນ ຕໍ່ໄປບໍ່ໄຫວຕາຍແນ່

ລົມແລ້ງ ລົມຝົນ
ລົມໜາວລົມຮ້ອນ ພັດວີ່ພັດວອນພັດຈອນລັບແລ
ລົມປາກລົມໃຈ ໃຜຈິງຈັງແດ່
ຂໍທານຂໍແຜ່ ຈັກຄົນແດ່ເດ່

ຄຶດຮອດຄວາມຮັກ ຫົວໃຈຕຶກຕັກ
ໃຈເຕັ້ນຄຶກຄັກ ເໝືອນຈັກລົດເພ
ຢ້ານແຕ່ຄວາມຮັກ ຊັກຕົກທະເລ
ຢ້ານຫົວໃຈເພ ຢ້ານເຊລົງເຫວເຖິງຕາຍ.

# ພຽງແຕ່ຄຶດ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ເຄີຍລັ່ນປາກ ກັບໃຜ
ທ້ອນໂຮມຄວາມຄຶດ ເກັບໄວ້ໃນໃຈ
ເຫັນນ້ອງເທື່ອໃດ ຫົວໃຈມັນເຕັ້ນ ຕຶກຕັກ ໆ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ເຄີຍຝັນວ່າ ຈະຮັກ
ຢ້ານນ້ອງຕອບມາ ວ່າບໍ່ຮູ້ຈັກ
ຄວາມນັ້ນມັນຍາກ ມັນແສນລຳບາກຈະບອກໃຫ້ຟັງ

ແບກຄວາມຄຶດໄວ້ ໃນໃຈດົນແລ້ວ
ລຽນກັນເປັນແຖວ ຢູ່ໃນຄວາມຫວັງ
ຄຶດໄປຄຶດມາ ຢ້ານບໍ່ມີທາງ
ຫົວໃຈມັນຄອນຄາງ ຄຶດຢາກກືນກິນເສັ່ງເລີຍ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ຕ້ອງໄຫວຫວັ່ນ ຫຍັງເລີຍ
ຄຶດຫຼິ້ນຄຶດຫົວ ໃຫ້ໃຈສະເບີຍ
ແທ້ຈິງບໍ່ເຄີຍ ຊິເອົ້າຊິເອີ່ຍໄດ້ພຽງແຕ່ຄຶດ.

# ຫນຸ່ມໆແຫນ້ມໆ

ໜຸ່ມໆ ແໜ້ມໆນະນ້ອງ
ບໍ່ຢາກຈອງ ໄອ້ເປັນພືອຫວະ ?
ປີນີ້ ອ້າຍອາຍຸຊາວກວ່າ
ທຳໄຮ່ໄຖນາ ຫາປາລ້ຽງຕົນ

ປະສາດ ອ້າຍກໍມີສອງຫຼັງ
ໄປຮດຟັງ ອ້າຍໄດ້ຢູ່ເຮືອນຄືອ
ຣົດໂດຍສານ ອ້າຍມີໄປທຶ່ອ
ນ້ອງຢ່າຫວັ້ນກືອ ຢ່າເມືອນ້ອຍໃຈ

ເຫຼົ້າ ອ້າຍກໍບໍ່ກິນ
ເຮໂຣອິນ ອ້າຍກໍສູບບໍ່ໄດ້
ການພະນັນ ອຸ໋ຍ ແຮງບໍ່ໃກ້
ສາບານກັນໄດ້ ບໍ່ເຄີຍ ບໍ່ເຄີຍ

ເປົ່າປ່ຽວ ດຽວດາຍໃຈເຫງົາ
ອ້າຍຢາກເອົາ ນ້ອງໄອ້ເປັນຄູ່ເຊີຍ
ມັກເຈົ້າຫຼາຍ ອິດບໍ່ໄຫວແລ້ວເອີ່ຍ
ອ້າຍຢາກເປັນເຂີຍ ເປັນເຂີຍພໍ່ນາງ.

# ເທວີຫຼົງຟ້າ

ບໍ່ເຫັນ ໃຜງາມປານເຈົ້າ
ນ້ອງສາວ ມີແຟນແລ້ວຫຼືຍັງ ?
ຫາກເດີນດຽວ ຂໍທ່ຽວຮ່ວມທາງ
ຈະຄອຍຣະວັງ ກັ້ນພັຍໃຫ້ດອກໜາ

ຄຸ້ມໃດ ໜໍນາງນ້ອງຢູ່ ?
ຢາກຮູ້ ແຕ່ຕອນໄດ້ເຫັນໜ້າ
ນ້ອງເປັນຄົນ ຫຼືເປັນເທວະດາ ?
ງາມປານນາງຟ້າ ທີ່ລົງມາເມືອງຄົນ

ຕິດຕາ ຕິດອີກຕິດໃຈ
ຈັ່ງແນ່ນງາມຫຼາຍ ເບິ່ງໄປດົນໆ
ຢາກເປັນເຈົ້າຂອງ ນ້ອງເດ່ໜ້າມົນ
ໂປຣດຮັບຊາຍຈົນ ເໝືອນຄົນເປັນທາດແຫ່ງໃຈ

ນ້ອງສາວ ຫຼຽວມາພີ້ແດ່
ຢ່າແລ ໄປຫາຜູ້ອື່ນຫຼາຍ
ນ້ອງຊິໄປ ຫຼືມາທາງໃດ
ຢ່າລືມບອກອ້າຍ ຈະໄດ້ເປັນມືປີນ.

# ຖ້າອ້າຍມີປີກ

ຖ້າອ້າຍມີປີກ ບິນໄດ້ຢ່າງນົກ
ຈະໄບກຈະບິນ ໄປຫາແກ້ວຕາໃຫ້ໄດ້
ເຖິງຈະຢູ່ໃສ ຈະໃກ້ ຈະໄກ
ລຳບາກທຸກຍາກພຽງໃດ ຂໍບິນໄປຢູ່ໃກ້ກັບນ້ອງ

ຖ້າອ້າຍນີ້ເກັ່ງ ປານທິສກັນ
ບໍ່ຢ້ານບໍ່ຫວັ່ນ ວ່າໃຜຈະມາຂັດຂ້ອງ
ຫາກມີຜູ້ໃດ ທຳໃຫ້ໝົ່ນໝອງ
ຊຸກຊ່ອນນ້ອງໄວ້ຄອບຄອງ ອ້າຍຕ້ອງແຍ່ງມາຊື່ນຊົມ

ຖ້າອ້າຍມີລິດ ຢ່າງເທວະດາ
ຈະເສກຄາຖາ ເນດຕານະຫານິຍົມ
ຈະເນຣະມິດ ໃຫ້ເຈົ້າແອວກົມ
ມາຢູ່ໃຫ້ເຊີຍໃຫ້ຊົມ ພິຣົມໄດ້ຕາມແຕ່ໃຈ

ແຕ່ນີ້ອ້າຍເປັນ ຄົນທຳມະດາ
ຈະບິນຂຶ້ນຟ້າ ດຳດິນບິນບິນບໍ່ໄດ້
ໄດ້ແຕ່ມອງຫາ ຍອດຊູ້ຢູ່ໃສ
ທຸກນີ້ຣະທົມຕາຣົມໃຈ ເມື່ອໃດຈະໄດ້ຊື່ນຊົມ.

# ຝົນແຊ່ງແກ່ງລອຍ

ຝົນຕົກ ອ້າຍກໍຍັງກ້າແຂ່ງ
ເຖິງນ້ຳເປັນແກ່ງ ອ້າຍກໍລອຍມາຫາ
ແບກເອົາຄວາມຮັກ ຜ່ານລົມຜ່ານຟ້າ (ຊ້ຳ)
ຢາກພົບແກ້ວຕາ ປານນີ້ນິທຣາຫຼືວ່າຈັ່ງໃດ ?

ນອນແລ້ວ ຫຼືຍັງ ?
ຫຼືວ່ານ້ອງນັ່ງ ນັ່ງລົມກັບໃຜ ?
ສົ່ງສຽງມາຫາ ກ່ອນກາຍ (ຊ້ຳ)
ກ່ອນຂາດໃຈຕາຍ ຂໍໃຫ້ໄດ້ເຫັນໜ້ານາງ

ຝົນຕົກ ອ້າຍກໍຍັງກ້າແຂ່ງ
ເຖິງນ້ຳເປັນແກ່ງ ອ້າຍຍັງລອຍມາໄຫວ
ມັນຊຸກມັນເຊືອນ ຢູ່ເຮືອນບໍ່ໄດ້ (ຊ້ຳ)
ບຸກມາຫາຈົນໄດ້ ຂໍຈົ່ງເຫັນໃຈອ້າຍກ່ອນເຖິດໜາ

ຈິງຫຼື ບໍ່ຈິງ ?
ນ້ອງຍັງທຳນິ້ງ ບໍ່ປາກບໍ່ຈາ
ນັ່ງເສີຍ ບາດເຫັນອ້າຍມາ (ຊ້ຳ)
ແລ້ວໄຮ່ແລ້ວມາ ອ້າຍຂໍອີວາກັບນ້ອງ.

# ຊອຍ

ຂ້ອຍແຕ່ງງານ ນາໄດ້ພຽງນຶ່ງອັນ
ເມື່ອນອນນຳກັນ ຂ້ອຍສຸກສັນເໜືອທຸກສິ່ງ
ແຕ່ຂ້ອຍຕົກໃຈ ເມື່ອນາງເຂົ້ານາແອບອີງ
ທ້ອງນາງນາເໜັງຕິງ ເໝືອນມີສິ່ງມາບິດເບືອນ

ນາງຄິງອາຍ ເພາະແຕ່ງງານໃໝ່ຢ້ານມີທ້ອງ
ອ້າຍຈຶ່ງພານ້ອງ ໄປໂຮງໝໍບໍ່ແຊເຊືອນ
ໝໍກ່າວເອົ້າ ວ່າເມັຽເຈົ້າມີລູກສາມເດືອນ
ພໍໝໍຕັກເຕືອນ ຫົວໃຈຂ້ອຍເລືອນທັນທີ

ໂອຍ ຊອຍເຕັມທົນ
ແຕ່ງງານທັງທົນ ຊ່າງມີລູກກ່ອນຢ່າງນີ້
ເພື່ອນຊາຍຄົນໃດ ຫົວໃຈມັນຊ່າງອັບປີ
ກໍາໄລເອົາໜີ ສ່ອນໜີ້ມອບໄວ້ໃຫ້ກັນ

ຂ້ອຍອຸກໃຈ ຊ່ອຍແກ້ໄຂກໍຈົນປັນຍາ
ຈະຮ້າງຈະປະ ກໍຢ້ານພໍ່ເຖົ້າຈະເຫຼື້ນງານ
ຂ້ອຍຈຶ່ງມາຮ້ອງ ສຽງເພັງທົ່ວຈັກກະວານ
ຖ້າໄດ້ຮອດສອງສາມວັນ ຂ້າຄົງກັ້ນໃຈຕາຍ.

ໂອຍຈັ່ງແມ່ນຊອຍ ແຕ່ງງານມານີ້ດຽວ ເຮັດຈັ່ງໃດໄປມີລູກມາກ່ອນ
ບໍ່ຈັກວ່າໄປມີມາກັບໃຜ ບ້າຕາຍລະເຮົາ.

# ຂາດຄູ່ຮັກ

ຂາດຜູ້ປອງ　　ເປັນຊູ້ຄູ່ໃຈ
ຂາດຄົນຮັກຄົນໄຄ່　　ຂາດມາໄດ້ຫຼາຍເດືອນປີ
ທຸກວັນແສນປ່ຽວ　　ເພື່ອນໃຈຫຼຽວແລບໍ່ມີ
ຕ້ອງທົນເຫງົາຢູ່ຢ່າງນີ້　　ດຸດຣາຕຣີສິ້ນແສງຈັນທຣາ

ຈິດລະເມີ　　ພ່ຳເພີ້ເລື່ອນລອຍ
ອາສນາເຮົານ້ອຍ　　ເຝົ້າຄອຍແຕ່ສິນອຸຣາ
ພຣະອິນພຣະພຣົມ　　ບໍ່ເຄີຍໂນ້ມມາເມດຕາ
ເຫຼືອແຮງຂ້າໝັ່ນບູຊາ　　ໝົດສັດທາແລ້ວອິງເທວັນ

ພົບ　　ແຕ່ຄວາມເມີນເສີຍອ້າງວ້າງ
ທຸກສິ່ງທຸກຢ່າງ　　ຈືດຈາງເໝືອນພາບໃນຝັນ
ຢາກຈະຖາມ　　ພຣະເຈົ້າຜູ້ຊົງຣິດນັ້ນ
ເປັນຫຍັງຈຶ່ງແກ້ງເສກສັນປັ້ນແຕ່ງຂ້າຢູ່ດຽວດາຍ ?

ສິ້ນພະລັງ　　ຈະຫວັງຈະມີ
ອ່ອນຊວງນ້ອຍດວງນີ້　　ທີ່ຈວນຈະສູນດັບໄປ
ຍິ່ງຄິດຍິ່ງເຈັບ　　ແສນຊ້ຳໜາມຮັກປັກໃນ
ໃຜເດ່ໜໍຈະເຫັນໃຈ　　ໃຫ້ຮັກເຮົາພົ້ນຄວາມເສົ້າໝອງ.

# ໜາວປີ້ນີ້ແສນຣະທົມ

ໜາວປີນີ້ ບໍ່ມີນ້ອງຢູ່ຄຽງໝອນ
ໜາວເມື່ອຄາວປີກ່ອນ ມີບັງອອນນອນແນບກາຍາ
ໜາວມາຄັ້ງໃດ ກອດຂວັນໃຈໃຫ້ໜາວອິດສາ
ໜາວໃນປີນີ້ໜາ ຂວັນຕານ້ອງຢູ່ແຫ່ງໃດ ?

ໜາວປີນີ້ ບໍ່ມີນ້ອງຢູ່ຄຽງຂວັນ
ທົວໃຈອ້າຍມັນສັ່ນ ຄຶດເຖິງວັນຄຽງຄູ່ດວງໃຈ
ຍິ່ງລົມໜາວໂບກ ອ້າຍຍິ່ງໂສກຊອກຊ້ຳຊອງໃນ
ອີກຈະນານປານໃດ ຍອດຂວັນໃຈຈະປ້ອນຄືນມາ ?

ໜາວໆຢ່າງນີ້ ຄົນດີນ້ອງຢູ່ຢ່າງໃດ ?
ຫຼືມີຄົນຮັກໃໝ່ ຄອຍເອົາໃຈໃຫ້ອຸ່ນອຸຣາ ?
ຫຼືຍັງຫວ່າງເປົ່າ ໂສກເສົ້າກ້ຳກືນນ້ຳຕາ
ອ້າຍມີແຕ່ເອກາ ນ້ຳຕາໄຫຼຫຼັ່ງອາບປາງ

ໜາວຢ່າງນີ້ ຄົນດີນ້ອງຢູ່ກັບໃຜ ?
ຢູ່ກັບຄົນຮັກໃໝ່ ຫຼືດວງໃຈໝອງໄໝ້ຄອນຄາງ ?
ນ້ອງມີຄວາມສຸກ ຫຼືວ່າທຸກຢ່າງໃດໜໍນາງ ?
ອ້າຍມີແຕ່ອ້າງວ້າງ ນາງເອີຍນາງອ້າຍແສນຣະທົມ.

# ຊັງອ້າຍເຣື່ອງໃດ ?

| | |
|---|---|
| ທີ່ຮັກ | ຫັນໜ້າມາເອີ້ກັນກ່ອນ |
| ນ້ອງຢ່າໄດ້ຟ້າວຕັດຮອນ | ຫາແຕ່ບ່ອນແຍກທາງໜີໄປ |
| ນ້ອງຊັງ | ອ້າຍນີ້ເຣື່ອງໃດ ? |
| ເປັນຫຍັງບໍ່ໄຂ ? | ບອກອ້າຍຈັກຄຳ |
| | |
| ທີ່ຮັກ | ຫຼືນ້ອງມີຄູ່ຄອງໃໝ່ ? |
| ນ້ອງຈຶ່ງໄດ້ຕັດສິນໃຈ | ເຮັດໃຫ້ອ້າຍມີໃຈຊອກຊ້ຳ |
| ເບິ່ງໜ້າ | ເສີຍໆທຸກຍາມ |
| ຫຼືວ່າຄິນງານ | ຊັງອ້າຍເຣື່ອງຫຍັງ ? |
| | |
| ບອກມາ | ບອກມາເຖີດນ້ອງ |
| ຫົວໃຈສີ່ຫ້ອງ | ແບ່ງເປັນຫຼາຍທາງ |
| ອ້າຍນີ້ | ບໍ່ຄຽດດອກນາງ |
| ຂໍພຽງແຕ່ທາງ | ນ້ອງນັ້ນບອກມາ |
| | |
| ທີ່ຮັກ | ນ້ອງຊັງອ້າຍນີ້ເຣື່ອງໃດ ? |
| ນ້ອງຈຶ່ງໄດ້ຈາກອ້າຍໄປ | ຫຼືວ່າອ້າຍນີ້ຈົນເງິນຕຣາ |
| ບໍ່ໄດ້ | ພາເພີນອຸຣາ |
| ຫຼືຂວັນຊີວາ | ຊັງອ້າຍເຣື່ອງໃດ ? |

# ດີແລ້ວ ທີ່ນ້ອງໄປຈາກອ້າຍ

ດີແລ້ວ ທີ່ນ້ອງໄປຈາກອ້າຍ
ດີແລ້ວ ທີ່ນ້ອງມີໃໝ່ຄູ່ຄອງ
ຢ່າຄິດ ວ່າອ້າຍນີ້ຈະຂັດຂວາງ
ບໍ່ຫວງ ບໍ່ຫ່ວງບໍ່ມີເສັ່ງດາຍ

ດີແລ້ວ ທີ່ນ້ອງມາແຍກທາງ
ດີແລ້ວ ທີ່ສອງເຮົາຫ່າງກັນໄກ
ຢ່າຄິດ ວ່າອ້າຍນີ້ຈະຫ່ວງໄຍ
ຢ່າຄິດ ວ່າອ້າຍນີ້ຈະໂສກສັນ

ໂລກນີ້
ບໍ່ມີ ພຽງນ້ອງເທົ່ານັ້ນ
ສາວນ້ອຍ ໃຫຍ່ຂຶ້ນທຸກວັນ
ຢ່າຝັນ ວ່າອ້າຍນີ້ຈະເສັ່ງໃຈ

ດີແລ້ວ ທີ່ນ້ອງມາຕັດຮັກ
ດີແລ້ວ ທີ່ນ້ອງມາຈາກອ້າຍໄປ
ຢ່າຄິດ ວ່າອ້າຍນີ້ຈະຫວັ່ນໄຫວ
ຢ່າຄິດ ວ່າອ້າຍນີ້ຈະອາວອນ.

# ລົມໜ້າໜາວ

ລົມໜ້າໜາວ ໂບກໂຊຍເຂົ້າມາ
ໂອ່ ອຸຣາ ອ້າຍສຸດລຳເຄນ
ເຝົ້າແຕ່ຄອຍ ນ້ອງຢູ່ທຸກເອັນ
ບໍ່ມີເອັ້ນ ມີອາຍທ່ອງຫາ

ຮູ້ບໍ່ໜໍ ອ້າຍສຸດຣະທົມ
ສຸດຂື່ນຂົມ ໄດ້ທ່ອງແກ້ວຕາ
ເມື່ອລົມໜາວ ພັດຜ່ານເຂົ້າມາ
ອາສນາ ນ້ອງມາທຳເອນ

ອ້າຍຍອມຮັບ ຄວາມອ່ອນແອ
ຮັກລອງ ຮັກຫຼີ້ນບໍ່ເປັນ
ເຝົ້າແຕ່ຄິດເຫັນ ພາບນອນນ້ອງຢູ່ທຸກວັນ

ນ້ອງບໍ່ໜາວ ຫຼືລົມຢ່າງນີ້
ໂອ່ຄົນດີ ອ້າຍສຸດສະທ້ານ
ຢ້ານຄວາມໜາວ ນີ້ໝົດຄວາມໝາຍ
ຢ້ານຮັກນ້ອງ ໜີໄປຕາມລົມ.

# ເພາະອ້າຍນີ້ລືມນ້ອງບໍ່ລົງ

ເພາະອ້າຍນີ້ ລືມນ້ອງບໍ່ລົງ
ໃຈພະວົງ ຢູ່ທຸກເວລາ
ຮູ້ຕົວດີ ວ່ານ້ອງນັ້ນຊັງນ້ຳໜ້າ
ແຕ່ດ້ອຍວ່າ ອ້າຍນີ້ຮັກນ້ອງເຫຼືອເພີນ

ຮູ້ວ່ານ້ອງ ຊັງອ້າຍເທົ່າໃດ
ແຕ່ຫົວໃຈ ຂອງອ້າຍຍັງເມີນ
ແມ່ນນ້ອງດ່າ ອ້າຍຍັງສຸກໃຈເຫຼືອເກີນ
ເຖິງນ້ອງເມີນ ອ້າຍຍິ່ງຮັກນ້ອງຂຶ້ນໄປ

ກ່ອນນີ້ ອ້າຍເຄີຍຮັກ
ກັບນ້ອງ ມາຄັ້ງນຶ່ງ
ຄວາມຮັກອ້າຍບໍ່ຊື້ງ ນ້ອງຈຶ່ງຫັນປ່ຽນໄປ
ປ່ອຍໃຫ້ອ້າຍຊອກຊ້ຳລະກຳໃນດວງໃຈໃນດວງໃຈໃນດວງໃຈ

ເພາະອ້າຍນີ້ ລືມນ້ອງບໍ່ລົງ
ຄົງພະວົງ ຢ່າງນີ້ເລື້ອຍໄປ
ຮູ້ຕົວດີ ວ່ານ້ອງໝົດຄວາມສົນໃຈ
ຕ້ອງທົນອາຍ ເພາະອ້າຍນີ້ລືມນ້ອງບໍ່ລົງ.

# ອ້າຍບໍ່ປາກບອກ

ອ້າຍບໍ່ປາກບອກ ນ້ອງເລີຍ
ອ້າຍປາກຈະເສີຍ ເສີຍໆໄປຢ່າງນີ້
ໂຖ ເທບເທວີ ອ້າຍສຸດໂສກີ
ຍາມນ້ອງ ໜີໜ້າຫ່າງໄກ

ອ້າຍບໍ່ປາກກັ້ນ ນ້ຳຕາ
ໃຫ້ມັນໄຫຼມາ ໄຫຼມາ ໆຖ້ວມຫົວໃຈ
ໂອ ຍອດຊານອັຍ ອ້າຍບໍ່ປາກໄປ
ຈາກນ້ອງ ແມ່ນອິນາທີ

ຫົວໃຈ ອ້າຍແທບຈະຢຸດເຕັ້ນ
ເມື່ອເຫັນ ນ້ອງມາຫ່າງໜີ
ອີກຍັງຈັກເດືອນ ຫຼືຍັງຈັກປີ
ນ້ອງຈຶ່ງຈະມາ ອີກທີ

ແມ່ນນ້ອງ ໝົດຄວາມເຫັນໃຈ
ນ້ອງໂປຣດຈົ່ງໄປ ໄປໜີໄກໃຫ້ພົ້ນ
ໂຖ ເອີຍໜ້າມົນ ແມ່ນບໍ່ກັງວົນ
ຢ່າງນ້ອຍ ກໍຄິດປຣານີ.

# ຜູ້ຊາຍລວງ

ບໍ່ເຄີຍນຶກຝັນ ວ່າອ້າຍຈະເປັນໄປ
ໂອນ້ຳໃຈຊາຍ ນີ້ໝາຍແຕ່ພຽງລວງ
ບໍ່ເຄີຍໄດ້ຄິດ ວ່າເຮົາເປັນຫ່ວງ
ເຝົ້າຮັກເຝົ້າຫວງ ມາລວງໃຫ້ເຮົາໝອງໃຈ

ໂອໃຈຜູ້ຊາຍ ຄືນ້ຳກິ້ງໃບບອນ
ບໍ່ມີແນ່ນອນ ເໝືອນບອນຖືກລົມໂກວ
ນ້ຳເທິງໃບບອນ ຈະກີ້ງລົງໄປ
ປຽບດັ່ງຜູ້ຊາຍ ບໍ່ມີຫົວໃຈແນ່ນອນ

ປາກບອກ ວ່າຮັກເຮົາຈິງ
ພໍໄດ້ແອບອີງ ປ່ອຍໃຫ້ຍິງຕ້ອງອາວອນ
ໂອໃຈຊາຍເອີຍ ບໍ່ເຄີຍມີຮັກແນ່ນອນ
ມີແຕ່ຫຼອກຫຼອນ ພໍຈາກຈອນແລ້ວກໍໜ່າຍ

ບໍ່ເຄີຍນຶກຝັນ ວ່າອ້າຍຈະລືມຄຳ
ຈະຂໍຈື່ຈຳ ໄປຮອດຈົນວັນຕາຍ
ຈະບໍ່ພະວົງ ຫຼົງຄຳຂອງຊາຍ
ຂໍຈຳຈົນຕາຍ ຜູ້ຊາຍທີ່ໝາຍແຕ່ລວງ.

# ເພາະຮັກດອກຫມາ

ເພາະຮັກດອກໝາ ຂ້າຈຶ່ງເຈັບຊ້ຳ
ໃຈຈຶ່ງຣະກັມ ຖືກເຂົາຂະຍີ້
ຄວາມຮັກສູນສິ້ນ ຄວາມຫວັງປີ້ນປີ້
ນີ້ຫຼືຮັກທີ່ ເຂົາບອກສຸດຈະຮັກຈິງ ?

ເພາະຮັກດອກໝາ ຂ້າຈຶ່ງຕ້ອງອາຍ
ຖືກເຂົາທຳລາຍ ອອດອາຍທຸກສິ່ງ
ນີ້ຫຼືຄວາມຮັກ ອອກຈາກໃຈຍິງ ?
ສິ້ນແລ້ວທຸກສິ່ງ ບອກຮັກແລ້ວກໍທຳເມີນ

ສິນໃຈເຈົ້າແລ້ວ ຫຼືບໍ່ນາງງາມ ?
ທີ່ເຈົ້າທຳ ນັ້ນມັນງາມໜ້າເຫຼືອເກີນ
ຄົນທັງເມືອງ ເຂົາຄົງຈະສັລເສີນ
ວ່າຄວນເອົາ ເຈົ້ານັ້ນມາເປັນຢັ້ງມຢ່າງ

ເພາະຮັກດອກໝາ ຂ້າຈຶ່ງປວດຮ້າວ
ຈິ່ງລືມເຣື່ອງລາວ ຜ່ານມາຕ່າງໆ
ພໍແລ້ວຄວາມຮັກ ອອກຈາກໃຈນາງ
ສິ້ນແລ້ວທຸກຢ່າງ ຄວາມຮັກຂໍສາບແລ້ວເອີຍ.

# ຢ່າປອກອ້າຍເລີຍ

ຢ່າ ຢ່າປອກອ້າຍເລີຍ
ທຳຄວາມຄຸ້ນເຄີຍ ຄ້າຍດັ່ງຈະຮັກ
ພໍອ້າຍສິ້ນໃຈ ນ້ອງບອກບໍ່ຈັກ
ຄວາມຮັກເອີຍ ຄວາມຮັກນາງ ຈິງຫຼືພຽງຮັກຫຼິ້ນ ?

ຢ່າ ຢ່າປອກອ້າຍເລີຍ
ວ່າໃຈນ້ອງຍັງ ຮັກອ້າຍສຸດຄື້ນ
ຍັງຄອງຮັກດຽວ ນັ້ນຢູ່ບໍ່ສິ້ນ
ໂດຟ້າດິນ ເມື່ອສອງວັນ ໃຜຍ່າງຄຽງນ້ອງໄປ

ຮັກ ກໍບອກ
ບໍ່ຮັກ ກໍບອກໃຫ້ຮູ້
ຢ່າມາ ຫາຊູ່
ໃຫ້ໃຈ ອ້າຍຫຼົງຣະວາຍ

ຢ່າ ຢ່າຫຼອກອ້າຍເລີຍ
ເຖິງອ້າຍເປັນຊາຍ ໃຈງ່າຍກວ່າໃຜ
ຍັງຄອງຮັກດຽວ ໄດ້ຢ່າງສົດໃສ
ພໍແລ້ວເອີຍ ຄວາມຮັກລວງ ຂື່ນຮັກໄປກໍຕຣົມ.

# ຄິດເຖິງອັນຜ່ານມາ

ນອງ ນອງນະພາ ຍາມຟ້າຄ່ຳຄອນ
ຫອນ ຫອນຄິດເຖິງ ຍາມເຮົາຮັກກັນ

ນ້ອງ ແນບເອີກອ້າຍ ເພາະເກງຟ້າລັ່ນ
ຝັນ ຕົກລົງພໍາ ທໍາໃຫ້ສຸກໃຈ

ແຕ່ ມາ ບັດນີ້
ນ້ອງ ມາໜີ ຫ່າງໄກ
ປ່ອຍ ໃຫ້ ອ້າຍໄວ້
ກັບ ຄວາມ ມືດມົນ

ຍາມ ຝົນຕົກມາ ຂ້າໃນໃຈໝົ່ນ
ທົນ ຄິດເຖິງອັນ ຜ່ານມາບໍ່ໄຫວ.

# ຮັກສາວລີເຊ

ລີເຊ ໆ ໆ    ລີເຊ ໆ ໆ
ແສນຊື່ນໃຈ    ສຸກສຳຣານ
ຍາມເມື່ອເຮົາ    ໄດ້ພົບກັນ
ໂອ ແມ່ສາວ    ລີເຊ

ນ້ອງຊ່າງງາມ    ຈັບໃຈໝັ້ນ
ພາໃຫ້ຝັນ    ທຸກຄືນວັນ
ງາມແທ້ໜໍ    ງາມຈັບໃຈ

* ໂອ ໆ ໆ
ພຽງຍີ້ມນາງ    ກໍສຸກໃຈ
ສວັນ    ຫຼືສ້າງນ້ອງມາ ?
ລີເຊ ໆ ໆ    ລີເຊ ໆ ໆ

ອ້າຍນີ້ໜາ    ຢາກເຫັນໜ້າ
ພົບແກ້ວຕາ    ທຸກເວລາ    ໂອ ແມ່ສາວລີເຊ
ຂໍພຽງນ້ອງຈົ່ງເຫັນໃຈ    ຄອຍຄວາມຮັກຂອງອ້າຍໄວ້
ດ້ວຍຄວາມຮັກ    ຈາກຫົວໃຈ

(ລື້ນ * )

ແມ່ນຄວາມຮັກ    ເຮົາສົມປອງ
ອ້າຍຈະຂໍຄູ່ປະຄອງ    ຮັກແຕ່ສາວລີເຊ
ຂໍແຕ່ນ້ອງຢ່າຄືຊັງ    ໃຫ້ໃຈອ້າຍສູດຣະກັນ
ແລະຊອກຊ້ຳ    ດ້ວຍນ້ຳຕາ.

# ສາວສມ້ຍ

ບະ　　　　　　　ນ້ອງຄືງາມແທ້
ຍິ່ງແລ　　　　　ຍິ່ງເບິ່ງຍິ່ງສາວ
ແຕ່ງຕົວ　　　　ແຕກຕ່າງສາວລາວ
ເດີນບາດຍ່າງກໍເບົາ　ດັ່ງຢ້ານຖນົນຍຸບເອົາທັງເປັນ

ສິ້ນ　　　　　　ຫຼືບໍ່ອີຫຼັງ ?
ນຸ່ງເຂີນ　　　　ເກີນສັ້ນເຕັ້ນທີ
ແມ່ນາງ　　　　　ຄົງເກີດຮ້ອນດີ
ຄືນບໍ່ວ່ານີ້ເອັນ　　ຫາກໃຜໄດ້ເຫັນ ຫົວໃຈຄົງເຕັ້ນບໍ່ໄຫວ

ສົ້ງ　　　　　　ຫຼັງມາເຕື່ອຍແທ້ ?
ແຜ່ເອົາ　　　　　ສາຍບືໃຫ້ເຫັນ
ທ່າທາງ　　　　　ຄົງເກີດຢາກເຢັນ
ເດີນອີກສັ້ນອີກສາຍ　ດັ່ງແກ້ງໃຫ້ຊາຍລະເມີເລື້ອຍໄປ

ຟ້ອນ　　　　　　ກັນບໍ່ນ້ອງສາວ ?
ລັບລອງ　　　　　ລຳອົງບໍ່ນີ
ແນ່ນອນ　　　　　ຕ້ອງແບບຮີບປີ
ເພັງຈັງຫວະລອດລາຍ　ຕາກຂອັ້ນຕາກທາງາຍຮ້ອນກວ່າຊີ້ນດາດໄຟ

# ໂປຣດບອກອ້າຍດ້ວຍຈູບຮັກ

ເຮົາເຄີຍ ເຫີດຫູນຮັກມາ ຕັ້ງນານແສນນານ
ເຮົາເຄີຍ ໃຫ້ຄຳສາບານ ຈະຮັກຍັ້ງຍືນ
ພຽນຖນອນ ດ້ວຍໃຈ ບໍ່ເຄີຍທານຈະຂັດຂືນ
ຈະລ່ອງເກີນ ໃຫ້ຄວາມຮັກ ດັບສລາຍ

ນິງຄານ ນ້ອງຈິ່ງເຫັນໃຈ ໃຫ້ຄວາມຮັກອ້າຍ
ນີທາງ ພົບຄວາມວິລັຍ ດັ່ງຟືນພົບໄຟ
ຄອງຄວາມຮັກໃດໆບໍ່ມີວັນ ຈະສລາຍຈະອັບເສົາ
ເສົ້າຊວງໃນ ໝື່ນວິຍານ ໂປຣດບອກອ້າຍດ້ວຍຈູບຮັກ.

# ຫ່ວງວຽງຈັນ

ວຽງຈັນ ແດນວິລັຍ
ຈາກໄປ ໃຈຄະນຶງ
ອາລັຍ ຫ່ວງຄິດເຖິງ
ນໍ້າຕາ ຕົກຝັງໃນ

ວຽງຈັນ ຂ້ານີ້ຕຣົນ
ຣະບົມ ໃນຣຶທັຍ
ເທວີ ຍອດດວງໃຈ
ຢູ່ດີ ຫຼືຮ້ອນຮົນ

ວຽງຈັນ ຂ້າຂໍວອນ
ເທວາ ຢູ່ເບື້ອງບົນ
ໄດ້ໂປຣດ ມາຊ່ວຍດົນ
ໃຫ້ໜ້າມົນ ຂ້າສົດຊື່ນ

ວຽງຈັນ ແດນວິມານ
ບໍ່ນານ ຄົງຫວນຄືນ
ຄົນດີ ຢ່າສະອື້ນ
ແນ່ນອນ ຄົງພົບກັນ.

# ນ້ຳຂອງຍາມແລງ

ຫຼຽວ　　　　　　　ເຫຼືອຄລິງຕາມນ້ຳຂອງ
ຍາມເມື່ອແລງແສງທອງ　ພອນຈາກລາ
ເຫັນໝູ່ນາວາລ່ອງລອຍ　ຖືກຄື້ນຟອງພັດໄກວຕາມພາສາ
ຫຼຽວເບິ່ງໝູ່ນອນນົກກາ　ຕ່າງກໍພາກັນບິນ ຊ້ຽວບິນໄປແສນໄກ

ສາວ　　　　　　　ຈາກວຽງວັງໂສມງາມ
ຍ່າງເປັນແພເລາະຕາມ　ແຄມຫາດຊາຍ
ສຽງໄຫ່ໂຮນອງກ້ອງດັງ　ປຽບກັບພິນເມື່ອຟັງພາຫຼັບໄຫຼ
ສາວເຈົ້າຄົງບໍ່ລ່ຳໄລ　ບໍ່ສິ້ນໃຈວ່າຍັງມີໃຜເສົ້າໂສກາ

ງາມແທ້　　　　　　ເມື່ອມາເຫັນ
ຍາມເຢັນຊື່ນ　　　　ຢ່າງນີ້
ນະພາ　　　　　　　ຮຸ່ງສົດສີ
ນະທີຫຼັ່ງ　　　　　　ງາມຕາ ຮີ ຮີ ຮີ

ແສງ　　　　　　　ຈາກສຸຣິຄ້ອຍເບົາ
ດັ່ງບອກເຕືອນໃຫ້ເຮົາ　ຄືນເຄຫາ
ຄິດບໍ່ຢາກລານ້ຳຂອງ　ຢາກນັ່ງຊົມຄື້ນຟອງຄູ່ມັດສາ
ສາວເຈົ້າຄົງບໍ່ທອນມາ　ກ່ອນສາຍຕາຄົນທີ່ຂັດສົນ ຄວາມຮັກເອີຍ

# ຝາກເພັງເຖິງນ້ອງ

ສຽງຈາກເພັງນີ້ ມອບໃຫ້ຂວັນໃຈ
ຈົ່ງຟັງເອົາໄວ້ ເປັນອະນຸສອນ
ເປັນຄັ້ງສຸດທ້າຍ ທີ່ມີຄວາມໝາຍ ອັນແນ່ນອນ
ຂໍໃຫ້ຈອນຂວັນ ຈົ່ງຟັງ

ຖ້າຫາກຟັງແລ້ວ ຈົ່ງຢ່ານ້ອຍໃຈ
ຈົ່ງລືມໄປເສັຽ ພາບແຫ່ງຄວາມຫຼັງ
ລືມຮັກລືມແຄ້ນ ລືມສິ້ນລືມຮູ້ ລືມທຸກຢ່າງ
ແລ້ວມາແຍກທາງ ກັນໄປ

ປ່ອຍທາງໃຫ້ນ້ອງ ເພື່ອຄົນຮັກອື່ນ
ຂໍນ້ອງຈົ່ງຊື່ນ ແລະສຸກສົມໃຈ
ຈະຢູ່ຮ່ວມກັນ ຍິ່ງນານວັນ ຍິ່ງຈະເບື່ອໜ່າຍ
ເພາະຈິດໃຈເຮົາ ຕ່າງກັນ

ຈົ່ງລືມໄປເສັຽ ຫ້ອງນອນຫ້ອງເກົ່າ
ທີ່ສອງຄົນເຮົາ ວ່າເປັນສວັນ
ປິດສາກເສັຽ ໃນເກມຮັກເກມນີ້ ຈົ່ງສິ້ນກັນ
ທາງໃດເປັນສວັນ ຈົ່ງເລືອກເອົາ.

# ບອກນ້ອງດ້ອຍໃຈ

ດ້ອຍຕົວອ້າຍນີ້ ນີ້ມິນຂັງ
ລັບຈິດຝັງ ໃຫ້ລຳພຶງ
ຍາມຫ່າງໄກ ກໍຫ່ວງເຖິງ
ບໍ່ຈືດຈາງ

ເມື່ອຍາມພົບເຫັນ ບໍ່ອາຍເອີ້ນ
ປາກຈະເປັນ ຄູ່ນ້ອງນາງ
ໂຫຄົນດີ ຂ້າຄອຍຫວັງ
ພຽງແຕ່ນ້ອງ

ບອກນ້ອງດ້ອຍໃຈ ອ້າຍບໍ່ເຄີຍຮັກ
ເຄີຍສຳພັນ ເປັນເຈົ້າຂອງ
ຍິງໃດຖືກປອງ ເຝົ້າແຕ່ຫຼຽວນອງ
ນ້ອງພຽງຜູ້ດຽວ ຢູ່ໃນໂລກນີ້

ນ້ອງຄືນາລາ ປຽບດອກຟ້າ
ທີ່ໃຝ່ຫາ ຄູ່ຊີວີ
ຂໍຕອບຮັກ ຮັກອ້າຍນີ້
ດ້ອຍເຖີດເອີຍ.

# ລາກ່ອນຈາກ

ຈາກກັນໄປ    ທ້ອໃຈ    ອາລັຍຫາ
ຈໍາຈາກໄປ    ໄກຕາ    ຂໍລາກ່ອນ
ຢ່າໂສກເສົ້າ    ຢ່າຫ່ວງໃຍ    ຢ່າອາວອນ
ຄົງບໍ່ນານ    ຈະຫວນຍ້ອນ    ມາພົບກັນ

ຈາກກັນໄປ    ຮືທັຍ    ຢ່າລືມຫຼົງ
ຈາກອັນນີ້    ກໍຄົງ    ພົບອັນນັ້ນ
ຫາກຄິດເຖິງ    ເບິ່ງດາຣາ    ເບິ່ງດວງຈັນ
ສາຍຕາເຮົາ    ຄົງພົບກັນ    ໃນຈັນທຣາ

ໂອ່ ...ໂອ ໂອ ...    ຮື ...ຮື ຮື...
ຂໍລາ    ຂໍລາ    ຂໍລາ
ຈົ່ງຢູ່ດີ    ມີຄວາມສຸກ    ສິ້ນທຸກນາໆ

ສຸດຄະນຶງ    ເຖິງກັນ    ຢູ່ບໍ່ຫາຍ
ໂສກໃຈເຫຼືອ    ເມື່ອໃດ    ໜໍພົບໜ້າ ?
ຈາກພຽງກາຍ    ສ່ວນດວງໃຈ    ແລະວິນຍາ
ທຸກນາທີ    ທຸກເວລາ    ມີໄກກັນ
ໂອ...ຮື...    ລາ ...    ຂໍລາໄປກ່ອນເອີຍ.

# ຖິ່ນທອງ

ດິນຖິ່ນນີ້ ເປັນບ້ານເຮົາ ເຮົາຮັກເຫຼືອຫຼາຍ
ຈົນວັນຕາຍ ຊົ່ວາວາຍ ດິນຖິ່ນໜ້າ
ແຜ່ນດິນທອງ ຂອງລາວ ລ້ຽງໃຫ່ຍ່ມາ
ບໍ່ລືມຄຸນ ເຂົ້າປາ ແລະອາຫານ

ມີຍອດຊັບ ຢູ່ໃນດິນ ສິນຢູ່ໃນນ້ຳ
ມີວິວງາມ ມີຍອດຫັນ ມີຫຼາຍດ້ານ
ກະສັດອົງ ກໍຊົງ ຄອຍໂປຣດປານ
ເມື່ອມີທຸກ ຮັຖບານ ຄອຍຊ້ອນຊູ

ເມືອງລາວນີ້ ນີ້ຂ້າຮັກ ດັ່ງດອກໄມ້
ເກັບເອົາໄວ້ ກາງໃຈ ໃຜມາລູ່
ສູ້ບໍ່ຖອຍ ສູ້ແຕ່ຕາຍ ໃຫ້ໂລກຮູ້
ໃຫ້ລາວຢູ່ ຄູ່ຟ້າ ອະສົງໄຂ

ໃຈໝັ້ນໄວ້ ກະຕັນຍູ ກະຕະເວທີ
ດິນລາວມີ ຄຸນຄວາມດີ ເຫຼືອນັບໄດ້
ໃຫ້ຢູ່ກິນ ໃຫ້ ຄວາມ ສຸກສບາຍ
ຊີບສລາຍ ຂໍມອບກາຍ ໃຫ້ຖິ່ນທອງ.

# ກ່ອນຈະຮັກກັນ

ຄົນເຮົາ ກ່ອນຈະຮັກກັນ
ສິ່ງຄວາມສຳພັນ ທັງກາຍ
ຮອຍຍິ້ມກໍປ່ອຍອອກມາ ຍິ້ມຢ່າງສັດທາ
ໃຊ້ແທນວາຈາ ທັກທາຍ

ຍາມໃດ ທີ່ເຫັນໜ້າກັນ
ຈິດໃຈຕື່ນຕັນ ແທບວາຍ
ຄວາມຮັກທີ່ຫຼັບຢູ່ໃນ ລຸກຂື້ນທັນໃດ
ໄຂປະຕູໃຈ ອອກມາ

ຕາຕໍ່ຕາ ປະສານກັນ
ສຸດສະທ້ານ ໄປທົ່ວອຸຣາ
ຄວາມຮັກເລີ້ມກໍ່ ຕໍ່ຈາກສາຍຕາ
ຄວາມປາຖນາ ລອຍຕາມ

ດວງໃຈ ເກັບຄວາມຮູ້ສຶກ
ສມອງກໍນຶກ ທາບທາມ
ອາຣົມໜາວສັ່ນຈິດຫວາມເມື່ອຢາກຈະຖາມ
ຖາມເພື່ອຄວາມຮັກ ຕໍ່ກັນ.

# ທາຕຣີແຫ່ງຊຳເໜືອ

ໂອ ແມ່ຊຳ ນ້ຳງາມສົດໃສ
ຫຼາກລິນໄຫຼ ໃນແຫ່ງນະພາ
ແສງຈັນໃສສ່ອງ ທຳນະຊາດສ້າງມາ
ເພີນອຸຣາ ພາໃຫ້ຝັນ

ດາວລ້ອມເດືອນ ເຄື້ອນລອຍໄປ
ເໝືອນທິດາ ລອຍມາແຕ່ໄກ
ດັ່ງອິນທາ ດົນຮັກໃຫ້
ພາຫົວໃຈໄຝ່ຝັນ ຕຣຶງຈິດໝັ້ນ ມີໃຫ້ອາທອນ

ຊຳເໜືອເອີຍ ໜ້າຊົມເຊີຍໜ້າຢູ່
ຊີວິດເຮືອງເຟືອງຟູ່ ຊູເຊີດຊູໃຈໃຫ້ອາວອນ
ທຸກຄົນ ຄົນທີ່ເຄີຍໄດ້ຢູ່
ຄົງຢາກກັບຄືນສູ່ ຊຳເໜືອເອີຍ

ຂໍຝາກໃຈ ໄວ້ກັບຊຳເໜືອ
ຫ່າງແຕ່ກາຍ ຈິດໃຈຍັງເຫຼືອ
ເຖິງຍາມຝັນເພີ້ ລະເມີເຖິງຄວາມຫຼັງ
ຍາມໄດ້ນັ່ງ ຊົມທາຕຣີ.

# ນ້ຳຖ້ວມຖິ່ນເພັງ

ນ້ຳຂື້ນລົ້ນຝັ່ງ ໄຫຼຖ້ວມທາງບ້ານທ້ອນຖິ່ນເພັງ
ພີ່ນ້ອງເຮົາຖືກສູນເສັຽ ບ້ານທ້ອນຖິ່ນເພັງເສັຽຜົລປູກ
ຈູງເອົາງົວຄວາຍ ຂົນຂວາຍນ້າງເພຫ້າງຫູກ
ອູ້ມເອົາຫຼານ ອູ້ມເອົາລູກ ຍ້ອນຖືກນ້ຳຖ້ວມບໍ່ລົງ

ນ້ຳລົ້ນໄຫຼຫຼັ່ງ ໄຫຼຜ່ານທາງ ຜ່ານເຂົ້າໃນນາ
ພີ່ນ້ອງຈຶ່ງຫຼັ່ງນ້ຳຕາ ຫຼຽວນອງທົ່ງນານ້ຳຖ້ວມໝົດທົ່ງ
ທ່າແຂກຊາຍຟອງ ສີຖານໄຕ້ນ້ຳຖ້ວມຈົນໂຫ້ງ
ພົກເຂືອຕາຍກ້ຽງບໍ່ຈົ່ງ ນ້ຳບໍ່ຍອມລົງ ໄດຊ່າງຣະກຳ

ລົງເຮືອລົງແພ ເກັບຂອງປະເຮືອນໄກທ່າງ
ຂ້າມທົ່ງແກ້ງປາຢ້າງ ຢູ່ທາງບ້ານສາຣະຄຳ
ເທວັນເຈົ້າເອີຍ ບໍ່ເລີຍບໍ່ໜ້າໃຈດຳ
ປ່ອຍໃຫ້ຝົນຕົກລົງນ່ຳໆ ປ່ອຍໃຫ້ນ້ຳຖ້ວມເມືອງຊາຍຟອງ

ນ້ຳຂື້ນລົ້ນຝັ່ງ ແນ່ນແຕ່ທາງຫຼຽວນັ້ນບໍ່ມີ
ກ້ອຍອ້ອຍຊ້ຳຖືກພັດໜີ ແສນເຕັນທີແຫ້ໜໍພີ່ນ້ອງ
ຂໍວອນເທວາ ນາຄານັ້ນຊ່ວຍປົກປ້ອງ
ປີໜ້າຢ່າໃຫ້ນ້ຳນອງ ຢ່າໃຫ້ນ້ຳຂອງຂື້ນຖ້ວມຖິ່ນເພັງ.

# ຕາຫວານ

ຖ້າວ່ານ້ອງ　　ຢາກທົດລອງໃຫ້ເຫັນ
ຫົວໃຈອ້າຍນີ້ເປັນ　　ບໍ່ຢາກເຫັນຕາຫວານ
ຢາກລໍ່ນອງກາຍ　　ແຕ່ຢ້ານຫົວໃຈອ້າຍພິການ
ຈຶ່ງເວທນາສົງສານ　　ເພາະຢ້ານເປັນໂລກຫົວໃຈ

ຕາເອີຍຕາ　　ຕໍ່ຈະສົ່ງຣັສມີ
ບາດໃຈອ້າຍເຕັ້ນທີ　　ຈຶ່ງປຣານີເຫັນໃຈ
ສາຍຕາຄົມໆ　　ຊ່າງສຸກສົມໃນຣຶທັຍ
ເຈົ້າສຽບປັກລົງຕາມຫົວໃຈອ້າຍນີ້ຄົງຕາຍເພາະຕາ

ຂືນສົ່ງມາອີກຄັ້ງ　　ຄົງຕາຍແນ່
ໃຜແລ້ວໜໍຊິແກ້　　ປິດກະແສສາຍຕາ
ມອງມາຕຳຕຶກ　　ບີບຫົວຣູ້ສຶກຂື້ນມາ
ຢຸດໄດ້ບໍ່ສາຍຕາ ?　　ອ້າຍເຫັນວ່າຈະເປັນລົມ

ຕາເອີຍຕາ　　ຢ່າມອງມາໃຫ້ເຫັນ
ບາດໃຈຄົນເຫັນ　　ມະເມື້ອເຢັນຕາຄົມ
ໂປຣດຈຶ່ງສົງສານ　　ຢ່າທໍຣະມານໃຫ້ອົກຕຣົມ
ຢ້ານແຕ່ຫວານກາຍເປັນຂົມຣະທົມເປັນບ້າປ່ອຍການ.

# ສາວນາແກ

ຂໍຝາກສຳນຽງ ສຽງເພັງນີ້ກັບສາຍລົມ
ໃຫ້ສາວນາແກແອວກົມ ສາວຕາຄົມແຫ່ງເມືອງສວັນ
ເມື່ອຟັງສຽງເອີ່ຍ ສາວເອີຍຢ່າດ່ວນລືມກັນ
ເຖິງເຮົາຈະຢູ່ຫ່າງກັນ ກໍຢ່າຜັນປ່ຽນຜັນຫົວໃຈ

ອ້າຍຫ່າງນ້ອງນາງ ກໍພຽງຫ່າງແຕ່ກາຍາ
ຈິດໃຈແລະດວງອຸຣາ ໂຖຄິດຫາບໍ່ໄດ້ຫວັ່ນໄຫວ
ຍັງຮັກນ້ອງຢູ່ ຍອດຊູ້ເຈົ້າຢ່ານ້ອຍໃຈ
ເຖິງເຮົາຈະຢູ່ຫ່າງໄກ ຫ້ອງຫົວໃຈເຮົາໃຫ້ຕຣຶງກັນ

ໃຈອ້າຍໃຈນ້ອງ ສອງໃຈເຮົາໃຫ້ກົມກຽວ
ຢ່າມີນີ້ຄິດລ້ຽວ ບິດບ້ຽວເທຫັນ
ຄິດເຫັນງານເກົ່າ ຄັ້ງເຮົາເຄີຍຢູ່ຮ່ວມກັນ
ດັ່ງໃນຄ່ຳຄືນນັ້ນ ທີ່ເຮົາສອງຮັກກັນຊຶ້ງໃຈ

ຂໍຝາກສັນຍາ ນີ້ມາພ້ອມກັບສຽງເພັງ
ໃຫ້ສາວນາແກຄົນເກັ່ງ ຢ່າເປັນນັກເລງປະຫານໃຈຊາຍ
ນາແກສາວຢ່າ ທຳທ່າເປັນຄົນລືມໄວ
ຢ່າແກ້ງປະຫານຫົວໃຈ ຂອງຜູ້ຊາຍເຖິດສາວນາແກ.

# ແຕ່ງເພັງນີ້

ເພັງນີ້ແຕ່ງ ຂຶ້ນມາກໍເພື່ອນ້ອງ
ດ້ວຍໃຈໝາຍປອງ ຈຶ່ງຮ້ອງເພັງນີ້ສົ່ງມາ
ປ່ອນໃຫ້ນ້ອງສາວ ສາວເຈົ້າຈົ່ງເມດຕາ
ມອບຮັກມາ ໃຫ້ຂ້າຊື່ນໃຈ

ເພັງຈາກໃຈ ມອບໃຫ້ໃຜຜູ້ນຶ່ງ
ດ້ວຍໃຈຄິດເຖິງ ຈຶ່ງຮ້ອງເພັງນີ້ສົ່ງໄປ
ດ້ວຍປຣາຖນາ ຂວັນຕາມາເປັນຄູ່ໃຈ
ມອບຮັກໃຫ້ ຂວັນໃຈຈົ່ງເອັນດູ

ຮັກກໍຮັກ ແຕ່ນາງນ້ອງເຈົ້າ
ທຸກແລງຄ່ຳເຊົ້າ ໃຈເຝົ້າຮັກນາງນ້ອງຢູ່
ໃນດວງໃຈ ກອດເຈົ້າໄວ້ໃຫ້ຊື່ນຊູ
ຄອຍຂວັນຢູ່ ຊື່ນຊູກັບນາງ

ເພັງນີ້ແຕ່ງ ຂຶ້ນມາກໍເພື່ອນ້ອງ
ໂອແມ່ເນື້ອທອງ ນວນນ້ອງຢ່າໄດ້ຈືດຈາງ
ຢ່າໃຫ້ຄອຍ ຄອຍນ້ອງຈົນໝົດຫົນທາງ
ຂໍໃຫ້ນ້ອງນາງ ໄປຣດຈົ່ງໄດ້ເຫັນໃຈ.

# ຮັກສາວເສື້ອຂຽວ

ເຄີຍພົບຍິງ　　ນາແລ້ວຫຼາຍໆ
ບໍ່ເຄີຍສົນໃຈ　　ບໍ່ເຄີຍຮັກໃຜຈົນໝົດຫົວໃຈ
ເສື້ອແດງເສື້ອເຫຼືອງກໍມີ　　ຜູ້ຈົນຜູ້ມີກໍຫຼາຍ
ບໍ່ເຄີຍອາລັຍ　　ບໍ່ເຄີຍໄຝ່ຝັນ

ພໍພົບຍິງ　　ຄົນໃສ່ເສື້ອຂຽວ
ຫົວໃຈນ້ອນນ່ຽວ　　ຫຼົງຮັກເສື້ອຂຽວນັ້ນຢູ່ທຸກວັນ
ຄິດເຖິງຮອຍຍິ້ມອັນຫວານ　　ຄິດເຖິງສາບານເມື່ອຄືນນັ້ນ
ຕາບຊົ່ວຊີວັນ　　ຮັກດຽວແນ່ນອນ

ເປີດວິທະຍຸ　　ເປີດຟັງເບິ່ງດູ ຢ່າຟ້າວຫຼັບນອນ
ມີໃຜຄົນນຶ່ງ　　ຄິດເຖິງເຈົ້າຢູ່ບັງອອນ
ຄົນນັ້ນ　　ຂໍສົ່ງເພັງອອນ
ຫຼົງຮັກງານງອນ　　ເສື້ອຂຽວບາງໆ

ພໍສຽງເພັງ　　ດັງແອ່ວມາຫາ
ຂໍນາງເຈົ້າຢ່າ　　ຢ່າຄິດນິນທາຫຼືວ່າກຽດຊັງ
ມີແຟນນັກຮ້ອງຢ່າງດີ　　ລັບລອງບໍ່ມີຜິດຫວັງ
ຢ້ານແຕ່ນອນນາງ　　ນ້ອງເຈົ້າຈະລອງ.

# ກຸຫຼາບຫຼວງພະບາງ

ໂອ ຫຼວງພະບາງ ຟາກຟ້າແດນໄກ
ແດນພູປ່າພະນາອຳພັຍ ນຶກເຖິງຍັງໃກ້ນ້ຳໃຈຂອງນາງ
ຜ່າພູແລະຜາ ຂວາງກັ້ນປິດທາງ
ຟ້າດິນໃຈໃຫ້ຫ່າງ ຂໍນ້ອງຢ່າຮ້າງຫ່າງໄກ

ແມ່ຂອງແມ່ຄານ ໄຫຼກັ້ນຜູກພັນ
ເໝືອນດັ່ງເຊັ່ນດວງໃຈວຽງຈັນມາຂໍຮັກໝັ້ນສຳພັນຊື່ອຟ້າ
ແບກຮັກຂ້າມຂອງ ໝົ່ນໝອງອຸຣາ
ນຶກເຖິງອາສນາ ຈະມາຄູ່ຄຽງເຈົ້າເອີຍ

ອ້າຍແບກຄວາມຮັກມາຫາ ກາຍແລະຈິດອຸທິດຊື່ອາ
ມຸ້ງມາຫາ ເພື່ອນຕາຍແດນນີ້
ລົມໜາວໄບກມາ ອຸຣາໝອງໄໝ້ທະວີ
ເກງຄວາມຮັກຈະເກີນສັກສີນ້ອງຄົນດີໂປຣດສົງສານ

ເຖິງແມ່ນຢ່າງໃດ ຂໍໄດ້ເອີ້ນມາ
ຮັກເຄືອງໂກດໂປຣດໄດ້ເອີ່ຍຈາຈິ່ງນຶກເສັ່ງວ່າຜູ້ຊາຍແດນໄກ
ທາບຮັກຈະຂໍ ເດີນດົ້ນປ່າພັຍ
ພູແລະຜາກວ້າງໃຫຍ່ ດ້ວຍໃຈມາຮັກເຈົ້າເອີຍ

# ຈາກ

ໂປຣດຢ່າໂສກສັນ ຄຶດເຖິງອັນ ນານຜ່ານມາ
ເຄີຍສຸກໜັກໜາ ຕ້ອງມາຈາກ ພາກໄກໜີ
ກ່ອນເຄີຍປະຄອງ ຮັກເຄີຍຕ້ອງ ໝອງຮືດີ
ຍອດຊີວີ ຕ້ອງຢ່ານີ ຈິດໃຈສອງ

ຈາກໄປໄກແລ້ວ ໂອແກ້ວຕາ ຢ່າປ່ງນໃຈ
ຈາກໄປພຽງກາຍ ນອບຮືທັຍ ໄວ້ນຳນ້ອງ
ຈົ່ງລຳຄອຍອັນ ນານປານໃດ ກໍຈົ່ງຄອງ
ຢ່າໃຈໝົ່ນໝອງ ຈົ່ງຄອງໃຈ ໃຫ້ຫອານຊື່ນ

ຍານ ໃດນ້ອງໂສກ ຫຼືນີທຸກ ໃຈຂື່ນຂົມ
ອອນຝາກສາຍລົມ ຊ່ອຍກ່ອນໃຈ ໃຫ້ເຊີຍຊື່ນ
ຍານໃດນ້ອງໂສກ ອ້າຍກໍໂສກ ໃຈກ່ຳກືນ
ທຸກອັນຄືນ ຕື່ນຜວາ ຫາດວງໃຈ

ຈາກໄປໄກໜີ ຍອດຊີວີ ຢ່າປ່ງນທາງ
ຢ່າໃຫ້ຄວານຫວັງ ທີ່ເຄີຍສ້າງ ພັງທະລາຍ
ຢ່າໃຫ້ດວງໃຈ ອ້າຍຕ້ອງແຫຼກ ແຕກສລາຍ
ຈົ່ງພຽນໃຈ ໄວ້ລຳຄອຍ ອັນອ້າຍມາ.

# ທີ່ຮັກອ້າຍຢູ່ໃສ ?

ອ້າຍຢູ່ຫົນໃດ　　　　　ສຸດທີ່ຮັກ ?
ທີ່ຮັກ　　　　　　　　ນ້ອງຫວ່າເຫວ່ໃຈ
ເຄີຍຮັກເຄີຍພະນໍ　　　ຢອກລໍ້ກັນຊື່ນໃຈ
ບັດນີ້ອ້າຍຢູ່ໃສ　　　　ຢູ່ໃສຈຶ່ງບໍ່ມາ ?

ອ້າຍລືມນ້ຳຄຳ　　　　ວ່າຮັກແລ້ວ
ລືມໝົດແລ້ວ　　　　ຫຼືຖ້ອຍສັດຈາ
ເຄີຍໝັ້ນໄວ້ກັບໃຜ　　　ຈະຮັກກັນຊົ່ວຟ້າ ?
ລືມແລ້ວຫຼືສັນຍາ　　　ສັນຍາວ່າຈະຮັກດຽວ ?

ເສັ່ງແຮງ　　　　　　ນ້ອງຫຼົງເຊື່ອຄຳ
ຈຶ່ງເຈັບຈຶ່ງຊ້ຳ　　　　ໃຈຜູ້ດຽວ
ຫົວໃຈແຮງນ້ອງ　　　　ຕ້ອງເປົ່າປ່ຽວ
ຣະທົມທຸກທົນຄົນດຽວ　　ບໍ່ມີໃຜເຊັດນ້ຳຕາ

ອ້າຍຢູ່ຫົນໃດ　　　　　ສຸດທີ່ຮັກ ?
ທີ່ຮັກ　　　　　　　　ນ້ອງຮ້ອງຮຽກຫາ
ຟັງແລ້ວຈົ່ງຮັບຮູ້　　　　ວ່ານ້ອງເສົ້າໂສກາ
ສຸດແສນທໍຣະມາ　　　　ເທົ່າໃດເທົ່າໃດອ້າຍເອີຍ.

# ອຸກໃຈ

ອຸກໃຈ
ອຸກໃຈຈົນຫົວ ຈິແຕກຕາຍ
ໜຸ່ມໆສາວໆ ລຸ້ນລາວສມັຍໃໝ່ ຫຼາຍ
ປົກປຸ້ນຄຸນຄາຍ ໜ້າອາຍບັດສີ

ອຸກໃຈ
ເກືອບອົດບໍ່ໄຫວ ຂ້ອຍຢາກແລ່ນໜີ
ບາງໆເຂີນໆ ກອນໃຈເຫຼືອເຕັນທີ່
ສະລັບສັບສີ ເໝືອນຕົວລະຄອນ

ປາກທາແດງ ຄິ້ວຂຽນດຳ
ປ່ອຍຜົມລານ ອ່າໂຕງາມງອນ
ນຸ່ງສິ້ງຮັດໆ ເຫັນແລ້ວອຶດອັດມັນໜາວມັນຮ້ອນ
ຈິດຖີ່ໃຈອອນ ຍາມຫຼັບຍາມນອນອາວອນອຸ້ນອາຍ

ອຸກໃຈ
ໜຸ່ມສາວທັງຫຼາຍ ຂໍເຊີນຈືໄວ້
ຢ່າລືມຮີດຄອງ ຂອງລາວເຮົາເໝີດຫຼາຍ
ຂໍໂທດຫຼາຍໆ ຢ່າໄດ້ກຽດຊັງ

ມັນກໍໂພດອີ່ຫຼີໄດ໋ ແຕ່ອີ່ພໍ່ອີ່ແມ່ກໍບໍ່ເຄີຍເຫັນດອກແບບນີ້ນ໋າ
ເບິ່ງຄັກແລ້ວຄືຜີນີ້ ບາດເບິ່ງດີແລ້ວ ໂອ໋ຍ... ອຸກໃຈຫຼາຍ.

# ປູ່ສອນຫຼານ

ຟັງ ໆ ໆ

ຂໍເຊີນ ທ່ານຟັງພີ້ກ່ອນ
ເມື່ອຍນັ່ງ ກ່ອນຈະພັກຜ່ອນ (ຊ້ຳ)
ໂປຣດຟັງເພັງນີ້ກ່ອນ ແລ້ວເອົາໄປສອນກັນຕໍ່ໄປ

ຍາມໜຸ່ມນ້ອຍ ຈົ່ງອິດສາພາກພຽນ
ຈົ່ງອິດສາຮໍ່າຮຽນ ຮຽນເອົາໄວ້ຫຼາຍໆ
ນິຜຍາ ບໍ່ແມ່ນໃສ່ບ່າແບກໄວ້ (ຊ້ຳ)
ຈົ່ງຈຳເອົາໄວ້ ຢ່າລືມ ຢ່າລືມນະຫຼານເອີຍ

ເມື່ອຮຽນມາ ຈົ່ງຮັກສາໃຫ້ດີ
ຢ່າສ້າງຄວາມອັບປີ ຄວາມບັດສີເອົາໄວ້
ອະນາຄົດ ບ້ານເມືອງຈະຢູ່ກັບໃຜ ? (ຊ້ຳ)
ນອກຈາກຫຼານທັງຫຼາຍ ຈຳໄວ້ ຈຳໄວ້ໃຫ້ດີ

ເຈົ້າກະຊວງ ກິນກວງສຶກສາ
ໄດ້ຂຶ້ນຂວາຍຊອກຫາ ຈະພັທນາເລື້ອຍໄປ
ຢາກຈະເຫັນ ຊົນໃນຊາດທັງຫຼາຍ
ໄດ້ສຶກສາໃຫ້ສົມໃຈ ຢ່າລືມ ຢ່າລືມນະຫຼານເອີຍ.

# ປາກ

ປາກຄົນ ບໍ່ຄືປາກໄຫ
ປາກໄຫ ບໍ່ຄືປາກຄົນ
ປາກດີ ມີສີແກ່ຕົນ
ປາກຄົນແຕ່ລະຄົນ ຕ່າງກັນຄົນລະປາກ

ປາກນັ້ນ ໃຫ້ກົງກັບໃຈ
ປາກຫຼາຍ ຜູ້ຟັງບໍ່ມັກ
ປາກຄ່ອຍ ຜູ້ຍິນບໍ່ຄັກ
ປາກຄັ່ງກໍຟັງຍາກ ຍິ່ງລໍາບາກຜູ້ຟັງ

ຫູ ໄດ້ຍິນແລ້ວຟັງຄັກໆ
ໃຫ້ເຫັນປະຈັກ ແກ່ຕາທຸກຄັ້ງ
ແລ້ວເອົາໄປຄິດ ໃຫ້ຖືກແນວທາງ
ປາກເທື່ອໃດລະວັງ ລະວັງຈະຜິດໃຈຄົນ

ປາກຄົນ ບໍ່ຄືປາກຊ້າງ
ປາກຊ້າງ ບໍ່ຄືປາກຄົນ
ປາກດີ ແລ້ວຊນະໃຈຄົນ
ປາກບໍ່ດີບໍ່ພົ້ນ ຄົນເຂົາຈະນິນທາ.

# ໑
# ເງິນ

ເງິນ ໄດ້ເປັນເສດຖີ ກໍເພາະເງິນ
ຕົກເປັນຂໍທານ ກໍເພາະເງິນ
ເງິນ ເງິນ ເງິນ
ເປັນໂຈນຜູ້ຮ້າຍ ກໍເພາະເງິນ

ເງິນ ຕື່ນອອກຈາກບ້ານ ໄປຫາເງິນ
ແກ່ດຶງແບກຫາມ ຢາກໄດ້ເງິນ
ເງິນ ເງິນ ເງິນ
ໜີ້ສິນຖ້ວມຫົວ ກໍແມ່ນເງິນ

ເງິນເປັນພະເຈົ້າ ມະນຸດທັງຫຼາຍ
ເກີດຂ້າກັນຕາຍ ກໍເພາະເງິນ
ຮັກກັນຊັງກັນ ກໍເພາະເງິນ
ເປັນສຸກກໍເພາະເງິນ ເປັນທຸກຊີຕາຍ ກໍເພາະເງິນ

ເງິນ ເກີດເປັນມະນຸດ ຢາກໄດ້ເງິນ
ຢ່າສໍ້ຢ່າໂກງ ຢ່າລັກເງິນ
ເງິນ ເງິນ ເງິນ
ຈະພາສຸກລົ້ນ ຈົນໝົດເງິນ.

# ຄົນ

ຄົນ
ເກີດເປັນມະນຸດ　　　ເພິ່ນວ່າຄົນ
ບວດຢູ່ໃນວັດ　　　ກໍ່ແມ່ນຄົນ
ຄົນ ໆ ໆ　　　ເສດຖີຫຼືຂໍທານ ກໍແມ່ນຄົນ

ຄົນ
ຢູ່ໃນໂລກນີ້　　　ມີຫຼາຍຄົນ
ຜູ້ດີຜູ້ຮ້າຍ　　　ກໍແມ່ນຄົນ
ຄົນ ໆ ໆ　　　ຕຳຣວດທະຫານ　ກໍແມ່ນຄົນ

ຄົນມີຫຼາຍພວກ　　　ຫຼາຍຊັ້ນວັນນະ
ເສົາອະນາຖາ　　　ກໍແມ່ນຄົນ
ເປັນເຈົ້າເປັນນາຍ　　　ກໍແມ່ນຄົນ
ບ້າງມີກະທັ້ງຈົນລ້ອນແລ້ວແຕ່ຄົນ　　ທັ້ງນັ້ນແລະຄົນ

ຄົນ
ຢູ່ໃນປ່າຊ້າ　　　ແມ່ນເສດຄົນ
ຢ່າຢຽບຢ່າຢ່ຳ　　　ປະນາມຄົນ
ຄົນ ໆ ໆ　　　ຫຼືກຕາຍບໍ່ພົ້ນ ໄດ້ຈັກຄົນ.

# ປ້ານ

ປ້ານ ແຕ່ຄວາມຮັກຈະໝອງ
ປ້ານມີເຈົ້າຂອງ ອີກຄົນ
ປ້ານໜີຄວາມເສົ້າ ບໍ່ພົ້ນ
ປ້ານຄົນ ເຂົາແໜງໜ່າຍ

ປ້ານ ຮັກບໍ່ສິນດັ່ງຫວັງ
ປ້ານມີຄົນຂວາງ ຂັດໄວ້
ປ້ານເຂົາໃຈອ່ອນ ເອນໄຫວ
ປ້ານຄາຍຮັກ ກັບຄືນ

ຮູ້ແລ້ວໃຈເຈົ້າ ຍັງຮັກ
ຮູ້ແລ້ວວ່າຮັກ ຍັງຊື່ນ
ປ້ານຄວາມກັ່ນແກ້ງ ຄົນອື່ນ
ປ້ານກືນ ນ້ຳຕາຈົນໄດ້

ປ້ານ ແຕ່ຄວາມຫວັງມືດມົວ
ປ້ານຄົນຈະຍົວະ ໃຫ້ວາຍ
ປ້ານເຫຼືອພຽງຊາກ ຮັກໄວ້
ປ້ານຕາຍ ເພາະຜິດຫວັງ.

# ພັທນາກອນ

ຂ້ອຍຢາກມີເງິນ ຢູ່ເຕັມ ຈັກໝື່ນທະນາຄານ
ຈະພັທນາການ ຊ່ອຍຣັຖບານ ບ້ານເມືອງເຮືອງຮຸ່ງ
ຖນົນຫົນທາງ ລາດຢາງ ແຖວນອກດັ່ງກັບໃນກຸງ
ໂຮງໝໍໂຮງຮຽນ ນ້ຳໄຟໄຫຼຮຸ່ງ ກວ່າກຸງນີ້ອຍອກລອນດອນ

ໃຜຢາກໃຫ້ລາວ ຈະເຣີນ ໄວທັນຕາເຫັນ
ຢ່າໄດ້ແຕ່ນອນເອັນ ເຫຼັ້ນໄພ້ ເຫຼັ້ນຫວຍຫຼືຄໍຣັບຊັນ
ມາພັທນາ ມາຮ່ວມ ສ້າງສາບ້ານເມືອງຊ່ອຍກັນ
ສົ້ຣາດບັງຫຼວງ ລະວັງເດີທ່ານ ສເວີຍສວັນຊຳເຄ້ແນ່ນອນ

ຣະວັງ ຣະວັງ ພີ່ນ້ອງຊາວລາວທັງຫຼາຍ
ຢ່າຟ້າວພາກັນ ເຫຼີງໃຈ ຫູເບົາເອົາງ່າຍຈະກິນແໜງ
ຕັ້ງໜ້າສ້າງສາ ພັທນາ ຍານຍາກໝາກແພງ
ຊາວລາວຄົນລາວ ຮີບຟ້າວກັນແຂ່ງໃຫ້ເປັນແອ່ນແຍງລູກຫຼານ

ຂ້ອຍຢາກເປັນຄົນ ເລີດໃນ ເວດນິນຄາຖາ
ຈະຖຸ້ມອານາ ລ້ານຊ້າງ ໄພ່ພິນພົ້ນພັຍເສັ້ງກ່ອນ
ດຽວນີ້ແກວແດງ ໜ້າດ້ານ ລານລຸກບ້ານປ່າຂາດອນ
ເກນໝູເກນໝາງົວຄວາຍໄປຫຼ້ອນສ້າງຄວາມເດືອດຮ້ອນໄປທຸກຫົນແຫ່ງ

# ຂວັນໃຈຊາວດິນ

ປຽບ ນອນນາງ ເໝືອນດັ່ງດອກຟ້າ
ສູງຄ່າ ເລີດລອຍ ເວຫາໂສພິນ
ປຽບ ຕົວອ້າຍ ເປັນເຊັ່ນຊາວດິນ
ມີຄ່າ ດຸດດັ່ງຫີນ ທຽບກັບເພັດນິນ ຕ່າງກັນໄກ

ວາ ສນາ ອ້າຍຕ່ຳພຽງນີ້
ເຫຼືອທີ່ ຈະປອງ ຄິດຝັນໄຝ່
ຈຶ່ງ ຂໍຮ້ອງເພັງ ຟ້າຢ່າລືມໄລ
ຂໍຈົ່ງ ເປັນພລັງໃຈ ເປັນທັງແສງໄຟ ແກ່ຊາວດິນ

ອັນ ສາຍຝົນ ຫຼົ່ນຈາກນະພາ
ເຕີມຕໍ່ ຊີວາ ພືກສາທີ່ຄອຍຖອິນ
ອັນ ຄວາມປຣານີ ຟ້າມີຕໍ່ຊາວດິນ
ດັ່ງນ້ຳທິບ ປຣະພິມຊີວິນ ຊາວດິນໃຫ້ແຈ່ມໃສ

ໂປຣດ ສົງສານ ດ້ອຍເຖີດດອກຟ້າ
ຂໍຢ່າ ປ່ອຍດິນ ແຫ້ງແລ້ງເຖິງຕາຍ
ຫຼັ່ງ ຄວາມເມດຕາ ນັ້ນຈາກດວງໃຈ
ດິນ ຈະຂໍເທີດໄວ້ ເປັນຈອມຂວັນໃຈ ແຫ່ງຊາວດິນ

# ເຕືອນໃຈລາວ

ອັນຄຳວ່າສັດ　　　　ຄົນເຮົາທຸກຄົນກໍຮູ້
ມີເສືອມີຄວາຍເປັນໝູ່　　ບາງຕົວກໍຮູ້ແສນດີເຫຼືອລົ້ນ
ຕົວຢ່າງວ່າຄວາຍເຮົາລ້ຽງ　ມັນຍັງຮູ້ຄຸນຂອງຄົນ
ຄຶງແກ່ຄາດໄຖຈົນຕົວໝອງໝົ່ນບໍ່ເຄີຍໄດ້ບົ່ນຈັກຄຳ

ເມື່ອມາທຽບໃສ່　　　　ຄົນເຮົາບາງຄົນກໍຮ້າຍ
ໄປເສັ້ງກວ່າຝູງຄວາຍ　　ທີ່ຫວັງລ່ຳລວຍເສັ້ງຈົນໜ້າກ່ຳ
ຕົວຢ່າງລາວແດງ　　　ໄປຫຼົງແກວແດງໄຮ້ຄວາມສີລທັມ
ຈົນລືມເຂົ້າໜຽວເມັດຂາວອັນງາມລືມຄຳສອນອົງພະເຈົ້າ

ໂຫ່ເອີຍ ແກວແດງໃຈຮ້າຍ ເສັ້ງຍິ່ງກວ່າສັດ
ແຖມຍັງບັງອາດມາຍາດ　ເອົາແດນດິນດອນຂອງລາວ
ທ່ຽວຂ້າທ່ຽວແກງຄົນລາວ　ນີ້ຕາຍປະເຮືອນແປນເປົ່າ
ບູຮານຂວັນເມືອງເກົ່າໆ　ທຳລາຍເສັ້ງໄດ້ລົງຄໍ

ເພື່ອນລາວຫຼົງຜິດ　　　ຢ່າມົວເຊື່ອຟັງຄຳເຂົາ
ມີໃຜຮັກຫວງເມືອງລາວ　ຍິ່ງກວ່າລາວນີ້ຍັງມີຫຼືບໍ່ ?
ນ້ຳຕາລາວໄຫຼ　　　　ເປັນຮ້ອຍເປັນພັນກໍເພື່ອຫວັງລໍ
ດ້ອຍຢາກຈະເຫັນເມືອງລາວນີ້ກໍ່ສ້າງຕົວດ້ອຍຕົວລາວເອງ.

# ຄິດເຖິງສອ້ນ

ຢູ່ແຫ່ງ ຫົນໃດ
ຈຳຝັງໃຈ ບໍ່ເຄີຍລືມ
ດິນນັ້ນ ຍັງຊາບຊຶ້ງ
ບໍ່ເຄີຍລືມ ເມືອງສວັນ

ແສງທອງ ສ່ອງຟ້າ
ໝູ່ນົກກາ ຕ່າວກັບທັນ
ໜຸ່ມສາວ ເດີນຄູ່ກັນ
ແດນຂອງນັ້ນ ສຸກໃຈ

ໂອ ເມືອງສວັນ
ດັ່ງເທບ ສ້າງສັນແຕ່ງໄວ້
ສາວສວັນ ກໍງາມບາດໃຈ
ພາຫຼົງໄຫຼ ໄຝ່ຝັນ

ຈຳໃຈ ຈາກລາ
ຍັງຫ່ວງຫາ ຢູ່ທຸກວັນ
ຢາກກັບຄືນ ຕ່າວກັບທັນ
ອ້ອມກອດສວັນ ບ້ານເຮົາ.

# ເຊໂດນ

ລ່ອງມາ ຈາກວຽງຈັນ
ທີ່ເຄີຍຝັນ ເຄີຍຄເນ
ລ່ອງລົງມາ ຈົນເຖິງປາກເຊ
ງາມແທ້ເດ່ ແຂວງເຊໂດນ

ນ້ຳເຊ ແລະນ້ຳຂອງ
ຫຼາດໄຫຼນອງ ລອຍລ່ອງວົນ
ດັ່ງເມືອງຟ້າ ເມືອງແຖນບັນດົນ
ໂອ ເຊໂດນ ແສນງາມວິລັຍ

ຍາມນີ້ ຂ້າຈາກບ້ານມາ
ດ້ວຍປາຖນາ ທ່ຽວຊົມສົມໃຈ
ງາມແທ້ເມືອງນີ້ ງາມກວ່າເມືອງໃດ
ທີ່ຂ້າເຄີຍໄດ້ ໄປເຫັນມາ

ໜຸ່ມສາວ ຊາວເຊໂດນ
ປາກອ່ອນໂຍນ ຢືນໃຫ້ມາ
ບໍ່ຢາກໜີ ຈາກໄປໂກຕາ
ສຸກໜັກໜາ ໄດ້ມາເຊໂດນ.

# ປ່ຽວຈິດ

ຢູ່ຜູ້ດຽວ ເຫງົາໃຈ
ຍິ່ງຄິດໄປ ໝອງຊວງ
ຢາກຈະມີ ຄູ່ຄອງ
ຢ້ານຖືກລວງ ເຫງົາໃຈ

ເບິ່ງບົນຟ້າ ຣາຕຣີ
ກໍຍັງມີ ແສງເດືອນ
ຍິ່ງເປັນແນວ ຊ່ອຍເຕືອນ
ຢາກມີເພື່ອນ ຊູໃຈ

ລົມຣາຕຣີ ໂບຍໂບກມາ
ລົມໜາວ ພາໝອງໄໝ້
ລົມເຢັນໆ ໂຍກກິ່ງໄມ້
ພາຫົວໃຈ ໄຫວຫວັ່ນຕາມ

ໂອຕົວເຮົາ ນີ້ໜໍ
ຕັ້ງໃຈລໍ ຮັກມາ
ຫາກມີຄົນ ເມດຕາ
ກະຣຸນາ ຊ່ອຍປອບໃຈ.

# ຫຼົງຮັກສາວເມືອງຫຼວງ

| | |
|---|---|
| ໂອ | ເມືອງຫຼວງເອີຍ |
| ຂ້ານີ້ເຄີຍ | ໄປມາຄັ້ງນຶ່ງ |
| ໃຈຂ້າ | ສຸດຊຶ້ງ |
| ເພາະເມືອງຫຼວງນີ້ | ງາມເຫຼືອຕາ |

| | |
|---|---|
| ງາມ | ໝົດທຸກສິ່ງ |
| ແມ່ນໃຈຍິງ | ກໍງາມເຫຼືອເອົ້າ |
| ຂ້າໄດ້ | ແຕ່ເຝົ້າ |
| ຫຼົງຮັກສາວ | ເມືອງຫຼວງລົ້ນໃຈ |

| | |
|---|---|
| ໂອ | ເມືອງຫຼວງເອີຍ |
| ຄົງເປັນກັນ | ຂອງຂ້າກໍໄດ້ |
| ຈຶ່ງ | ຕ້ອງຈາກໄປ |
| ໄກກັບສາວ | ເມືອງຫຼວງຂອງຂ້າ |

| | |
|---|---|
| ໂອ | ສຸດທີ່ຮັກ |
| ເຖິງໄກກັນ | ຄົນລະຟາກຟ້າ |
| ຈັກວັນ | ດອກໜາ |
| ຟ້າຄົງພາ | ໃຫ້ເຮົາພົບກັນ. |

# ໑
# ເດືອນຫງາຍ

ເດືອນຫງາຍ ສາຍລົມພັດມາແຕ່ໄກ
ດວງເດືອນ ລອຍໄປທົ່ວທ້ອງນະພາ
ສາຍນ້ຳ ໄຫຼໄປບໍ່ກັບຄືນມາ
ເໝືອນນ້ອງ ຈາກລາໄປແສນໄກ

ຄິດເຖິງ ເມື່ອກ່ອນສອງເຮົາຈາກຈອນ
ອ້ອນວອນ ໃຫ້ອ້າຍຖນອມຮັກເອົາໄວ້
ພາຍໄຕ້ ແສງຈັນຄືນນັ້ນຈຳໄດ້
ດວງເດືອນ ລາລັບບໍ່ກັບຄືນມາ

ໂອ ດວງເດືອນ ເຈົ້າຢູ່ສູງມອງເຫັນທົ່ວຟ້າ
ໄປຣດກະຣຸນາ ມອງຫາໃຫ້ດີນີ້ນ້ອງແຫ່ງໃດ ?
ໄກຫຼືໃກ້ ບອກໃຫ້ກັບມາ
ອ້າຍຍັງຄອຍຖ້າ ຫວ່າເຫວ່ດວງໃຈ

ຣາຕຣີ ນີ້ຈັນພາໃຫ້ອ້າຍຝັນ
ຄ່ຳຄືນ ລຳພັນລະເມີເພີ້ໄປ
ລົມໜາວ ພັດມາໜາວສັ່ນທົ່ວກາຍ
ແມ່ນໄດ້ ຢູ່ຄຽງໜາວຄົງຫາຍໄປ.

# ດົງໂດກດົງໃຈ

ດົງໂດກແຫ່ງນີ້ ມີມົນຂັງ
ຈາກຈິດຫວັງ ໃຫ້ລຳພຶງ
ຍາມຫ່າງໄກ ກໍຫ່ວງເຖິງ
ບໍ່ຈືດຈາງ

ເມື່ອຍາມພົບເຫັນ ບໍ່ອາຍເອັ້ນ
ຢາກຈະເປັນ ຄູ່ນ້ອງນາງ
ໂທ ຄົນດີ ຂ້າຄອຍຫວັງ
ພຽງແຕ່ນ້ອງ

ດົງໂດກດົງໃຈ ຂ້າບໍ່ເຄີຍຮັກ
ເຄີຍສຳພັນ ເປັນເຈົ້າຂອງ
ຍິງໃດທັງຜອງ ເຝົ້າແຕ່ຫຼຽວມອງ
ນ້ອງພຽງຜູ້ດຽວ ຢູ່ໃນໂລກນີ້

ນ້ອງຄືນາລາ ປຽບດອກຟ້າ
ຂ້າໄຝ່ຫາ ຄູ່ຊີວີ
ຂໍຕອບຮັກ ຮັກຂ້ານີ້
ດ້ວຍເຖີດເອີຍ.

# ດົງຮັກດົງສລາຍ

ໃຈຂ້າສຸດຣະທົມ ໂສກຕຣົມເໝືອນຄົນສິ້ນຫວັງ
ເມື່ອຄົນຮັກ ມາເຫີນຫ່າງ
ເມື່ອຄົນຮັກ ມາຈືດຈາງ
ບໍ່ມີເຫຼືອ ເຍື້ອໃຍ

ຄິດເຖິງເມື່ອເຮົາສອງ ປະຄອງຮັກກັນດ້ວຍໃຈ
ບໍ່ເຄີຍຄິດ ຈະແໜງໜ່າຍ
ຖນອມ ຮັກຍິ່ງອື່ນໃດ
ເທີດທູນ ເໝືອນດວງຊີວັນ

ບໍ່ຄິດ ບໍ່ຄາດ ບໍ່ຝັນ
ຮັກນັ້ນ ຈະມາ ຮ້າງລາ
ຂ້າທົນ ຝືນກິນ ນ້ຳຕາ
ອຸຣາ ຣະບົມ

ລາແລ້ວດົງໂດກເອີຍ ບ່ອນເຄີຍໃຫ້ຄວາມສຸກສົມ
ກັບທຳ ໃຫ້ຂ້າຊ້ຳຕຣົມ
ເຈົ້າມີ ຊາຍອື່ນຊື່ນຊົມ
ຂ້າຕ້ອງ ຂົມໃຈລາ.

# ຄົນໃຈດຳ

ຄົນໃຈດຳ ແກ້ງທຳໃຫ້ຫຼົງ
ຮັກແລ້ວບໍ່ຊື່ຕຣົງ ໝັ້ນຄົງແມ່ນຄືຄຳໝັ້ນ
ສວາດທີ່ຫວັງ ຈາງຮ້າງໄປຫຼືໃຈໄຫວຫວັ່ນ
ອ້າຍຕ້ອງຈາບັນ ໂສກສັນນັ່ງກືນນ້ຳຕາ

ມີຄົນຄອຍ ແກ້ງຢູ່ເບື້ອງຫຼັງ
ຫຼືນ້ອງຈຶ່ງຄຽດຊັງ ອ້າຍດັ່ງເໝືອນຄົນໄຮ້ຄ່າ
ຈະເຮັດຈັ່ງໃດ ງອນງໍ້ໄປນ້ອງກໍໜີໜ້າ
ບໍ່ຫວນຄືນມາ ອຸຣາອ້າຍຕ້ອງຣະທົມ

ນ້ອງໄປ ເຊື່ອຄົນຍຸຄົນແຍ່
ສອງເຮົາມີແຕ່ ອົກຕ້ອງຮ້າວຣະບົມ
ມີຢູ່ໃສນະແຟນຄົນໃໝ່ ທີ່ໝາຍມາຊົມ
ນ້ອງຄົນດຽວອ້າຍຍັງຊ້ຳຕຣົມ ຫຼາຍຄົນຄົງອົກແຕກຕາຍ

ຈົ່ງຄືນມາ ຜູກຮັກອີກທົມ
ຮັກໃຫ້ຊື່ນກະມົນ ສອງຄົນບໍ່ມີວັນໜ່າຍ
ຈົ່ງຊ່ວຍຖນອມ ຄວາມຮັກເຮົາດ້ວຍກັນສອງຝ່າຍ
ຮັກຫຼືຈະຄາຍ ຫາກໃຈເຮົາຊື່ຕໍ່ກັນ.

# ຕ໊ວະໃຫ້ຕາຍ

ໂອ່ ສາວເອີຍ ສາວເຄີຍມີແຟນຫຼືບໍ່ ?
ຖ້າມີ ກໍບອກ
ຖ້າບໍ່ມີ ກໍໃຫ້ບອກ
ເຈົ້າຢ່າມາລວງຫຼອກ ໃຫ້ອ້າຍນີ້ເສົ້າອາວອນ ສາທຸ

ຫາກແມ່ນນາງ ຕ໊ວະອ້າຍ
ໃຫ້ເຈົ້າກາຍ ເປັນຄົນຂາລ່ອຍ
ເກີດມາຊາດໃດ ກໍໃຫ້ຜິດຫວັງຕັ້ງຮ້ອຍ
ເຈົ້າຕ໊ວະຄົນຄືຂ້ອຍ ເອົາແນະ ຊີປ້ອຍໃຫ້ຕາຍ

ໂອ່ ສາວເອີຍ ສາວເຄີຍມີແຟນຫຼືບໍ່ ?
ຖ້າມີ ກໍບອກ
ຖ້າບໍ່ມີ ກໍໃຫ້ບອກ
ເຈົ້າຢ່າມາລວງຫຼອກ ໃຫ້ອ້າຍນີ້ເສົ້າອາວອນ ສາທຸ

ຫາກແມ່ນນາງ ຕ໊ວະອ້າຍ
ໃຫ້ເຈົ້າກາຍ ເປັນຄວາຍຕູ້ດ່ອນ
ເກີດມາຊາດໃດ ແກ່ແຕ່ໄຖອ້ອນຕ້ອນ
ຫາກແມ່ນເຈົ້າຫຼອກຫຼອນ ຂໍໃຫ້ເຈົ້ານອນໄຫຼຕາຍ.

# ໂຊກຕ່າງລ່າງ

ໂຊກເອີຍ ໂຊກຕ່າງລ່າງ
ຊາຕາຊາຍ ນັ້ນຕ່າງລ່າງ
ລືມສາວ ຖືກແຕ່ສາວແມ່ຮ້າງ
ປີນີ້ ຈັ່ງແມ່ນຊວຍ

ເມື່ອກ່ອນນັ້ນ ໂຊກດີບໂຊກດີ
ຕົກມາໃນປີນີ້ ໂຊກເປັນສີຕ່າງລ່າງ
ລືມຜູ້ສາວ ຖືກແຕ່ສາວແມ່ຮ້າງ
ກະຈັ່ງແມ່ນໂຊກຕ່າງລ່າງ ກະຊາຕາຕ່າງລ່າງ

ເມື່ອກ່ອນນັ້ນ ໂຊກດີບໂຊກດີ
ຈະໄປມາແຕ່ລະທີ ກະບໍ່ເຄີຍຊິໄດ້ຍ່າງ
ປີນີ້ຊວຍຢູ່ຕລອດປີ ຈະໄປມາແຕ່ລະທີກະມີຕາຍຕັ້ງແຕ່ຍ່າງ
ກະຈັ່ງແມ່ນໂຊກຕ່າງລ່າງ ກະຊາຕາຕ່າງລ່າງ

ເມື່ອກ່ອນ ຕອນເຈົ້າເປັນສາວ
ຈັ່ງແມ່ນເຈົ້າຂາວ ແອວກົມດີໜໍນາງ
ປີນີ້ເຈົ້າມາປຸ່ມແປງໄປ ຮ້ອາຍ ເຈົ້າກິນອັນໃດມາທ້ອງໄຂ່ອ່າງລ່າງ
ກະຈັ່ງແມ່ນໂຊກຕ່າງລ່າງ ກະຊາຕາຕ່າງລ່າງ.

# ນິນຣັກວັງວຽງ

ວັງວຽງແຫ່ງນີ້ ເໝືອນມີອຳນາດ
ມັດຈິດໃຈຝັງ ພູຜາລ້ອມບັງວັງວຽງແສນງາມ
ຜາແດງຜາຕັ້ງງາມຕາ ເຂົາສູງພຽງຟ້າສີຄາມ
ເບິ່ງແລ້ວທຸກຢ່າງ ສຸດແສນເພີນໃຈ

ແຄມລຳນ້ຳຊອງ ສອງເຮົາຄຽງຄູ່
ໄດ້ຢູ່ໃກ້ກັນ ກອດນ້ອງບໍ່ນານອ້າຍກໍຈາກໄປ
ລານ້ອງໄປສູ່ແນວຣົບ ເພື່ອຣົບສັຕຣູແດນໄກ
ໃຫ້ສົມເປັນຊາຍ ຊາດເຊື້ອຄົນລາວ

ບໍ່ດົນປານໃດ ອ້າຍຈະກັບມາຫາ
ໄປແລ້ວບໍ່ແມ່ນໜີໜ້າ ຈະກັບມາສູ່ຂໍນ້ອງສາວ
ບໍ່ລືມຄຳນອນ ເຄີຍໄປສອງເຮົາ
ແນ່ນອ່າຢູ່ໄກນ້ອງສາວ ນ້ອງສາວເຊື່ອໃຈເຖີດໜາ

ໄກພຽງແຕ່ຕົວ ຫົວໃຈຢູ່ໃກ້
ອາລັຍເຈົ້າຫຼາຍ ຫາກອ້າຍບໍ່ຕາຍຄົງໄດ້ກັບມາ
ສາວເອີຍໂອສາວວັງວຽງ ສຽງນີ້ຄືສຽງເພັງລາ
ອ້າຍຈະກັບມາ ຖ້ານ້ອງບໍ່ລືມ.

# ຈົດໝາຍຂອງພໍ່

ຈົດໝາຍນ້ອຍ ຊຽນເປັນຮອຍຕົວນ້ອຍແລະໃຫຍ່
ຕົກກະໃຈ ນຶກວ່າຜູ້ໃດຊຽນມາ
ທີ່ແທ້ກໍຄື ຈົດໝາຍຂອງພໍ່ຢູ່ບ້ານນາ
ເປັນຫ່ວງໃນການສຶກສາຈຶ່ງຊຽນມາຍາມຖາມຂ່າວ

ໄດ້ເຫັນແລ້ວ ເໝືອນນີແນວພາໃຫ້ມີສຸກ
ສູນສິ້ນຄວາມທຸກ ຫົວໃຈເປັນສຸກອັບເສົາ
ໃນເນື້ອກໍມີ ພໍ່ສອນຄວາມດີໃຫ້ແກ່ເຮົາ
ຄືຢ່າໄປມົວຫຼົງສາວ ເພາະຊີວິດເຮົານັ້ນຍາກຈົນ

ລູກຂໍຍໍມື ກົ້ມກາບອັນທາ
ໄຫວ້ວອນເທວາ ຢູ່ບົນຟ້າຈົ່ງຊ່ວຍດົນ
ໃຫ້ພໍ່ສຸກຂີ ລູກນີ້ສັນຍາຈະສູ້ທົນ
ເຖິງແມ່ນຈະຍາກຈະທົນລູກກໍຍອມທົນສຶກສາໄປ

ລູກຂໍຮ້ອງເພັງນີ້ ແທນໃຈມາໃຫ້ຂ່າວ
ເຣື່ອງນີສາວ ຂໍພໍ່ຈົ່ງໄດ້ນອນໃຈ
ລູກຂໍຟັງຄຳ ສັ່ງສອນຂອງພໍ່ທີ່ສົ່ງໄປ
ຢູ່ໃນຊອງຈົດໝາຍ ຂໍຈຳຝັງໃຈຕລອດການ.

# ພໍກັນທີ

ພໍກັນທີ ຕໍ່ແຕ່ນີ້ບໍ່ຕ້ອງພົບກັນ
ນ້ອງກໍຈົ່ງໄປພໍ້ນ້ອງ ອ້າຍກໍຈະໄປພໍ້ອ້າຍ
ຫັນຫຼັງໃສ່ ຢ່າພົບໜ້າກັນ
ອ້າວ ! ຫັນຫຼັງໃສ່ ຢ່າພົບໜ້າກັນ

ເຮົາຮັກກັນບໍ່ໄດ້ ຫືວໃຈເຮົາບໍ່ຄືກັນ
ນ້ອງເປັນຄົນຫຼາຍໃຈ ອ້າຍຕິຮັກດຽວໜຽວໝັ້ນ
ເຫດໃດເຮົາຈະຮັກກັນ ຊື່ວຊີວັນກໍຄົງບໍ່ມີ

ເຮົາຮັກກັນບໍ່ໄດ້ ຮັກໄປກໍບໍ່ມີທາງ
ນ້ອງເປັນຄົນໃຈນ້ອຍ ນ້ອຍດຽວກໍຫວັງເຫີນຫ່າງ
ໃຫ້ອ້າຍເອົາແຕ່ໃຈນາງ ບໍ່ມີທາງຮັກຈະໝັ້ນໜຽວ

ເຊົາຮັກກັນເຖີດນ້ອງ ບໍ່ຕ້ອງຮັກອີກຕໍ່ໄປ
ຮັກກັນໄປເຮັດຫຽັງ ແຍກທາງໄປຫາເອົາໃໝ່
ຮັກກັນມັນລຳບາກຍາກໃຈ ຮື ! ບໍ່ໄດ້ອ້າຍກໍບໍ່ເອົາ.

# ບໍ່ປາກໃຫ້ນ້ອງຍິ້ມ

ບໍ່ປາກໃຫ້ ນ້ອງຍິ້ມ
ບໍ່ປາກໃຫ້ຍິ້ມ ຍິ້ມໃສ່ໃຜ
ເພາະຮອຍຍິ້ມ ຂອງນາງບາດໃຈ
ບາດໃຈ ຜູ້ຊາຍທີ່ໄດ້ພົບເຫັນ

ບໍ່ປາກໃຫ້ ນ້ອງຫົວ
ບໍ່ປາກໃຫ້ຫົວ ຖ້າບໍ່ຈຳເປັນ
ຢ້ານຄົນພົບ ຫົວໃຈຢຸດເຕັ້ນ
ຢ້ານເປັນ ນ້ອງເປັນອາສຍາກອນ

ຖນອມໄວ້ ໃຫ້ອ້າຍດີກວ່າ
ຢ່າຍິ້ມໄປທົ່ວ ຢ່າຫົວຜິດບ່ອນ
ຢູ່ໃສຂາດອ້າຍ ເຈົ້າຢ່າອອນຊອນ
ຢ້ານຄົນໃຈບອນ ຈະອອນວອນຮັກໝັ້ນໝາຍ

ບໍ່ປາກໃຫ້ ຍິ້ມນັ້ນ
ບໍ່ໃຫ້ຍິ້ມນັ້ນ ສັມພັນກັບໃຜ
ເພາະນ້ອງຍິ້ມ ຫວານຕາຫວານໃຈ
ເກັບໄວ້ຫວງໄວ້ ໃຫ້ອ້າຍຜູ້ດຽວ.

# ສະທ້ານເມື່ອຄອຍ

ເຄີຍຮັກເຄີຍຫໍ່ ເຄີຍຮ່ອນຫໍຫ້ອງນອນຄູ່ໃຈ
ນັບແຕ່ນ້ອງພາກຈາກໄກ ໄປຢູ່ຫົນໃດຫຼືນີ້
ຮູ້ຫຼືບໍ່ ? ວ່າອ້າຍລໍທຸກນາທີ
ລໍຈົນເຖິງວັນນີ້ ແສນຕຣິມຣືດີໜັກໜາ

ນອນໜາວຄອຍຢູ່ ສິ່ງເຊີດຊູອູ້ມໃຈບໍ່ມີ
ທຸກເຊົ້າທຸກແລງໝົ່ນສີ ເໝືອນມີຣາຄີແຮງກ້າ
ອ້າຍໝອງເສົ້າ ເພາະເຈົ້າຈາກໄປລັບລາ
ປານໃດນ້ອງຈະມາ ຈະມາຮ່ອນຫໍຍາມນອນ

ຄອຍ ອ້າຍຄອຍ ດ້ອຍຄວາມຫ່ວງໃຍ
ແສນຣະທົມໝອງໄໝ້ ປ່ຽວໃຈອາວອນ
ເຖິງຍາມກິນ ຫຼືຍາມຫຼັບນອນ
ໃນຫົວໃຈສະທ້ອນ ສັ່ງອອນຄຶດນຳບໍ່ເຊົາ

ເຄີຍເຫັນດວງໜ້າ ເຄີຍຮ່ອນພາພ້ອນພຽງຄູ່ກັນ
ນັບແຕ່ນ້ອງມາຫ່າງຫັນ ສຸດທໍຣະມານອັບເສົ້າ
ຍາມນ້ອງຢູ່ ມີນ້ອງຊ່ອຍຊູບັນເທົາ
ດຽວນີ້ອ້າຍຫງ່ອມເຫງົາ ຂໍເຈົ້າຈົ່ງຫວນຄືນມາ.

# ຕາ

ຕາ ເປັນສິ່ງສຳຄັນ
ສແດງ ໃຫ້ຮູ້ກັນ
ທຳນ້ຳໃຈ ບອກມາ

ພຽງ ແຕ່ເຫັນໃນຕາ
ພາຫົວໃຈ ເກີດຮັກ
ຫ້າມໃຈ ຍາກເຢັນໜັກ
ເກງຈະຮັກ ດຽວດາຍ

ອ້າຍແນເລືອບຕາໄປ ໄປຣດຈິ່ງໄດ້ປຣານີ
ນຶກຮັກເຫຼືອເຕັມທີ ນ້ອງຄົງເຫັນໃນຕາ
ເປັນ ບຸນອ້າຍນຳພາ
ພາສາຍຕາ ປະສານ

ຈິ່ງ ສິ່ງຕາຫວານໆ
ເປັນພະຍານ ໝັ້ນໄວ້
ແທນປະດັບ ຊວງໃນ
ພາຫົວໃຈ ອາວອນ.

# ບໍ່ນອນກໍຝັນ

ບໍ່ນອນກໍຝັນ ຝັນເຫັນ ຝັນເຫັນໜ້າ
ບໍ່ນອນກໍຝັນ ຝັນມາ ຝັນມາຢູ່
ບໍ່ນອນກໍຝັນ ໄດ້ນັ່ງຮຽງ ຄຽງຍອດຊູ້
ບໍ່ນອນກໍຝັນ ວ່າຍອດປະທູ ເປັນຄູ່ນອນ

ຮັກກໍຮັກ ຫວງກໍຫວງ ປານແກ້ວຕາ
ຄຶດຮອດຫາ ຄຶດເຫັນໜ້າ ສຸດອຸທອນ
ຢ່າລືມສຳພັນ ຢ່າລືມສັນຍາ ເຄີຍວ່າວອນ
ໂປຣດເຖີດງາມງອນຢ່າຖອນຮັກຄືນ ມະຊື່ນໃຈ

# ກາຍຂ້ອນຄືນ

ເດິກດື່ນ ຂ້ອນຄືນ ແລ້ວສຸດທີ່ຮັກ
ອ້າຍ ຂໍຝັງຝາກ ຮັກກ່ອນອຳລາ
ຝາກ ສຽງເພັງນີ້ພ່າວອນ ກ່ອນຈະເຂົ້ານອນຫາຍໜ້າ
ໂປຣດເຖີດ ຂວັນຕາ ຈົ່ງຢ່າລືມລັຍ

ເດິກດື່ນ ຂ້ອນຄືນ ແລ້ວສຸດທີ່ຮັກ
ຕ້ອງ ຝືນໃຈຈາກ ທັ້ງທີ່ອາລັຍ
ຢາກຢູ່ ຄຽງຂວັນແນບນອນ ຢາກຢູ່ຮ່ວມໝອນຄຽງໃກ້
ກໍຈຳ ຕັດໃຈ ເພາະກາຍຂ້ອນຄືນ

ຈົ່ງນອນຝັນດີ ຕລອດ ນິທຣາ
ສຸກ ຈົ່ງຮຸ່ງຟ້າ ອາຣຸນວັນໃໝ່
ຝາກສຽງເພັງນີ້ ລອຍໄປ ໃຫ້ໄອ້ກ່ອນຂວັນເຊີຍຊື່ນ
ມື້ໃໝ່ ຄ່ອຍຄືນ ພົບກັນ

ເດິກດື່ນ ຂ້ອນຄືນ ແລ້ວສຸດທີ່ຮັກ
ອ້າຍ ຂໍຝັງຝາກ ສຽງແຜ່ວຮຳພັນ
ປັກ ດວງໃຈນ້ອງນາຣີແນບກາງຮືດີນ້ອງນັ້ນ
ຢ່າໄດ້ ລືມກັນ ນ້ອງຈົ່ງຝັນດີ.

# ບໍ່ຫວັ່ນ

ຫາກເສັ້ນທາງນັ້ນ ທີ່ນາງເລືອກເດີນ ເຫັນມັນສວ່າງ
ຈະໃຫ້ຄວາມຫວັງ ໃຫ້ຄວາມພິຣົມ ສຸກສົມຣືທັຍ
ຈະຊອຍບັນດານ ໃຫ້ຊີວິດນ້ອງ ເຮືອງຮຸ່ງສົດໃສ
ຈຶ່ງເດີນກ້າວໄປ ສູ່ສິ່ງວິລັຍ ທີ່ໃຈຮຽກຮ້ອງ

ອ້າຍຈະບໍ່ງໍ້ ຂໍຄວາມເຫັນໃຈ ໃຫ້ມັນໄຮ້ຄ່າ
ຈະບໍ່ຍອມເສັຽ ແມ່ນພຽງນ້ຳຕາ ໃຫ້ມັນໄຫຼນອງ
ຈະສິ້ນຊີວີ ດ້ວຍວ່າຂາດນ້ອງ ມາຢູ່ຄຽງຄອງ
ເຈັບຊ້ຳຣືທັຍ ໃຈເປື່ອຍເປັນໜອງບໍ່ຂໍຮ້ອງໄຫ້

ຈຶ່ງຈາກໄປດີ ແມ່ນມີຮັກໃໝ່ ຂໍໃຫ້ໜຽວໝັ້ນ
ຮ່ວມສຸກຮ່ວມທຸກ ຄູ່ກັນ ຜອງເທົ່າວັນຕາຍ
ຖ້າຫາກເຂົາດີ ເຂົາມີ ຄວາມຮັກຈິງໃຈ
ຈຶ່ງຮີບຈາກໄປ ມອບໃຈໃຫ້ເຂົາ ເສັຽທີ

ຫາກສິ້ນຄົນຮັກ ສິ້ນຄົນເມດຕາ ໄຮ້ຊາຍຝັນໃຝ່
ໝົດທາງຈະໄປ ຫົວໃຈຣະກັມ ເຈັບຊ້ຳຣືດີ
ຈຶ່ງໄດ້ກັບມາ ກັບມາຫາອ້າຍ ເຖີດຍອດຊີວີ
ບາງທີ່ອ້າຍອາດ ອາດໃຫ້ອະພັຍ ຫາກໃຈຫວ່າງພໍ.

# ບໍ່ຫວັ່ນ

ຫາກເສັ້ນທາງນັ້ນ ທີ່ຊາຍເລືອກເດີນ ເຫັນມັນສວ່າງ
ຈະໃຫ້ຄວາມຫວັງ ໃຫ້ຄວາມພິຣົມ ສຸກສົມຣືທັຍ
ຈະຊວຍບັນດານ ໃຫ້ຊີວິດອ້າຍ ເຮືອງຮຸ່ງສົດໃສ
ຈຶ່ງເດີນກ້າວໄປ ສູ່ສິ່ງວິລັຍ ທີ່ໃຈຮຽກຮ້ອງ

ນ້ອງຈະບໍ່ງໍ້ ຂໍຄວາມເຫັນໃຈ ໃຫ້ມັນໄຮ້ຄ່າ
ຈະບໍ່ຍອມເສັຽ ແມ່ນພຽງນ້ຳຕາ ໃຫ້ມັນໄຫຼນອງ
ຈະສິ້ນຊີວີ ດ້ອຍວ່າຂາດອ້າຍ ມາຄູ່ຄຽງຄອງ
ເຈັບຊ້ຳຣືທັຍ ໃຈເປື່ອຍເປັນໜອງບໍ່ຂໍຮ້ອງໄຫ້

ຈຶ່ງຈາກໄປດີ ແມ່ນມີຮັກໃໝ່ ຂໍໃຫ້ໜຽວໝັ້ນ
ຮ່ວມສຸກຮ່ວມທຸກ ຄູ່ກັນ ຜອງເທົ່າວັນຕາຍ
ຖ້າຫາກເຂົາດີ ເຂົາມີ ຄວາມຮັກຈິງໃຈ
ຈຶ່ງຮີບຈາກໄປ ມອບໃຈໃຫ້ເຂົາ ເສັຽທີ

ຫາກສິ້ນຄົນຮັກ ສິ້ນຄົນເມດຕາ ໄຮ້ຍິງຝັນໃຝ່
ໝົດທາງຈະໄປ ຫົວໃຈຣະກັມ ເຈັບຊ້ຳຣືດີ
ຈຶ່ງໄດ້ກັບມາ ກັບມາຫານ້ອງ ເຖີດຍອດຊີວີ
ບາງທີນ້ອງອາດ ອາດໃຫ້ອະພັຍ ຫາກໃຈຫວ່າງພໍ.

# ຈູບຟາກຮັກ

ຈູບພຽງນ້ອຍດຽວ ເຈົ້າຢ່າໃຈດຳ
ແກ້ມຄິງບໍ່ຊ້ຳ ຫຼືມີບາດແຜ
ເພາະຮັກນ້ອງຈິງ ໝາຍປອງນ້ອງແນ່
ຈູບຈາກໃຈແທ້ ເຈົ້າຢ່ານ້ອຍໃຈ

ຈູບພຽງນ້ອຍດຽວ ເຈົ້າຢ່າຂັດຂວາງ
ຮັກລົ້ນຖ້ວນຊອງ ອ້າຍທົນບໍ່ໄຫວ
ໃຫ້ຂໍຂະມາ ອ້າຍຍັງທົນໄດ້
ຂໍຢູ່ພາຍໃຕ້ ບັງຄັບບັນຊາ

ເພາະນ້ອງໜ້າຮັກ ແລະໜ້າຖນອມ
ອ້າຍຈຶ່ງຈຳຍອມ ແມ່ນນ້ອງເຂັ້ນຂາ
ເພາະແຮງສວາດ ນ້ອງບາດໃນຕາ
ນ້ອງດຶງອຸຣາ ອ້າຍໃຫ້ໄຫວຫວັ່ນ

ຈູບພຽງນ້ອຍດຽວ ເຈົ້າຢ່າຜັກໄສ
ຮັກລົ້ນຖ້ວນໃຈ ນ້ອງຈຶ່ງສິງສານ
ຈູບນ້ອງມັດຈຳ ໄວ້ແທນຄຳໝັ້ນ
ຂໍຈູບຈອນຂວັນ ຕອບຮັກອ້າຍທີ.

# ຈູບຝັງຮອຍ

ຈູບພຽງນ້ອຍດຽວ ແກ້ມຄົງບໍ່ຊ້ຳ
ໂຖຊ່າງຫວ່ານຄຳ ຫວານໄວ້ອ່ອຍໃຈ
ໃຫ້ນ້ອງຫຼົງລືມ ດ້ອຍຫວັງພຽງໄດ້
ຈູບຍອມເສ່ຽງຫາຍ ສຳລັບນ້ອງຍິງ

ຈູບພຽງນ້ອຍດຽວ ຍ່ອມມີຄວາມໝາຍ
ແມ່ນຮັກຖ້ວນໃຈ ອ້າຍເຕັມປ່ຽມຈິງ
ອ້າຍຂໍຂະມາ ແລ້ວຂໍທຸກສິ່ງ
ຂໍຈູບຈາກຍິງ ນີ້ຫຼືຜູ້ຊາຍ

ຖ້ານ້ອງໜ້າຮັກ ແລະໜ້າຖນອມ
ເຖິງຈົນຍິນຍອມ ໃຫ້ນ້ອງເຂັ່ນຂ້າ
ອ້າຍຄົງຄອຍໄດ້ ໄວ້ເມື່ອວິວາ
ຕ້ອງສິ້ນອຸຣາ ຂອງອ້າຍແນ່ໆ

ຈູບພຽງນ້ອຍໆ ຝາກຮອຍຣາຄີ
ເມື່ອອ້າຍຜີກໜີ ແລະບໍ່ຫຼຽວແລ
ຈູບທີ່ມັດຈຳ ນັ້ນຄົງອາຍແນ່
ຈະຕິດເປັນແຜ ຕາມນ້ອງຈົນຕາຍ.

# ຫວັ້ນໃຈ

ຫວັ້ນຈິດຫວັ້ນໃຈ ຫວັ້ນນ້ອງມີໃໝ່
ອ້າຍເຝົ້າຣະແວງສິງໃສ ຫວັ້ນດວງໃຈອ້າຍຈະຜິດຫວັງ
ທຸກໆນາທີ ອ້າຍນີ້ເຝົ້າຄອຍຣະວັງ
ເກງນ້ອງຈະຫ່າງຈະຮ້າງ ເກງນ້ອງຈະຊັງແໜງໜ່າຍ

ຄ່ຳຄືນຄຸ່ນຄິດ ຈິດອ້າຍຈຽນປ່ອງ
ທຸກວັນອ້າຍໄດ້ແຕ່ຫວງ ຫ່ວງນ້ອງນັ້ນຈະຫຼຸດໄປ
ເພາະເຫັນຊາຍອື່ນ ເພື່ອນອ້າຍນັ້ນເຂົາສົນໃຈ
ເກງນ້ອງຈະຫວັ່ນຈະໄຫວປ່ຽນໃຈໄປເສັຽຈາກອ້າຍ

ຢ່າເລີຍ ຢ່າມີຫຼາຍໃຈ ຖ້ານ້ອງຈະຮັກຊາຍໃໝ່
ໂປຣດຕັດໃຈ ໄປເສັຽເຖີດນ້ອງ
ອ້າຍເອງຍິນດີ ເສັຽສລະທັງນ້ຳຕານອງ
ເຖິງແມ່ນດວງຈິດຈະໝອງໝົ່ນໝອງອ້າຍຈະທົນ

ຫາກຍັງຮັກອ້າຍ ຢ່າຄິດມີໃໝ່
ຮັກດຽວຂໍຢ່າທຳລາຍ ຢ່າທຳໃຈເພື່ອນຊາຍໝອງໝົ່ນ
ອ້າຍຂໍວິງວອນ ເທພໄທ້ນັ້ນຈົ່ງຊ່ວຍດົນ
ວອນນ້ອງຈົ່ງຢ່າເປັນໂຈນທ່ຽວປົ້ນໃຈລູກຜູ້ຊາຍ

# ຫວັ່ນໃຈ

ຫວັ່ນຈິດຫວັ່ນໃຈ ຫວັ່ນອ້າຍມີໃໝ່
ນ້ອງເຝົ້າຣະແວງສົງໃສ ຫວັ່ນດວງໃຈນ້ອງຈະຜິດຫວັງ
ທຸກໆນາທີ ນ້ອງນີ້ເຝົ້າຄອຍຣະວັງ
ເກງອ້າຍຈະຫ່າງຈະຮ້າງ ເກງອ້າຍຈະຊັງແໜງໜ່າຍ

ຄ່ຳຄືນຄຸ່ນຄິດ ຈິດນ້ອງຈຸ່ມປ່ອງ
ທຸກວັນນ້ອງໄດ້ແຕ່ຫວງ ຫ່ວງອ້າຍນັ້ນຈະຫຼຸດໄປ
ເພາະເຫັນຍິງອື່ນ ເພື່ອນນ້ອງນັ້ນເຂົາສົນໃຈ
ເກງອ້າຍຈະຫວັ່ນຈະໄຫວປ່ຽນໃຈໄປເສັຽຈາກນ້ອງ

ຢ່າເລີຍ ຢ່າມີຫຼາຍໃຈ ຖ້າອ້າຍຈະຮັກຍິງໃໝ່
ໂປຣດຕັດໃຈ ໄປເສັຽຈາກນ້ອງ
ນ້ອງເອງຍິນດີ ເສັຽສລະທັງນ້ຳຕານອງ
ເຖິງແມ່ນດວງຈິດຈະໝອງໝົ່ນໝອງນ້ອງຈະທົນ

ຫາກຍັງຮັກນ້ອງ ຢ່າຄິດມີໃໝ່
ຮັກດຽວຂໍຢ່າທຳລາຍ ຢ່າທຳໃຈເພື່ອນຍິງໝອງໝົ່ນ
ນ້ອງຂໍອີ່ງອອນ ເທພໄທ້ນັ້ນຈົ່ງຊ່ວຍດົນ
ວອນອ້າຍຈົ່ງຢ່າເປັນໂຈນທ່ຽວປົ້ນໃຈລູກຜູ້ຍິງ

# ຮັກຍິງດຽວ

ພຽງພົບເນື້ອເຢັນ ເຫັນໜ້າ
ຍັງບໍ່ທັນຈາ ໃຈຂ້າອາບທອາມ
ຊ່າງຜຸດຜ່ອງງາມ ເລີດລ້ຳຣຳພັນ
ພິງພັດຕັກນາງ ອັກສອນ
ເມດບັງອອນ ເໝືອນເອົານິ້ນນາປັ້ນ
ອ້າຍເກັບໄປຄຶດ ທັງຄືນທັງວັນ
ອ້າຍເກັບໄປຝັນ ທຸກວັນເວລາ
ສອນການະເທບ ປັກໃຈອ້າຍແລ້ວ
ໜີຄົງບໍ່ແຄ່ວ ບໍ່ລືມແກ້ວຕາ

ນີ້ນ້ອງຄົນງາມ ຢ່າງນີ້
ບໍ່ໜີ ຫ່າງໄກຫາຍໜ້າ
ຖ້າຂາດແກ້ວຕາ ຄົງນ້ອຍນອນ
ມີນ້ຳມີປາ ເປັນເພື່ອນ
ດາວກໍມີເດືອນ ເປັນຄູ່ຊູໃຈ
ນົກກໍມີໄມ້ ອາສັຍເປັນຄອນ
ແຕ່ອ້າຍໄຮ້ຍາດ ຂາດເພື່ອນ
ປຽບກໍເໝືອນ ນົກຂີ້ນິ້ນເຫຼືອງອ່ອນ
ຂາດທີ່ອາສັຍ ໄຮ້ທີ່ເອນນອນ
ຂາດຄູ່ຄຽງໝອນ ຕ້ອງນອນດຽວດາຍ
ຫວັງໃຈໄອ້ວ່າ ຈະມາເພິ່ງນ້ອງ
ຂໍບຸນຈ່ອງ ໄດ້ເປັນເພື່ອນໃຈ
ສົງສານອ້າຍນະ ນ້ອງນະ
ສັດສາ ນ້ອງຍັງລ້ຽງໄດ້

| | |
|---|---|
| ນຶກວ່າຮັບໄວ້ | ເປັນທາດນາງ |
| ຮັກນ້ອງຮັກຈິງ | ຮັກຍິ່ງດວງໃຈ |
| ຮັກນີ້ນານໄປ | ໃຫ້ເກີດພະລັງ |
| ທໍານຶກກັ້ນໃຈ | ອ້າຍຢ້ານຈະພັງ |
| ຫາກວ່າບໍ່ສິນດັ້ງ | ຕັ້ງໃຈໄວ້ |
| ກໍເຊີນຂ້າເສັຽ | ໃຫ້ຕາຍເຖີດນ້ອງນະ |
| ທໍຣະມານ | ຈິດໃຈລໍ້າ |
| ກໍຄົງຊໍ້າຕາຍ | ຈົນໄດ້ |
| ແມ່ນຫາກ | ນ້ອງນາງເຫັນໃຈ |
| ສົ່ງປາກກາຍຕາ | ພາສີຮັກໝັ້ນຄົງ |
| ພ້ອມຈົ່ງ | ສົ່ງຍິ້ມພິມໃຈ |
| ແລ້ວຈຶ່ງ | ບອກຄໍາຮັກຈິງ |
| ບອກຈິງ | ທຸກສິ່ງອັນ |
| ຢ່າເອົາລົມລີ້ນລວງ | ມາລໍ້ໃຈກັນ |
| ຫຼອກລວງກັນ | ນັ້ນມັນບໍ່ຍາກ |
| ແຕ່ຫາກ | ມັນຊໍ້າໃຈ |
| ສົງສານອ້າຍນະ | ຂວັນອ່ອນ |
| ມາເອົ້າອອນ | ນ້ອງນາງ |
| ຄວາມຫວັງ | ຂໍຈົ່ງໄດ້ດັ້ງຕັ້ງໃຈ |
| ຂໍເປັນຍອດຊູ້ | ຂໍຢູ່ຄູ່ນ້ອງ ຂໍຈອງເອົາໄວ້ |
| ແມ່ນເກີດຊາດໃດ | ຂໍໄດ້ຢູ່ຄູ່ກັນ |
| ນົ່ງຂວັນ | ຮຽມເອີຍ |
| ໃຜອີກລະນ້ອງ | ທີ່ໃຝ່ປອງຮັກຈິງຄືອ້າຍ |
| ແມ່ນຊີບຈະວາຍ | ຂໍໄດ້ຢູ່ຄູ່ເຊີຍ |
| ຍອມສລະ | ແມ່ນວາຍຊີວັນ |
| ໃຈບໍ່ຫວັ່ນ | ແມ່ນຄອງຕາຍເລີຍ |
| ຂະເນີຍ | ພຽງເຈົ້າ. |

# ລະຫານ້ຳ

ລະຫານ້ຳ ບ້ານງານແຫ່ງເມືອງສອງຄອນ
ແລະບຶງໃນດອນ ແຜ່ນດິນສວັນ
ຖິ່ນນີ້ ອຸດົມສົມບູນພູນພັນ
ພືດທັນຍາຫານ ເຂົ້າປາຢາຟານ

ລະຫານ້ຳ ນ້ຳນອງປຸ່ງນຢູ່ທຸກການ
ສົມດັ່ງກ່າວຂານ ແຜ່ງພົນຖິ່ນໄກ
ແຕ່ນ້ຳ ບໍ່ເຄີຍຖ້ວມບ້ານນີ້ໄດ້
ອີກທັ່ງນາກຫຼາຍ ບໍ່ເຄີຍເສັ້ຽຫາຍສັກທີ

ລະຫານ້ຳ ສົມຄອນແກ່ພັທນາ
ແລະຊື່ອສຸດຕາ ເຂົ້າຊຽວຂະຈີ
ຄໍ່າແລງ ແສງທອງສ່ອງຜືວນະທີ
ເຊບັ້ງຫຽງນີ້ ງານເຫຼືອຮໍາພັນ

ລະຫ່ານ້ຳ ເຈົ້າງານດັ່ງຄໍາລືຊາ
ພັທສິນາ ອາຮາມເສີດສັນ
ໄດ້ມາ ອຸຮາຂ້າສຸດຕື່ນຕັນ
ຢາກປັກຫຼັກໝັ້ນ ກັບລະຫ່ານ້ຳ.

# ພໍ່ອເບໍ່ເມັງໄພ້

ຊາຍ ເອະ ! ນ້ອງນີ້ມາຈາກໃສ ?
ແລ້ວເຫດໃດ ນ້ອງຈຶ່ງງຽບເຫງົາ ?
ຫຼືນ້ອງມີ ອາການໂສກເສົ້າ
ໂປຣດນ້ອງຈົ່ງເລົ່າ ໃຫ້ອ້າຍຟັງເຖີດໜາ

ຍິງ ນ້ອງ ບໍ່ໄດ້ໄປໃສມາ
ກໍພຽງແຕ່ວ່າ ນ້ອງໄປບ້ານເພື່ອນເກົ່າ
ຊາຍ ບ້ານເພື່ອນເກົ່າ ບ້ານເພື່ອນເກົ່າຢ່າງໃດ ?
ຈົ່ງບອກມາໄວໆ ວ່ານ້ອງໄປເຮັດຫຍັງ ?

ຍິງ ນ້ອງຈະບອກ ຈະບອກໃຫ້ອ້າຍຟັງ
ວ່າເພື່ອນນ້ອງນັ້ງ ລົມກັນແກ້ເຫງົາ
ຊາຍ ຢ່າຕົວະເລີຍ ນ້ອງເອີຍຈົ່ງບອກເລົ່າ
ຍິງ ອ້າວ ເລົ່າກໍເລົ່າ ແລ້ວຢ່າກຽດຊັງນ້ອງໜາ...

ຊາຍ ອ້າຍຈະກຽດ ນ້ອງໄປຢ່າງໃດ
ເພາະນ້ອງເປັນຂວັນໃຈ ແນບໃນອຸຣາ
ຍິງ ຖ້າເປັນເຊັ່ນນັ້ນ ນ້ອງກໍໄປມີເຣື່ອງມາ
ຊາຍ ເຣື່ອງອັນໃດແລ້ວໜາ ຈົ່ງບອກມາຢ່າປິດບັງ

ຍິງ ຄືວ່າ ນ້ອງໄປພົບເສດຖີ

ໂອຍເຂົາລອຍເຕັນທີ່ ມາກມີເງິນທອງ
ເຂົາຊວນນ້ອງ ເຂົ້າຮ່ວມອິງໄພ້ຕອງ
ນ້ອງຈຶ່ງເຂົ້າທົດລອງ ແລ້ວກໍຕ້ອງເສັຽເງິນມາ

ຊາຍ ໂທ ໝາຍຄວາມວ່າ ນ້ອງໄປຫຼີ້ນໄພ້
ໂອຍຕາຍແລ້ວຂວັນໃຈ ນ້ອງໄປຫຼີ້ນໄພ້ເສັຽເງິນມາ
ຖ້າເປັນເຊັ່ນນີ້ ອ້າຍຕ້ອງຕີແລະຂ້າ
ເພື່ອພາຍຂ້າງໜ້າ ນ້ອງຈຶ່ງຈະຈົດຈຳ

ຍິງ ອ້າວ ອ້າຍວ່າ ຈະບໍ່ກຽດຊັງ
ພໍນ້ອງເລົ່າໃຫ້ຟັງ ແລ້ວອ້າຍຈະຂ້າຕີຊ້ຳ
ໂຖ ອ້າຍນີ້ ຊ່າງມາໃຈດຳ
ເຖິງຈະຂ້າຈະທຳ ໂປຣດຟັງຄຳນ້ອງກ່ອນ

ຊາຍ ເຣື່ອງອັນໃດ ສາວຂີ້ໄພ້ເຈົ້າຢ່າມາອອນ
ຍິງ ແນະ ຟັງຄຳນ້ອງກ່ອນ ອ້າຍຍັງຫຼີ້ນເບີແທນຫຼີ້ນໄພ້
ຫຼີ້ນເບີ ມັນກໍຈິບຫາຍ
ຊາຍ ໂອຍ ອ້າຍລືມໄປ ຫຼີ້ນເບີຫຼີ້ນໄພ້ມັນກໍຈິບຫາຍເໝືອນກັນ

ຍິງ ນ້ອງຈະເຊົາ ເຣື່ອງການຫຼີ້ນໄພ້
ຊາຍ ໂອຍ ອ້າຍດີໃຈ ອ້າຍຈະເຊົາຫຼີ້ນເບີ
ຮອມເຊົາຫຼີ້ນເບີ ເຊົາຫຼີ້ນໄພ້
ສອງເຮົາມາຮ່ວມໃຈກັນ ເຊົາຫຼີ້ນການພະນັນ.

# ສາວເຖົ້າ

ເຖົ້າ　　　　ຈິຕາຍຢູ່ແລ້ວ
ນ້ອງແກ້ວ　　　　ຄອຍຖ້າຜູ້ໃດ ?
ເຂົາຢູ່ເມືອງນອກ　　　　ຫຼືວ່າເມືອງໃນ ?
ອີກດົນປານໃດ　　　　ເຂົາຈຶ່ງຈະມາສູ່ຂໍ ?

ເຖົ້າ　　　　ເກີນໄປເສັຽແລ້ວ
ຫາແມວ　　　　ແຕ່ງໄວ້ໃຫ້ພໍ
ໃຫ້ໜຸ່ມທັງຫຼາຍ　　　　ເຂົາວ່າຣະອໍ
ໃຫ້ຄືນເຂົາຍໍ　　　　ວ່າປານອາຍຸສິບຫົກປີ

*ແມ່ນເຈົ້າຖ້າຜູ້ໃດເກາະ ຄືວ່າກະດັກກະດໍ້ແທ້*
ຂໍຖາມເຈົ້າແດ່　　　　ຫຼືວ່າບໍ່ແຄຜູ້ຊາຍລະຕິ ?
ຫຼືເທພເຈົ້າ　　　　ສິ່ງນາງມາເກີດຟຣີໆ
ເປັນໂສດຕະລອດຊີວິເກີດເປັນທະນີບໍ່ດີກວ່າວ໋າ ?

ເໜີດ　　　　ສັດທາເສັຽແລ້ວ
ນ້ອງແກ້ວ　　　　ສິ້ນຄວາມໂສພາ
ເຈົ້າເກີດເປັນຍິງ　　　　ຂາດຊາຍທົວຊາ
ຂາດຄູ່ນິທຣາ　　　　ເກີດມາຕ້ອງໜາວຕະລອດການ

*ແມ່ນເຈົ້າຖ້າຜູ້ໃດເກາະ ຄືວ່າດົນກະດັກກະດໍ້ແທ້*
*ກະດຽວວ່າເອົາເພື່ອໄປແຕ່ດົນແລ້ວນາ*
*ຊິຖ້າໃຜອີກ ຊ້ຽວເອົາຊະນ້ອງ　ຮ້າ ໆ ໆ ໆ*

*ຊ້ຽວເອົາສາ ຈັກໜ່ອຍຊິເຖົ້າຄ້າງບ້ານໃດ໋ ຮ້າ ໆ ໆ ໆ*

# ສາວເຖົ້າແຄ້ນ

ເຖົ້າ          ບໍ່ຄຸງຫືອໃຜ
ແຄ້ນໃຈ          ຜູ້ຊາຍປາກຄັນ
ເຂົາຢູ່ດີໆ          ກໍມາເສກສັນ
ເນື້ອແທ່ອຫນັງຍານ          ບໍ່ຫນັກກະບານຫືອໃຜ

ເຖົ້າ          ກໍຕາມເທາະແມ໋
ບໍ່ເຫັນແຄ          ເຈົ້າເລີຍຍອດຊາຍ
ອ່າໄດ້ອ່າດີ          ຄືນຫນ້າບໍ່ອາຍ
ຢ່າມາລອດລາຍ          *ລອງກໍຍັງໄດ້*          *ຖ້າອ່າຍອດດີ*
*ບໍ່ໄດ້ຖ້າຜູ້ໃດດອກ*          *ຄືນາເອົ້າລໍາໄລ*          *ກະດັກກະດໍ້ແທ້*

(ແຍກ)          ຂໍເຊີນຟັງແດ່          ຂ້ອຍບໍ່ຢາກແລຜູ້ຊາຍໃຈຜີ
ຂ້ອຍລົງມາເກີດ          ເພື່ອແກ້ງພວກຫນຸ່ມອັບປີ
ເປັນໂສດຟຣີໆ          ຍັງດີກວ່າມີຜົວແນບກາຍ
ຢ່າ          ມາກອນໂນໂຫ
ທາໂດ          ມັນຫນ້າເຈັບໃຈ
ເປັນຫນຸ່ມກໍຕາຍ          ເປັນເຖົ້າກໍຕາຍ
ຢ່າມາອຸ້ມອາຍ          ເຮີໆ ຈັກໜ່ອຍເຖົ້າໃຈຮ້າຍ
ລະຊິເຈັບໂຕ          ບໍ່ຮູ້ເມື່ອໃດ໋ຫັ້ນນະ

(ເອົ້າ)          *ເຈົ້າຫັ້ນແດ່ !*          *ແມ່ນເຈົ້າເຮັດອີ່ຫຼັງຢູ່ຫັ້ນເກາະ*
*ກະດຸງອອ່າ*          *ເອົາເນັ້ງແຕ່ດົນແລ້ວນ໋າ*
*ຊ້ຽວເອົາຊະແມ໋ອ້າຍ*          *ຢ່າສຸຊອກເອົ້າໃຫ້ແຕ່ຜູ້ຍິງຫຼາຍແມ໋ !*
*ອັນຂ້ອຍຫຼຽວເບິ່ງເຈົ້າຫັ້ນມັນກໍເຕບເຊບພໍແຮງໃດ໋ຫັ້ນນະ*

(ແຍກ)
(ເອົ້າ)          *ອັນຂ້ອຍນີ້ເກາະ*          *ບໍ່ໄດ້ຖ້າຜູ້ໃດດອກ*
*ຢ່າສຸເອົ້າລໍ່າໄລ*          *ກະດັກກະດໍ້ຫຼາຍແມ໋ !*
*ເອົາຊະເດີ*          *ເນັ້ງຫັ້ນນະ*
*ຈັກໜ່ອຍເຂົາ*          *ຊິຮ້ອງອ່າ*          *ອີຕາກະເທືອຍຫັ້ນນະ.*

# ເຖົ້າກໍມັກ

ເຖິງເຖົ້າ ກໍເປັນຕາມັກ
ໜ້າຮັກ ກວ່າສາວອາຍຸສິບສີ່
ໂບຮານ ທ່ານວ່າຄົນເຖົ້າໃຈດີ
ໂອບອ້ອມອາຣີ ບໍ່ມີໂມໂຫໂຫໂສ

ເຖິງເຖົ້າ ກໍບໍ່ເປັນຫຽັງ
ເນື້ອໜັງ ນັ່ງສັ່ງຍັງຄຶ່ງເຕັ້ນໂຕ
ສະຕຣີ ສາວແກ່ຢ່າຟ້າວໂມໂຫ
ຍັງງາມອັກໂຂ ເໝືອນຄຣີໂອພັດຕຣາ

ຢ່າ ໄປເຊື່ອເຂົາ
ເຣື່ອງເພັງສາວເຖົ້າ ຈາກສຽງທີ່ເຂົາຮ້ອງມາ
ເຂົາຂຽນເຂົາແຕ່ງ ເພື່ອຄວາມສຸກສັນທັນສາ
ນ່ວນຊື່ນເຮຮາ ບໍ່ໄດ້ຂຽນວ່າໃຜເລີຍ

ເຖິງເຖົ້າ ກໍຂໍປອງຮັກ
ເຝົ້າຮັກ ແມ່ນາງໄວ້ເປັນຄູ່ເຊີຍ
ສາວນ້ອຍນີ້ຢູ່ ບໍ່ສູ້ເຖົ້າເລີຍ
ຢ່າແກ້ງເມີນເສີຍ ສາວເອີຍເຖົ້າກໍມັກ.

# ຫນຸ່ມຫນ້າຫນາວ

ເມື່ອລົມໜາວ ພັດຫວີວມາ
ແລ້ວພາດວງໃຈ ໃຫ້ໄຫວຫວັ່ນ
ຂາດຄູ່ຄຽງ ກ່ອນຂວັນ
ຫວນຄິດ ຈິດເຝົ້າໄຝ່ຫາ

ໄດ້ແຕ່ນອນ ນອນໜາວກາຍ
ຫາໃຜ ມາຮຽງບໍ່ເຫັນໜ້າ
ແຕ່ກຳເນີດ ເກີດມາ
ໜາວອຸຣາ ມາຕະລອດການ

ແລບົນຟ້າ ດາຣາຄູ່ຄຽງເດືອນ
ຍິ່ງເຕືອນໝອງ ດວງໃຈສຸດທໍຣະມານ
ຍິງໃດໜໍ ຈະເຫັນໃຈຂໍໄຫວ້ວານ
ໂປຣດສົງສານ ນົງຄານໃຫ້ແນບໜູນ

ຫາກມີຄົນ ຊື່ນຊິດກາຍ
ໜາວຄົງຫາຍ ໃຫ້ກາຍອົບອຸ່ນ
ຫາກມີ ຄົນເກື້ອໜູນ
ແນບນອນ ຄົງຈະສຸກເອີຍ.

# ສີ້ທອງຫົວໃຈ

ສີ້ທ້ອງຫົວໃຈ ຍັງລໍຊາຍຢູ່
ຍັງຄອຍຫາຄູ່ ຢູ່ມາຕັ້ງນານຫຼາຍປີ
ຍັງບໍ່ມີຊາຍ ໝາຍຮ່ອມຊີວີ
ຕ້ອງທົນນອນໜາວຮີດີ ບໍ່ມີຊາຍໃດຕ້ອງການ

ສີ້ທ້ອງຫົວໃຈ ຍັງລໍຄອຍບ່າວ
ຍັງບໍ່ມີບ່າວ ເຂົ້າມາຮ່ວມທໍສຳພັນ
ຄອງຄວາມເປັນໂສດ ນານານແສນນານ
ຍັງບໍ່ມີຊາຍສົງສານ ປະທານຄວາມຮັກໃຫ້ມາ

ຫົວໃຈ ຊ່າງທໍຣະມານ
ໂທເອີຍສວັນ ຈົ່ງທານຮັກຂ້າເຖີດໜາ
ຂໍໃຫ້ຊາຍນັ້ນ ຮັກຈິງດັ່ງວ່າ
ນ້ອງເອງສຸດປາຖນາ ບູຊາຮັກຢູ່ແນບກາຍ

ສີ້ທ້ອງຫົວໃຈ ຍັງລໍຄອຍຄູ່
ໂປຣດເຖີດຍອດຊູ້ ເອັນດູຍິງທີ່ຂາດຊາຍ
ຈະເປັນຊາຍແກ່ ຫຼືບ່າວກໍໄດ້
ຂໍພຽງໃຫ້ຮັກຈິງໃຈ ນ້ອງກໍຮັກໄດ້ສເມີ.

# ອ່ວຍພອນປີໃຫມ່

ວັນນີ້ ກໍເປັນວັນດີ
ເປັນວັນສຸກຂີ ປີໃໝ່ວຽນມາ
ຂໍອອນເທພບຸດຢູ່ຊັ້ນຟ້າ ຮາທນາເທບເທວາຢູ່ຊັ້ນບົນ
ຢາກສົ່ງພອນກຸສົນ ໃຫ້ທ່ານທຸກຄົນສບາຍດີ

ວັນອາທິດ ຂໍໃຫ້ມີສຸກລົ້ນ
ປີໃໝ່ວຽນວົນ ທ່ານທຸກຄົນຈົ່ງສຸກຂີ
ວັນຈັນນັ້ນ ກໍເປັນວັນດີ (ຊ້ຳ)
ປີເກົ່າກາຍລາໜີ ຂໍທ່ານຈົ່ງມີໂຊກຊັຍ

ວັນອັງຄານ ອາຍຸໃຫ້ຍືນຍາວໝັ້ນ
ຄວາມສຸກນິຣັນ ໃນໂລກແຫ່ງຄວາມວິລັຍ
ວັນພຸດນັ້ນ ຂໍໃຫ້ສຸກໃຈ (ຊ້ຳ)
ມີຄວາມສຸກສົດໃສ ທຸກໆຄົນໃນຄອບຄົວ

ວັນພະຫັດ ຈົ່ງມີຄວາມສຸກ
ໂລຄາທຸກ ຢ່າໄດ້ມີຕິດຕົວ
ວັນສຸກນັ້ນ ຢ່າປອດເກົ້າເມົາຫົວ (ຊ້ຳ)
ວັນເສົາຢ່າໝອງມົວ ທຸກຄອບຄົວຈົ່ງຢູ່ດີ

ເຈັດວັນນີ້ ຢ່າໄດ້ມີມານຕ້ອງ
ເຈັບເປັນພຍອງ ເໝືອນດາວຈະຣັດເຈັດສີ
ຄວາມທຸກນາໆ ຈົ່ງຕາມປີເກົ່າລາໜີ (ຊ້ຳ)
ໃນວັນໃໝ່ປີນີ້ ຈົ່ງສຸກຂີທຸກທ່ານເອີຍ.

# ເກືອບຕັດສິນໃຈ

ເກືອບຕັດສິນໃຈ ຈາກອ້າຍ
ນ້ອງຈອນຈະກາຍ ເປັນເພັຊຄາດ
ເກືອບບັ່ນທາງຮັກ ທີ່ເຮົາຮ່ວມອາດ
ດ້ອຍໃຈບໍ່ອາດ ສູ້ຄວາມຂົມຂື່ນ

ເກືອບຕັດສິນໃຈ ຈາກອ້າຍ
ນ້ອງຈອນຈະກາຍ ເປັນຂອງຄົນອື່ນ
ເກືອບທົນບໍ່ໄຫວ ຣືທັຍສຸດຝືນ
ນາຊ້າພຽງຄືນ ກໍຄົງຂາດກັນ

ຄອຍນ້ອງທົນຄອຍ ນາຕັ້ງນານປີ
ຈາກນັ້ນນາເປັນເຈັດປີ ຫົວໃຈນ້ອງນີ້ຍັງໝັ້ນ
ຮັກດຽວຊື່ຕຣົງ ຫວັງວ່າຈັກວັນ
ສ່ວນບຸນທີ່ນ້ອງສ້າງນັ້ນ ຄົງນີວັນ ນີວັນສນອງ

ຫາກນາຊ້າໄປ ຈັກນ້ອຍ
ຮັກຄົງຂາດລອຍ ເປັນຝອຍລະລ່ອງ
ເກືອບສູນສິ້ນຮັກ ທີ່ຍັງໄຝ່ປອງ
ເກືອບຕ້ອງຫ່າງໄກ ເພາະຊາຍອອດດີ.

# ເຈົ້າຫຼອກຂ້ອຍແລ້ວ

ເຈົ້າຫຼອກຂ້ອຍແລ້ວ ເຈົ້າຫຼອກຂ້ອຍແລ້ວ
ຫຼອກແລ້ວຕົວະແລ້ວ ຕົ້ມແລ້ວຈົນເປື່ອຍ
ຫຼົງເຊື່ອນໍ້າຄໍາ ແລ່ນນໍາຈົນເມື່ອຍ
ໂສດໆຢູ່ເສື້ອຍ ໜໍເຖົ້າຕົວດີ

ເຈົ້າມີລູກແລ້ວ ເຈົ້າມີເມັຽແລ້ວ
ພໍແລ້ວເຊື່ອແລ້ວ ເຫັນແລ້ວອານນີ້
ລູກຕາດໍາໆ ຕັ້ງສາມຕັ້ງສີ່
ຢຸດເລງຊະທີ ຈົ່ງມີເມດຕາ

ເປັນຄົນທັ້ງທີ ຍາດພີ່ນາເກີດ
ຄຶດວ່າອີເລີດ ແລ້ວບໍ່ອາດຍາ
ຫຼອກລວງຕົວະຍົວະ ປິດບັງນາໆ
ລູກເຕົ້າພັລຍາ ຄອຍຖ້າຢູ່ເຮືອນເປັນຝູງ

ຢຸດຫຼອກໄດ້ແລ້ວ ລູກເມັຽມີແລ້ວ
ລະອັງຖືກແຮ້ວ ພໍແລ້ວລະລຸງ
ຢູ່ກັບລູກເມັຽສາ ຢ່ານາຍຸ້ງ
ຢ່າກອນຢ່າຄຸງ ພໍ່ລຸງຫຼີກໄປ.

# ຄິດວ່າເຂົາ

ຄິດວ່າເຂົາ ຮັກເຮົາດ້ວຍໃຈສເນ່ຫາ
ຄິດວ່າເຂົາ ໝາຍປາຖນາຮັກຈິງ
ນັ່ງນອນຍັງຄິດ ຄິດຮັກຍອດຍິງ
ຮັກຈິງຫຼືໃດ ສິງໃສໃຈຢູ່

ໄດ້ແຕ່ຄິດ ຄິດຮັກແຕ່ເຂົາສຸກໃຈ
ໄດ້ແຕ່ຄິດ ຮັກແລະບູຊາເທີດທູນ
ຫາກໄດ້ຈອນຂວັນ ນ້ອງນາຖຽງຄູ່
ຢູ່ຮຽງຄຽງກາຍ ອ້າຍຄົງສຸກໃຈ

ຈະຮັກຫຼືລໍ້ກັນຫຼິ້ນ ສັນໃດ ?
ໄປຣດໄດ້ເອີ່ຍຄໍາ ຄໍາໝັ້ນຈາກໃຈ
ແມ່ນຮັກອ້າຍຈິງ ຢ່າໄດ້ອຽງອາຍ
ອ້າຍຈະຖນອມ ບໍ່ຍອມໃຫ້ຮັກເຮົາສລາຍ

ຫຼືນາງຄິດ ຄິດຊັງອ້າຍນີ້ຢ່າງໃດ ?
ຫຼືນາງຄິດ ຮັກອ້າຍກໍພຽງນໍ້າໃຈ
ສ່ວນຕົວອ້າຍນີ້ ກໍຄິດແລະຄິດ
ຄິດແຕ່ຮັກນາງ ຮັກຈົນຊົ່ວຟ້າດິນ.

# ເພາະອ້າຍຈົນ

ອ້າຍຈົນລະຕິ ນ້ອງຈຶ່ງເມີນ ຈຶ່ງເມີນນ້ອງຈຶ່ງເມີນ
ອ້າຍຂາດອ້າຍເຂີນ ເງິນທອງຂອງໃຊ້ ເງິນທອງໆຂອງໃຊ້
ອ້າຍຂາດທຸກຢ່າງ ຈະຄອຍເອົາໃຈ
ນ້ອງຈຶ່ງປຸ່ງນໄປ ທັນໄປເປັນຂອງຄົນອື່ນ

ອ້າຍບຸນບໍ່ເຖິງ ດ້ອຍກວ່ານາງ ກວ່ານາງ ດ້ອຍກວ່ານາງ
ນ້ອງຈຶ່ງເມີນໝາງ ຫາທາງຫວານຊື່ນ ຫາທາງໆຫວານຊື່ນ
ໄດ້ໃໝ່ຊື້ນເບາະ ເກາະຜິດຄິດຝືນ
ຫາວ່າພື້ນທືນ ລ່ອງເກີນຜິດຜີຂໍນຳ

ເຂົາຄົງລ່ຳລວຍ ນັ້ງຄັ້ງເສດຖີ
ນາຫຼົງເຈົ້ານີ້ ເທວີຄົນງາມ
ອ້າຍຕ່ຳທັງສັກ ສັບສິນເງິນຄຳ
ຕ້ອງທົນຣະກັມ ເໝືອນຄົນສິ້ນຫວັງ

ນ້ອງລືມລະຕິ ຄືນສຸກສັນ ສຸກສັນຄືນສຸກສັນ
ຕື້ນຂານຄືນນັ້ນ ແສງຈັນກະຈ່າງ ແສງຈັນແສງຈັນກະຈ່າງ
ອ້າຍກອດອ້າຍຈູບ ລູບໄລ່ນອນນາງ
ໃຜຄ່ຳຄອນຄາງ ບໍ່ລືມບໍ່ເລືອນສັນຍາ.

# ລໍອ້າຍກ່ອນ

ລໍອ້າຍກ່ອນ ເຖີດນະແກ້ວຕາ
ຢ່າດ່ວນອີວາ ດ່ວນຫາຊາຍອື່ນແນບຂ້າງ
ອ້າຍຍັງຮັກ ເທີດທູນນ້ອງນາງນິຈາງ
ບໍ່ເຄີຍຄິດຈະຫາທາງ ຕັດຮັກຈາກນ້ອງແກ້ວໃຈ

ລໍອ້າຍກ່ອນ ເຖີດນະນ້ອງນາງ
ອ້າຍໝົດຫົນທາງ ຈະຫາຄ່າດອງນ້ອງໄດ້
ຈຶ່ງຫ່າງເຫີນ ເພື່ອຫາເງິນສ້າງຖານະໃໝ່
ເພື່ອທາງຮັກເຮົາສົດໃສ ອ້າຍຈໍາຕ້ອງຈາກນ້ອງໄປ

ນ້ອງຢ່າໄປຄິດ ວ່າອ້າຍນີ້ຫາທາງໜີໜ້າ
ສີ່ຫ້ອງອຸຣາ ຍັງປຣາຖນາແກ້ວໃຈ
ແຕ່ນີ້ອ້າຍຈົນ ຈຶ່ງຕ້ອງຫົນໜີນອນນ້ອງໄປ
ຖ້າຝືນເຝົ້າກັນຕໍ່ໄປ ຮັກເຮົາຈະຕ້ອງສລາຍ

ລໍອ້າຍກ່ອນ ເຖີດນະເທວີ
ເມື່ອໃດອ້າຍມີ ຈະຫວນຄືນມາຮັກໃໝ່
ສ້າງເຮືອນຫໍ ລໍວີວາສຸກສົມດັ່ງໝາຍ
ເຮົາຄົງສົດຊື່ນແຈ່ມໃສ ຮັກກັນຊົ່ວນິຣັນເອີຍ.

# ອຳນາດຮັກ

ຍາມຮັກກັນ ຂົມຂື່ນ ນ້ອງກໍວ່າຫວານ
ຍາມຮັກກັນ ຄວາມທຸກ ນ້ອງກໍລືມສິ້ນ
ເຂົ້າຂາດແລງ ແກງຂາດໝໍ້ ນ້ອງບໍ່ຖວິນ
ຜັກຫຍ້ານ້ອງກໍຈະກິນ ຈອນດອຍນ້ອງກໍຈະຢູ່ ຫາກມີອ້າຍຢູ່ແຫ່ງນັ້ນ

ຍາມຮັກກັນ ແສນຮັກ ປານຈະກືນກິນ
ເຖິງແຜ່ນດິນ ນະທີ ຈະຂວາງກີດກັ້ນ
ອຸປສັກ ຈະມີ ເປັນຮ້ອຍເປັນພັນ
ຜູ້ໃຫຍ່ຈະຄອຍທັກທັນ ນ້ອງຈະບໍ່ຂໍເປັນອື່ນ ສິ່ງດຽວຄືຈະທົນເອົາ

ອຳນາດແຫ່ງຄວາມຮັກ ໜັກເກີນແຜ່ນດິນແຜ່ນຟ້າ
ແມ່ນ້ຳຜືນພຣະສຸທາ ວ່າເລີກບໍ່ເຖິງໃຈນາງ
ພູຜາຫີນແຜ່ນລ້ານ ໜັກລ້ຳປຽບໃສ່ຍັງເບົາ
ຢູ່ໃກຮ່ອນຫ້ອຍພູເຂົາ ແຮງຮັກຍັງສິ່ງເຖິງຢູ່ ເພາະຮັກນັ້ນບໍ່ຈືດຈາງ

ຍາມຮັກກັນ ນະຮົກ ກໍເປັນສວັນ
ຍາມຊັງກັນ ສວັນ ກໍເລີຍອ້າງວ້າງ
ຄວາມຫວານມັນ ກໍກາຍ ເປັນຈືດເປັນຈາງ
ຄວາມຮັກກັບເປັນບາດໝາງ ເອົາແມ່ບໍ່ໄດ້ດອກຮັກ.

# ຂອງກິນບໍ່ກິນມັນເບົ່າ

ຂອງກິນ ບໍ່ກິນມັນເບົ່າ
ຂອງເກົ່າ ບໍ່ເລົ່າເລົ່າມັນລືມ
ເບິ່ງເຫັນຟ້າ ອື່ນຄື້ນ
ຮັກເກົ່າບໍ່ລືມ ຍັງບໍ່ລືມບໍ່ລືມ

ໂອ ນ້ອງເອີຍ
ບຸນສອງເຮົາເຄີຍ ຮ່ວມກິນຮ່ວມທານ
ຈາກໄປຢູ່ໄກນິ່ງຂວັນ ອ້າຍຍັງຊື່ຕຮົງຄົງໝັ້ນ
ນອນຝັນນັ່ງຝັນ ແທ້ລະເນີແທ້ລະເນີ

ໂອ ນ້ອງສາວ
ຢ່າຫຼົງຄົນເອົ້າ ກ່າວສິນນິນທາ
ຈາກໄປແຕ່ກາຍດອກໜາ ຮອດໃສອ້າຍຍັງຄືນມາ
ໃຈຮ້ອງໄຫ້ຫາ ອ້ອນວອນອ້ອນວອນ

ໂອ ນ້ອງເອີຍ
ຮັກເຮົານັ້ນເລີຍ ຫວານມັນເຕັມທີ່
ຈາກໄປບໍ່ທັນເຖິງປີ ນີ້ນັ້ນບໍ່ຄືນີ້ນີ້
ຍາມໜາວຍາມນີ້ ມາຄືນດີກັນເຖີດເອີຍ.

# ຫມົດເດືອນຫມົດເງິນ

ໝົດເດືອນ ກໍໝົດເງິນ
ອຸກໃຈເຫຼືອເກີນ ຫາເງິນກະບໍ່ມີ
ເບີກເງິນມາຍາມໃດ ບໍ່ພໍກິນພໍໃຊ້ອຸ້ນອາຍເຈົ້າໜີ້
ເຂົ້າຂອງເປັນເງິນຕົວະ ເຈັບໃຈເຈັບຫົວສອນຄືອກະບໍ່ມີ

*ໂອຍ ຈັ່ງແມ່ນມັນທຸກ ເຮືອນກໍເຊົ່າເຂົ້າກໍຊື້*
*ມື້ພັກ ກະເລີຍບໍ່ມີສອນຄືອຊິເຮັດ*

ໝົດເດືອນ ກໍໝົດແຮງ
ອິດເຂົ້າສວາຍເຂົ້າແລງ ຂອງມັນແພງອີ່ຫຼີ
ຈະໄປໃສມາໃສ ຍ່າງເອົາຈິນເທື່ອໄຫຼບໍ່ໄດ້ຂີ່ຕັກຊີ
ງົດທ່ຽວງົດເຮຮາ ງົດເບີງົດບາງົດສຸຣານາຣີ

*ຄັກປານຫຼັງບາດນີ້ ຈະໄດ້ເຊົາຫຼາຍແນວຢູ່ດອກ*
*ສົມນໍ້າໜ້າ ທັງເພິ່ນທັງໂຕ*

ຜູ້ດີ ມີເງິນ
ຟຸ້ມເຟືອຍເຫຼືອເກີນ ໃຊ້ເງິນບໍ່ປຣານີ

ຕັ້ງອົງການພະນັນ    ສາມຄືນສາມວັນຫຼິ້ນກັນປິ່ນປີ້
ປະລູກເຕົ້າເຮືອນຊານ    ປະລ້າປະການມັນສາມານບັດສີ

*ເອົາລົງໄປບາດນີ້    ໄທໃຫຍ່ລົ້ມໄທນ້ອຍບໍ່ເຕັມ*
*ກັນເອີຍ    ເອນເອີຍ*

ພວກເຮົາ    ຄົນຈົນ
ຈຳຕ້ອງຍອມດິ້ນຮົນ    ຝືນໃຈທົນຢູ່ຢ່າງນີ້
ຢາກຖືກຫວຍຢາກລອຍເງິນ ຢາກຈະມີເງິນລ້ານຢາກຖືກລົດຕະຣີ
ເອົ້າຫຼາຍຢາກອາຍຄົນ    ໝົດຕົວໝົດຕົນສອງກີບກໍບໍ່ມີ

*ບ໋ະ ບຸນບໍ່ຄ້ຳນ້ຳບໍ່ຊູອີ່ຫຼີບໍ່ ? ຫາຈິຕາຍກໍຍັງບໍ່ກຸ້ມປາກ*

ຢາກຕາຍ    ຊະໃຫ້ພົ້ນ
ເກີດມາພົບຄວາມຈົນ    ມັນເຫຼືອທົນອີ່ຫຼີ
ຢູ່ໄປກໍອາຍເຂົາ    ຫາແລງກິນເຊົ້າຍັງແບ່ງເອົາໃຊ້ໜີ້
ເຂົ້າໜຽວໆ ເຢັນໆ    ຈ້ຳປາແດກເໝັນໆກັບຕົ້ນເອັນແຊບອີ່ຫຼີ

*ຫຼົບເຈົ້າໜີ້    ຍັງບໍ່ພໍ*
*ອົດມື້ກິນມື້    ປາແດກກໍເຫຼືອຕ່ອນດຽວນີ້ ຣື !!!*
*ຄັກບໍ່ ໄດ້ລົງລາຍ    ກິນປາແດກກັບຕົ້ນເອັນ.*

# ບໍ່ຢາກມີເມັຍ

ບໍ່ຢາກມີນໍ ຄຳວ່າສຣະເອັຍ
ບໍ່ຢາກມີເມັຍ ມາເປັນເຈົ້າຫົວໃຈ
ງາມດັ່ງນາງຟ້າ ລູກເສດຖີລອຍໃຫຍ່
ບໍ່ຂໍສົນໃຈ ຍ້ອນບໍ່ຢາກມີເມັຍ

ຂ້ອຍຢູ່ຄົນດຽວ ນີ້ສຸກໃຈເສັຍຈິງ
ເວົ້າເຣື່ອງຜູ້ຍິງ ພາໃຈຂ້ອຍອ່ອນເພັຍ
ໃຜຢາກມີທຸກ ອຸກເອົ້າຈົ່ງເອົາເມັຍ
ໄປຫຼິ້ນໄພ້ເສັຍ ຣະວັງເມັຍຊິບິດຫູ

ມີເມັຍນີ້ ແສນລຳບາກ
ຍາມທຸກຍາມຍາກ ດ່າມຶງໆກູໆ
ຫາກມີເມັຍນ້ອຍ ສຽງປ້ອຍກ້ອງຫູ
ຄິດແລ້ວຄິດດູ ຢູ່ຜູ້ດຽວສະບາຍ

ຂ້ອຍຢາກມີງໍ ຄຳວ່າສຣະເອີນ
ຂ້ອຍຢາກມີເງິນ ຢ່າງເຫຼືອລົ້ນມາກມາຍ
ບໍ່ຢາກມີເມັຍ ມາຮ່ວມໝອນດຽງກາຍ
ຢາກຢູ່ດຽວດາຍ ຄົງສຸກສະບາຍຈິງເອີຍ.

# ໂອ່ງໂຕ່ງ

ໂອ່ງໂຕ່ງ          ແທ້ນໍ ນ້ອງສາວ
ຜິວຂາວ          ເໝືອນດັ່ງຍອງຝ້າຍ
ເບິ່ງດົນໆ          ແລ້ວຍິ່ງງາມຫຼາຍ
ຍ່າງຍ້າຍ          ປານຫົງເດີນດິນ

ໂອ່ງໂຕ່ງ          ແທ້ນໍ ແກ້ມນ້ອງ
ຢາກຈອງ          ໄອ້ດົມຊົມກິ່ນ
ເນດງາມຂຳ          ໃສດຳປານນິນ
ແມ່ຍຸພິນ          ງາມສິ້ນເກີນຄົນ

ເກີດອັນຫຍັງໜໍ          ກິນເຂົ້າກັບຫຍັງ
ເປັ່ງປັ່ງ          ແທ້ໜໍໜ້າມົນ
ເປັນລູກຫຼ້າ          ຫຼືວ່າລູກໂທນ
ນິຈົນ          ຫຼືຄົນທັມມະດາ

ໂອ່ງໂຕ່ງ          ແທ້ນໍ ຍອດຍິງ
ໄດ້ພັກພິງ          ແລ້ວຕາຍກໍຢ່າ
ໄປຣດເອັນດູ          ອ້າຍແດ່ນາງຟ້າ
ແມ່ຂວັນຕາ          ນ້ອງຢ່າທຳເມີນ.

# ອໍ່າພໍ່າ

ອໍ່າພໍ່າ ແທ້ໜໍ້ອ້າຍເອີຍ
ບໍ່ເຄີຍ ເຫັນກັນມາກ່ອນ
ເບິ່ງດົນໆ ຫົວໃຈອາວອນ
ພະເນຈອນ ດັ້ນດົ້ນແດນໃດ ?

ອໍ່າພໍ່າ ແທ້ໜໍ້ອ້າຍໜໍ
ນັ່ງລໍ ຄອຍຖ້າຜູ້ໃດ ?
ຖ້າຜູ້ຍິງ ຫຼືຖ້າຜູ້ຊາຍ ?
ຂໍສາຍໃຈ ຈົ່ງໄດ້ເອີ່ຍຈາ

ຊື່ຈັ່ງໃດໜໍ ອ້າຍຢູ່ບ້ານໃດ ?
ໂພນໄຊ ຫຼືອ້າຍຢູ່ເມືອງອາ ?
ມີພໍ່ແມ່ ຫຼືລູກກໍ່າພ້າ ?
ໜ້າຕາ ທ່າທາງເຈົ້າຊູ້

ອໍ່າພໍ່າ ແທ້ໜໍ້ຍອດຊາຍ
ຢາກໄດ້ ໄວ້ຮຽງຄຽງຄູ່
ຫາກແມ່ນ ບຸນຄໍາຈູນໜູນຊູ
ຈົ່ງຮັບຮູ້ ນ້ອງແດ່ຄືນດີ.

# ຂັນຫມາກມາແລ້ວ

ແມ່ເຖົ້າເອີຍ ລູກເຂີຍມາແລ້ວ
ແມ່ເຖົ້າແກ້ວ ຊ່ອຍເປີດປະຕູໃຫ້ແດ່
ມື້ສັນອັນດີ ເພື່ອນຝູງແລະເຖົ້າແກ່
ພ້ອມພາກັນແຫ່ ລູກເຂີຍແມ່ເຖົ້າມາ

ເຈົ້າສາວ ຄອງຄອຍ
ຫົວໃຈເລື່ອນລອຍ ເຝົ້າຄອຍອີວາ
ໂອລະໜໍ ເປີດປະຕູຄອງຖ້າ (ຊ້ຳ)
ຕຽມເຂົ້າອີວາ ສົມປາຖນາດັ່ງໃຈ

ຄ່າດອງ ເຈົ້າແພງ
ເງິນບໍ່ພໍແຕ່ງ ນ້ອງຢ່າເສັຽໃຈ
ໄດ້ກັນແລ້ວ ຈະຫາມາແທນໃຫ້ (ຊ້ຳ)
ຫາກບໍ່ພໍເທົ່າໃດ ແມ່ເຖົ້າອອກໃຫ້ກ່ອນເດີ

ເຈົ້າບ່າວ ແຕ່ງກາຍ
ໃສ່ຜ້າສີພັຍ ນຸ່ງຜ້າໄໝບ່ຽງແພ
ເຈົ້າສາວອັນນີ້ ໃສ່ຊຸດສີໃດແດ່ ? (ຊ້ຳ)
ໂອນາສົມກັນແທ້ ສົມກັນແທ້ລະເນີ.

# ສບາຍດີຫຼວງພະບາງ

ໂອ ເມືອງຫຼວງພະບາງ ເຈົ້າຍັງສະບາຍດີບໍ່ ?
ຫຼາຍປີ ຈຶ່ງໄດ້ມາພໍ້ ດົນນານໜໍເຮົາຈຶ່ງໄດ້ພົບກັນ
ພໍ່ແມ່ ພີ່ປ້ານ້າອາ ເຮົາເດ່ມາຢູ່ກະເສີມສໍາຣານ
ປູ່ເຍີຍ່າເຍີ ນິ່ງໝົ້ນ ສາຍນໍ້າຄານສະບາຍສະບາຍບໍ່ໜາ

ໂອ ຊຽງທອງລ້ານຊ້າງ ຝັງໃຈຊາວລາວທັງຊາດ
ເຈົ້າຢືນ ສງ່າອົງອາດ ໃຫ້ດັ່ງຊາດມີຊີວິດຊື່ອາ
ທ້ອນໂຮມ ເຊື້ອເຜົ່າພົງພັນ ຮັກແພງກັນເທິງແຜ່ນດິນຈໍາປາ
ຄອຍຢູ່ດີ ເຖີດໜາ ຄູ່ດິນຟ້າຄູ່ຊະລາໄລ

ສຸກໃຈເຫຼືອ ເມື່ອສັນຕິພາບ ຕ່າວຄືນມາ
ສຸດພະສຸທາແຜ່ນດິນ ແມ່ນເກີນວ່າຜ່ອງໃສ
ບັດນີ້ແລ້ວ ຊຽງທອງເຮົາ ຈະຮຸ່ງວິໄລ
ຈົ່ງຢູ່ດີ ມີຊັຍ ສະບາຍດີເດີຫຼວງພະບາງ

ຫຼວງ ພະບາງໝັ້ນຄົງ ເຈົ້າຈົ່ງເຂັ້ມແຂງແຮງກ້າ
ເຫຼືອແຮງ ດວງສຸຣິຍາ ປອງປະຊາຈະເປັນສຸກສົມຫວັງ
ແຮງກາຍ ແຮງໃຈອາຈາ ຫຼັ່ງໄຫຼມາຢ່າລາໄລໄກຫ່າງ
ປະເທດລາວລ້ານຊ້າງ ຈົ່ງໃສແຈ້ງຮຸ່ງເຮືອງກ້າວເດີນ.

# ດວງຈຳປາ

ໂອດວງຈຳປາ ເວລາຊົມນ້ອງ ນຶກເຫັນພັນຊ່ອງ
ນອງເຫັນຫົວໃຈ ເຮົານຶກຂຶ້ນໄດ້ ໄກ້ກິ່ນເຈົ້າຫອມ
ເຫັນສວນດອກໄມ້ ບິດາປູກໄວ້ ຕັ້ງແຕ່ນານມາ
ເວລາງ່ອມເຫງົາ ເຈົ້າຊ່ອຍບັນເທົາ ເຮົາຫາຍໂສກາ
ເຈົ້າດວງຈຳປາ ຄູ່ຄຽງເຮົາມາ ແຕ່ຍາມນ້ອຍເອີຍ

ກິ່ນເຈົ້າສຳຄັນ ຕິດພັນຫົວໃຈ ເປັນໜ້າຮັກໄຄ່
ແພງໄວ້ເຊີຍຊົມ ຍາມເຫງົາເຮົາດົມ ໂອຈຳປາຫອມ
ເມື່ອໄດ້ກິ່ນເຈົ້າ ປານພົບຊູ້ເກົ່າ ທີ່ພາກຈາກໄປ
ເຈົ້າເປັນດອກໄມ້ ທີ່ງາມວິລັຍ ຕັ້ງແຕ່ໃດມາ
ເຈົ້າດວງຈຳປາ ມາລາຂວັນຮັກ ຂອງຮຽມນີ້ເອີຍ.

# ດອກບົວທອງ

ໂອ ດອກບົວທອງ
ບານໃນໜອງ ນ້ຳໃສ
ເກີດຫົວໃບ ໃນຕົມ
ແກມສນົມ ຕົ້ນຫຍ້າ
ແຕ່ເປັນດວງ ບຸຜາ
ສີສງ່າ ໜ້າດູ
ຍານເມື່ອ ເຊົ້າຕຣູ່
ໝູ່ແມງ ສແອງຕອມ
ຫວັງຊົມ ດວງຫອມ
ອົກຣະບົມ ຣະບອມ

ບົວທອງ ຂອງໃຜ ?
ຖ້າໄດ້ເປັນ ເຈົ້າຂອງ
ຈະປະຄັບ ປະຄອງ
ໃຫ້ບົວທອງ ງາມຊື່ນ
ຍິ່ງກວ່າໂລດ ອື່ນໆ
ໃນພື້ນໂລກ ເຮົານີ້
ຕາບພຽງ ຊີວີ
ປະດຸດ ດວງຕາເຮົາ
ໂອ ເຈົ້າບົວຫຼວງ
ດວງນາຣາ ໜ້າຊົມ.

# ສວັດດີນ້ອງສາວ

| | |
|---|---|
| ສວັດດີ | ນ້ອງສາວ |
| ເນື້ອນ້ອງງາມ | ຜ່ອງພັນ |
| ດັ່ງສວັນ | ລົງມາແຕ່ງ |
| ແສງຕາຫວານ | ຫວ່ານໄປ |
| ແສງຕາຫວານ | ຫວ່ານມາ |
| ພາໃຫ້ອ້າຍ | ຝັນລະເມີ |
| ເຊີນນ້ອງສາວ | ເຂົ້າມາ (ຊ້ຳ) |
| ຈົ່ງ | ຢ່າໄດ້ລະອາຍ |
| ຈົ່ງ | ຢ່າໄດ້ແໜງໜ່າຍ |
| ເຊີນເຂົ້າມາລຳວົງ | ໃຫ້ນ່ອນຊື່ນອຸຣາ |
| | |
| ຍາມນ້ອງມາ | ຟ້ອນລຳ |
| ງາມແສນງາມ | ໜັກໜາ |
| ດັ່ງຈາກຟ້າ | ມາລຳວົງ |
| ຄົງ | ບໍ່ມີເຈົ້າຂອງ |
| ທີ່ໝາຍປອງ | ເຝົ້າຫວງ |
| ຢູ່ກາງຊອງ | ດວງຣືທັຍ |
| ເຊີນນ້ອງສາວ | ເຂົ້າມາ (ຊ້ຳ) |
| ຈົ່ງ | ຢ່າໄດ້ຣະອາຍ |
| ຈົ່ງ | ຢ່າໄດ້ແໜງໜ່າຍ |
| ເພື່ອຜ່ອນຄາຍຫາຍເສົ້າ | ໃຫ້ເຮົາຊື່ນອຸຣາ. |

# ສາຍລົມເປັນ

ເມື່ອລົມໜາວພັດພາ ລົມໜາວຣະບົມ
ບອກຣະທົມ ຂົມຂື່ນ
ຮັກນັ້ນປານຈະກືນ ຮັກນັ້ນບໍ່ຍັ້ງ ຮັກນັ້ນບໍ່ຍືນ
ຮັກເຄີຍຊື່ນ ຄວາມຊ້ຳ
ລົມໜາວມາເຕືອນ ມັນຊັບມັນເຊືອນ
ມາເຕືອນໃຫ້ຄິດ ເຖິງຄຳ

ຜ່ານມາທຸກຄັ້ງ ຜ່ານມາທຸກຄາວ
ສາຍລົມໜາວ ພັດມາ
ເປັນກາຍຊື່ນອຸຣາ ເປັນຍັບເປັນເຍື້ອນ ເປັນເສືອນເປັນຍາວ
ເປັນກາຍາ ຂອງເຮົາ
ທັມມະຊາດ ສາຍລົມຫວິວ
ມັນພັດມັນຕີ ມັນອີໃຫ້ຊ້ຳ ສົມໃຈ

ຜ່ານມາຫຼາຍຄັ້ງ ຜ່ານມາຫຼາຍຄາວ
ສາຍລົມໜາວ ພັດມາ
ແສນຊື່ນໃນອາຣົມ ແສນຊື່ນຫົວໃຈ ສຸດແສນຮັກສົມ
ແສນຣະທົມ ພາຍໃນ
ໂອ ສາຍລົມເປັນ ເຄີຍຮັກເຄີຍເຫັນ
ເຄີຍຢູ່ເປັນຄູ່ ຄຽງກັນ.

# ໑
# ຣາຕຣີວຽນມາ

ຣາຕຣີ ວຽນມາ
ດາຣາ ສ່ອງແສງໃສງາມ
ຍາມເຢັນລົມໂຊຍ ໂບກໂບຍກາຍາ
ໂບກໂບຍກາຍາ ອຸຣາເພີດເພີນ

ຮຽນ ຂໍເຊີນ
ເຊີນທ່ານມາຟ້ອນ ມາລຳຄ່ຳຄືນສຸກສັນ
ນຳຄວາມສຳຣານ ເບີກບານອຸຣາ
ນຳຄວາມສຳຣານ ເບີກບານອຸຣາ

ຣາຕຣີ ສງົບ
ສິ່ງກິນຄາຣົມ ແລະບຸຜາຫອມ
ສອນພ້ອມ ນ້ອມນຳ
ນຳຄວາມບັນເທີງ ລ້ຳເລີງອົມຍາ (ຊ້ຳ)

# ຈັນສຸຣີ

ໂອດວງ ສຸຣິຍາ
ສ່ອງນະພາ ແຈ່ມໃສ
ແຫງນງອກ ເບິ່ງໄປ
ພາຫົວໃຈ ໃຫ້ສຸກສັນ

ໂອດວງ ຈັນທຣາ
ເປັ່ງບິນຟ້າ ສວັນ
ສູງກວ່າ ເກີນຝັນ
ໃຫ້ຫາຈັນ ມາໂອ້ຄອງ

ຍາມໃດ ຟ້າແຈ່ມສີ
ໂອສຸຣີ ສິ່ງແສງສ່ອງ
ຍາມໃດ ນະພາໝອງ
ເດືອນຍັງສ່ອງ ແສງລັບລອຍ

ໂອດວງ ຈັນສຸຣີ
ແຜ່ໄມຕຣີ ຈັກນ້ອຍ
ຂໍຢ່າ ເລື່ອນລອຍ
ປ່ອຍຫົວໃຈ ໃຫ້ໝອງເສົ້າ.

# ອ້າຍຢູ່ຫົນໃດ ?

ອ້າຍຢູ່ຫົນໃດ ສຸດທີ່ຮັກ
ທີ່ຮັກ ນ້ອງວ້າເຫວ່ໃຈ
ເຄີຍຮັກເຄີຍປະຄອງ ຢອກລໍ້ກັນຊື່ນໃຈ
ບັດນີ້ອ້າຍຢູ່ໃສ ? ຢູ່ໃສຈຶ່ງບໍ່ມາ

ອ້າຍລືມນ້ຳຄຳ ວ່າຮັກແລ້ວ
ລືມໝົດແລ້ວ ຫຼືຖ້ອຍສັດຈາ
ເຄີຍລັ່ນໄວ້ກັບໃຜ ? ຈະຮັກຈົນຊົ່ວຟ້າ
ລືມແລ້ວຫຼືສັນຍາ ສັນຍາວ່າຈະຮັກດຽວ

ເສັຽແຮງ ນ້ອງຫຼົງເຊື່ອຄຳ
ຈຶ່ງເຈັບຈຶ່ງຊ້ຳ ໃຈຜູ້ດຽວ
ຫົວໃຈແຮງນ້ອງ ຕ້ອງເປົ່າປ່ຽວ
ຣະທົມທຸກຕຣົມຄົນດຽວ ບໍ່ມີໃຜເຊັດນ້ຳຕາ

ອ້າຍຢູ່ຫົນໃດ ສຸດທີ່ຮັກ ?
ທີ່ຮັກ ນ້ອງຮ້ອງຮຽກຫາ
ຟັງແລ້ວຈຶ່ງຮັບຮູ້ ວ່ານ້ອງເສົ້າໂສກາ
ສຸດແສນທໍຣະມາ ເທົ່າໃດເທົ່າໃດອ້າຍເອີຍ.

# ດອນໂຂງ

ດອນໂຂງ    ເປັນດອນທີ່ມີທຸກຢ່າງ
ເຖິງລອຍຢູ່ກາງ    ຫວ່າງກະແສແມ່ຂອງສອງຝັ່ງ
ດອນໂຂງເຈົ້າເອີຍ    ເຈົ້າບໍ່ເຄີຍຮັບຄວາມໂສກສັນ
ຈຶ່ງຖືກປະດິດສະຖານ    ພັທນາການໃຫ້ເປັນແຂວງໃຕ້

ດອນໂຂງ    ຊາວເມືອງທີ່ອາສັຍຢູ່
ຫາທາງອູ້ມຊູ    ຢ່າງແໜ້ນໜາສ້າງຊີວິດໃໝ່
ດອນໂຂງຊ່າງສົມ    ຕ່າງອຸດົມສົມບຸນເລື້ອຍໄປ
ສາລາທີ່ໜ້າອາສັຍ    ສ້າງເພື່ອຢ່ອນໃຈຂອງຄົນກວ່າແສນ

ພີ່ນ້ອງດອນໂຂງ    ສູງສົ່ງດ້ານອັທນະທັມ
ຮີດຄອງຂອງເມືອງຈົດຈຳເຖິງຍາມຕ່າງສຸກໃຈແສນ
ໂອດ ໂອ້ ໂອຍລຳ    ສີພັນດອນຢ້ອນໃສ່ສຽງແຄນ
ນ້ຳໃຈຮັກກັນໜັ້ນແກ່ນ    ເຈົ້າຊ່າງເປັນແດນສຸກຂີ

ດອນໂຂງ    ເປັນດອນທີ່ຄົງທຸກຢ່າງ
ວັດວາກໍຍັງ    ຕັ້ງຄູ່ເມືອງຮຸ່ງເຮືອງຫຼາຍທີ່
ດອນໂຂງເຈົ້າເອີຍ    ສຸດປຽບເປີຍຫາດອນອື່ນມີ
ສວຍງາມເລີດກວ່າເຈົ້ານີ້ ສົມແລ້ວສຸກສີສົມດອນແຫ່ງລາວ.

# ເຊກອງ

ທີ່ຝັ່ງເຊກອງ ສອງເຮົາຮ່ວມໃຈ
ແສນຊື່ນສົດໃສ ສອງເຮົາສຸກສັນ
ຕ່າງຝາກຄວາມຫວັງ ດ້ວຍໃຈຜູກພັນ
ຝັ່ງເຊ ຄືນນັ້ນ ຍັງເປັນສັກຂີ

ທີ່ຝັ່ງເຊກອງ ນ້ອງຍັງນັ່ງຄອຍ
ຫົວໃຈເລື່ອນລອຍ ນ້ອຍໃຈເຕັ້ນຫີ
ນ້ອງສຸດຫ່ວງຫາຍ ຍາມອ້າຍຫ່າງໜີ
ຈົ່ງມີໂຊກດີ ຍາມປາບນອນນານ

ສົງຄາມປະສົດ ແຄ້ນອັຕປີ
ນີ້ຫຼື ທີ່ໃຫ້ເຮົາຕ້ອງຫ່າງກັນ
ອ້າຍໄປ ເພື່ອໄປປາບໄພ່ພວງມານ
ຫວັງອີກບໍ່ນານ ອ້າຍຄົງໄດ້ກັບຄືນມາ

ທີ່ຝັ່ງຍັງມີ ນ້ອງນີ້ຜູ້ດຽວ
ທຸກຄືນນັ່ງຫຼຽວ ເນີນອງຫ້ອງຟ້າ
ປາບໝູ່ມານສູນ ນ້ອຍນອດເຖິດໜາ
ແລ້ວມາຮ່ວມສອງ ເຊກອງແຫ່ງນີ້.

# ຂັບທຸ້ມຫຼວງພະບາງ.໑

ແກ້ມປອຍລອຍ ຊູ້ເພີ່ນຄອຍ ຜູ້ໃດມາເດ່ ເຍີກເຂົ້າໄປ
ຟັງສຽງຈາ ຜູ້ອ້າຍມີປີກ ມີເມັຽແລ້ວ ຕາຕີໂຢນເປັງ
ຊ່າງຖແລງ ແປງຄວາມງາມມານັກນ້ອງ ເຍີກເຂົ້າໄປ
ມາຮັກນ້ອງ ຄືຊິໄດ້ ແມ່ນງ່າຍດາຍ

ລ້ອຍຊ້ອຍ ຂໍເປັນນ້ອຍ ອ້າຍໄດ້ບໍ່ ? ໄດ້ແທ້ໄດ້ອ່າ
ໂອນາລ້ອຍຊ້ອຍ ຂໍເປັນນ້ອຍ ອ້າຍໄດ້ບໍ່ ? ໄດ້ແທ້ໄດ້ອ່າ
ໂອມັກຫຼາຍໜໍ ໃຫ້ອ້າຍມາຂໍ ຂໍກັນແລ້ວ ຕາຕີໂຢນເປັງ

ເຈົ້າດອກເອີງເອີຍ ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ ເອີເອີ ເອີງເອີຍ
ໂອ ເຈົ້າດອກຍໍາໄຍ ຖ້າອ້າຍເປັນກົກ ນ້ອງຂໍເປັນໃບ
ເຈົ້າດອກຍໍາໄຍ ຄືນງາມເອີຍ
ເອີເອີຍ ເອີເອີຍ ເຈົ້າແກ້ມ
ເຈົ້າແກ້ມ ມານີ້ອ່ອນໆ
ນ້ອງນີ້ຜ່າຍເມືອຊອນ ຫາບ່ອນຊິນອນ ນໍາອ້າຍ. ຕາຕີໂຢນເປັງ

# ຂັບທຸ້ມຫຼວງພະບາງ.໔

ແກ້ນປອຍລອຍ ທອຍໄຕ່ ເຈົ້າຄັນມາເອີຍ ເຍີກເຂົ້າໄປ
ເຮັດຈັ່ງໃດນໍ ? ຈຶ່ງຊິສິນ ພະອອນອ້າຍ ຕາຕີໂຢນເປັງ
ນ້ອງນີ້ໜາ ຕາດຳເອີຍ ເປັນຄົນຂີ້ຮ້າຍ ເຍີກເຂົ້າໄປ
ນ້ອງເປັນຄົນຂີ້ຮ້າຍ ຂ້າງອ້າຍ ຊິບໍ່ສົນ

ອຸກເດ່ ອຸກໃຈເດ່ ນ້ອງນີ້ມັນຈົນ ຈົນແທ້ຈົນອ່າ
ໂອນາ ອຸກໃຈເດ່ ຢ້ານບໍ່ເທ່ ບຸນນ້ອງບໍ່ສົນ ສົນແທ້ສົນອ່າ
ເຈົ້າຜູ້ຄິງກິນໆ ຢ້ານນ້ອງບໍ່ສົນພະອອນອ້າຍ ຕາຕີໂຢນເປັງ

ເຈົ້າດອກເອີງເອີຍ ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ ເອີເອີ ເອີງເອີຍ
ໂອ ເຈົ້າດອກຈຳປາ ນ້ອງມາພົບແພງຂອັນຕາ
ອາສນາ ຊິມີບໍ່ ?
ເອີເອີຍ ເອີເອີຍ ເຈົ້າແກ້ນ
ເຈົ້າແກ້ນ ນະມີປ່າຍລ່າຍ
ນ້ອງມີບຸນຫຼາຍ ໄດ້ມາພົບຊາຍໃນອັນນີ້. ຕາຕີໂຢນເປັງ

# ຊ້ບຫຸ້ມຫຼວງພະບາງ.໓

| | | | |
|---|---|---|---|
| ເຈົ້າຜູ້ | ແກ້ນອຳພ່ຳ | ທາງຕາ | ອ້າຍດຳເອີຍ ເຍີກເຂົ້າໄປ |
| | ຫາກໄດ້ອ້າຍເປັນເຂີຍ | ແມ່ພະນາງ | ດີໃຈລື້ນ ຕາຕີໂຢນເປັງ |
| | ນ້ອງນີ້ໜາ | ເປັນສາວນາ | ບໍ່ມີແຟນຊ້ອນ ເຍີກເຂົ້າໄປ |
| | ບໍ່ມີແຟນຊ້ອນ | ນອນແລ້ງ | ຢູ່ຜູ້ດຽວ |

| | | |
|---|---|---|
| ນາຍາກ | ນາລຳບາກ | ແຕ່ນ້ອງນີ້ເດ່ |
| ໂອຍນາຍາກ | ນາລຳບາກ | ແຕ່ນ້ອງແທ້ເດ່ |
| ໂອນາເຫຼືອໃຈເດ່ | ບໍ່ມີໃຜ | ນາຈາເອົ້າ ຕາຕີໂຢນເປັງ |

| | |
|---|---|
| ເຈົ້າດອກເອີງເອີຍ | ຜູ້ສາວຂີ້ໄຫ້ |
| ເຈົ້າດອກໆເອີຍ ເອີເອີຍ | ເອີເອີ ເອີງເອີຍ |
| ໂອ ເຈົ້າດອກຍຳໄຍ | ຖ້າອ້າຍບໍ່ແມ່ນ ແຟນໃຜ |
| ກໍຢ່າລືມໄລ | ລືມນ້ອງ |

| | |
|---|---|
| ເອີເອີຍ ເອີເອີຍ | ເຈົ້າແກ້ນ |
| ເຈົ້າແກ້ນ | ນານີ້ປາອ່າ |
| ຖ້າອ້າຍຢາກຮ່ວມອືອາ | ໃຫ້ພໍ່ແມ່ມາສູ່ຂໍນ້ອງ. ຕາຕີໂຢນເປັງ |

# ຊັບທຸ້ມຫຼວງພະບາງ.໔

ໂອອ່າ ແກ້ນໃໝ່ໆ     ສາວໄທເມືອງ ເຮົານີ້ມາ ເຍີກເຂົ້າໄປ
ອ້າຍນີ້ຂັນອາສາ     ເປັນຜູ້ຄຽງ  ນີ້ຮຽງຊ້ອນ ຕາຕີໂຢນເປັງ
ອ້າຍນີ້ມາ     ມັກນ້ອງມາ  ກໍໝາຍມາຊ້ອນ ເຍີກເຂົ້າໄປ
ອ້າຍນີ້ ໝາຍມາຊ້ອນ     ນອນລ່ອນ  ຮ່ອນພະນາງ

ຍຸ້ງຍາກ     ລຳບາກ     ອ້າຍກໍຜ່ານຜ່າ ໄດ້ແທ້ໄດ້ອ່າ
ແຕ່ຂວັນຕານ້ອງແກ້ວ     ບໍ່ໄດ້ໄກ     ຢ່າຫ່າງໜີ ໄດ້ແທ້ໄດ້ອ່າ
ອ້າຍຍົກຍ້ອງໂສພີ     ສາວພູສີ     ຄົນງາມເອີຍ ຕາຕີໂຢນເປັງ

ເຈົ້າດອກເອີງເອີຍ     ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ     ເອີເອີ ເອີງເອີຍ
ໂອ ເຈົ້າດອກໝາກນາວ     ອ້າຍເປັນບ່າວ ພູອ່າວ
ໄດ້ຫຼົງຮັກສາວ     ພູສີແລ້ວ

ເອີເອີຍ ເອີເອີຍ     ເຈົ້າແກ້ນ
ເຈົ້າແກ້ນ     ມານີ້ໃໝ່ໆ
ອ້າຍບໍ່ແນ່ນບ່າວບ້ານໄກ     ນ້ອງຢ່າໄລລືມອ້າຍ. ຕາຕີໂຢນເປັງ

# ຂັບທຸ້ມຫຼວງພະບາງ.໕

ໂອວ່າ ແກ້ນປີວີ່ ສາວພູສີ ຜູ້ງາມເອີຍ ເຍີກເຂົ້າໄປ
ອ້າຍຢາກມາ ເປັນເຂີຍນ້ອງພະນາງຊິເອົາບໍ່ ຕາຕີໂຢນເປັງ
ອ້າຍນີ້ມາ ມັກນ້ອງນາ ແຕ່ດົນນານແລ້ວ ເຍີກເຂົ້າໄປ
ແຕ່ດົນນານແລ້ວ ແມອ້າຍ ຢາກຮ່ອນຮຽງ

ມາຍາກ ມາລຳບາກ ໃຈອ້າຍນີ້ເດ່ ໄດ້ແທ້ໄດ້ອ່າ
ໂອວ່າມາຍາກ ມາລຳບາກ ໃຈອ້າຍແທ້ເດ່ ໄດ້ແທ້ໄດ້ອ່າ
ອີກຊິເພພັງເອີຍ ຖ້າບໍ່ໄດ້ນາງ ມານອນຊ້ອນ ຕາຕີໂຢນເປັງ

ເຈົ້າດອກເອີງເອີຍ ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ ເອີເອີ ເອີງເອີຍ
ໂອ ເຈົ້າດອກໝາກໄຟ ອ້າຍນີ້ບໍ່ແມ່ນບ່າວທາງໄກ
ເປັນບ່າວໄທເມືອງ ນີ້ແລ້ວ

ເອີເອີຍ ເອີເອີຍ ເຈົ້າແກ້ນ
ເຈົ້າແກ້ນ ມານີ້ປີວີ່
ອ້າຍມາເຫັນນ້ອງຄົນດີ ເຫັນສາວພູສີ ຄົນງາມເອີຍ. ຕາຕີໂຢນເປັງ

# ຊ້ບທຸ້ມຫຼວງພະບາງ.ຝ

ເປີນເອີນ ຊູ້ເພິ່ນ ໃຫ້ເອີ່ນໄປສາ ເຍິກເຂົ້າໄປ
ຄັນບໍ່ແມ່ນຊູ້ໃຜ ຂໍໃຫ້ອ້າຍເອີ່ນມາທາງພີ້ ຕາຕີໂຢນເບັງ
ນ້ອງນີ້ນາ ຕາດຳໆ ເປັນຄົນຂີ້ຮ້າຍ ເຍິກເຂົ້າໄປ
ເປັນຄົນຂີ້ຮ້າຍ ບໍ່ສົນອ້າຍ ເພິ່ນບໍ່ສົນ

ອຸກເດ່ ໂອອຸກໃຈເດ່ ນ້ອງຄົນຈົນ ໄດ້ແທ້ໄດ້ອ່າ
ໂອນໍ ອຸກເດ່ ໂອອຸກໃຈເດ່ ນ້ອງຄົນຈົນ ໄດ້ແທ້ໄດ້ອ່າ
ໂອນາເຫຼືອໃຈເດ່ ນ້ອງບໍ່ໄດ້ອ້າຍ ນານອນຊຶມ ຕາຕີໂຢນເບັງ

ເຈົ້າດອກເອີ່ງເອີຍ ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ ເອີເອີ ເອີ່ງເອີຍ
ໂອ ເຈົ້າດອກມະນີລາ ນ້ອງຜູ້ຖອີນ ນັ່ງກີນນ້ຳຕາ
ນ້ອຍອາສນາ ຜູ້ບ່າວຄົນໂກ້

ເອີເອີຍ ເອີເອີຍ ເຈົ້າແກ້ມ
ເຈົ້າແກ້ມ ມະນີອຳພ່າ
ນ້ອງຄົນນ້ອຍຕົວດຳ ອ້າຍບ່າວງາມຂຳບໍ່ສົນໃຈ. ຕາຕີໂຢນເບັງ

# ຊົບທຸ້ມຫຼວງພະບາງ.ກ

ເປີນເອີ່ນ ຮັກເພີ່ນ ນ້ອງບຸນບໍ່ສົມ ເຍີກເຂົ້າໄປ
ບຸນນ້ອງບໍ່ສົມ ພີ່ຊາຍບໍ່ກີ້ນ ລົງມາໃຫ້ ຕາຕີໂຢນເປີງ
ອ້າຍເປັນຫົງ ລົງມາກາຍ ບິນໄປເອີ່ນໆ ເຍີກເຂົ້າໄປ
ຮ້ອງຮຽກເອີ້ນ ຕາຊ້າຍ ເພີ່ນບໍ່ຫຼຽວ

ອອນຊອນ ນ້ອງຂໍຮ່ອນໝອນເພີ່ນໄດ້ບໍ່ເດ່ ໄດ້ແທ້ໄດ້ອ່າ
ໂອວ່າ ອອນຊອນ ນ້ອງຂໍຮ່ອນໝອນເພີ່ນໄດ້ບໍ່ເດ່ ໄດ້ແທ້ໄດ້ອ່າ
ຖ້າໄດ້ຄຽງໃນບ່ອນ ສົມໃຈນ້ອງ ບຸເພເອີຍ ຕາຕີໂຢນເປີງ

ເຈົ້າດອກເອີງເອີຍ ຜູ້ສາວຂີ້ໄຫ້
ເຈົ້າດອກໆເອີຍ ເອີເອີຍ ເອີເອີ ເອີງເອີຍ
ໂອ ເຈົ້າດອກທອນກາຍ ຊາດນີ້ບໍ່ໄດ້ນີຊາຍ
ຊີໂດດນໍ້າຕາຍ ທີ່ຊາຍຫາດຕື້ນ

ເອີເອີຍ ເອີເອີຍ ເຈົ້າແກ້ນ
ເຈົ້າແກ້ນ ນະໂນໃນ
ນ້ອງນີ້ ຮັກອ້າຍປານໃດ
ກໍເສັ່ງພະທັຍ ນັ່ງກິນນໍ້າຕາ. ຕາຕີໂຢນເປີງ